ມຊ
ມະຫາວິທະຍາໄລແຫ່ງຊາດ

# ພາສາລາວ

ສຳລັບປີ 1

ມະຫາວິທະຍາໄລແຫ່ງຊາດ

ຄະນະອັກສອນສາດ

ພາກວິຊາ ພາສາລາວ-ສື່ສານມວນຊົນ

2013

# ພາສາລາວ

## ສໍາລັບ ປີ 1

**ຄະນະຮຽບຮຽງ**

ບົວລີ ປະພາພັນ

ບຸນມີ ກົງມະນີ

ບຸນເລີດ ແສງສຸລິນ

ມີໄຊ ສຸກຈະເລີນ

ໄຊຊະນະ ຈັນທະອຸດົມ

**ຄະນະກວດແກ້**

ຄະນາຈານໜ່ວຍພາສາສາດ ແລະພາສາລາວ

**ຈັດໜ້າ ແລະພິສູດອັກສອນ**

ບຸນເລີດ ແສງສຸລິນ

ພາກວິຊາ ພາສາລາວ-ສື່ສານມວນຊົນ

ຄະນະອັກສອນສາດ

ມະຫາວິທະຍາໄລແຫ່ງຊາດ

2013

# ສາລະບານ

## ພາກທີ I ຫລັກພາສາລາວ

## ບົດທີ 1 ໄຂຫົວເລື່ອງ(ອາລຳພະບົດ)


1. ພາສາ ແລະຄວາມສຳຄັນຂອງພາສາ.....1
2. ວິວັດທະນາການຂອງພາສາລາວ.....2
ກ. ໄລຍະທີ 1.....3
ຂ. ໄລຍະທີ 2.....4
ຄ. ໄລຍະທີ 3.....5


## ບົດທີ 2 ການປະກອບສ້າງສັບ ແລະການໃຊ້ສັບ


1. ວ່າດ້ວຍການສະກົດຄຳ.....7
1.1 ບັນຫາການຈັດວາງຕຳແໜ່ງຕົວອັກສອນໃນພະຍາງ.....7
1.2 ບັນຫາການໃຊ້ຄຳທີ່ເປັນສຽງເອກ.....8
1.3 ໂຕສະກົດ ກ ດ ບ ກັບການຜັນສຽງ ແລະການໃຊ້ວັນນະຍຸດ.....11
1.4 ການໃຊ້ສະຫລະ ໄx ແລະສະຫລະ ໃx.....13
2. ການໃຊ້ສັບ.....17
2.1 ການໃຊ້ສັບທີ່ຖືກຕຳແໜ່ງການພົວພັນໃນສັງຄົມ.....17
2.2 ການໃຊ້ສັບມາດຕະຖານ.....20


## ບົດທີ 3 ວາກະຍະສຳພັນ


I. ສະເໜີແນະ.....23
1. ຄວາມສຳນຶກກ່ຽວກັບວາກະຍະສຳພັນ.....23
2. ຊະນິດສາຍສຳພັນວາກະຍະສຳພັນ.....24
2.1 ການສຳພັນວາກະຍະສຳພັນແບບໂຕຕົ້ນຕໍ-ໂຕສຳຮອງ.....24
2.2 ການສຳພັນວາກະຍະສຳພັນແບບສະເໝີພາກ.....25
2.3 ການສຳພັນວາກະຍະສຳພັນແບບໂຕຕັ້ງ-ໂຕສຳແດງ.....25
II. ວະລີ(Phrase).....26
1. ຄວາມສຳນຶກກ່ຽວກັບວະລີ.....26
2. ການຈັດແບ່ງຊະນິດວະລີ.....26
III. ປະໂຫຍກ(Sentence).....27
1. ມະໂນພາບກ່ຽວກັບປະໂຫຍກ.....27
2. ພາກສ່ວນຫລັກຂອງປະໂຫຍກ.....27

3. ພາກສ່ວນແອ້ມຂອງປະໂຫຍກ........28
3.1 ຄຳວິເສດ........28
3.2 ຄຳກຳກັບ........29
3.3. ຄຳຂະຫຍາຍ........30
4. ຊະນິດຂອງປະໂຫຍກ........32
4.1 ອີງໃສ່ທັງໂຄງສ້າງ........32
4.2 ອີງຕາມຈຸດປະສົງການປາກເວົ້າ ຫລືລັກສະນະ........35

## ພາກທີ II ທັກສະທາງພາສາ

### ບົດທີ 1 ທັກສະການຟັງ

1. ຄວາມເຂົ້າໃຈກ່ຽວກັບທັກສະການຟັງ........38
2. ຈຸດມຸ່ງໝາຍໃນການຟັງ........38
2.1 ການຟັງເພື່ອໃຫ້ເກີດຄວາມຮູ້........38
2.2 ການຟັງເພື່ອໃຫ້ເກີດຄວາມຄິດ........39
2.3 ການຟັງເພື່ອໃຫ້ເກີດຄວາມມ່ວນຊື່ນ........39
3 ປະໂຫຍດທີ່ໄດ້ຮັບຈາກການຟັງ........39
4 ຄວາມຮູ້ທົ່ວໄປກ່ຽວກັບການຟັງ........39
5 ການວິຈາລະນາຍານໃນການຟັງ(ການຣິ່ນຕອງ)........40
6 ການຟັງເພື່ອອິມ(ຈັບ) ໃຈຄວາມ........40

### ບົດທີ 2 ທັກສະການເວົ້າ

1. ຄວາມຮູ້ທົ່ວໄປກ່ຽວກັບການເວົ້າ........44
2. ຄວາມສຳຄັນຂອງການເວົ້າ........44
3. ຈຸດປະສົງຂອງການເວົ້າ........45
4. ອົງປະກອບຂອງການເວົ້າ........45
5. ຄວາມຮູ້ທົ່ວໄປກ່ຽວກັບຜູ້ເວົ້າ........45
6. ຫລັກທົ່ວໄປຂອງການເວົ້າໃນທີປະຊຸມ........46

## ບົດທີ 3 ທັກສະການອ່ານ

1. ຄວາມສຳຄັນຂອງການອ່ານ....................50
2. ຈຸດມຸ່ງໝາຍໃນການອ່ານ....................50
3. ປະເພດຂອງການອ່ານ....................50
4. ການເຝິກຕົນເອງໃຫ້ເປັນນັກອ່ານທີ່ດີ....................51
5. ຫລັກການອ່ານບາງປະເພດ....................52

## ບົດທີ 4 ທັກສະການຂຽນ

1. ຄວາມໝາຍຂອງການຂຽນ....................54
2. ຄວາມເຂົ້າໃຈກ່ຽວກັບການເຝິກທັກສະການຂຽນ....................54
3. ປະເພດບົດຂຽນ....................54
4. ຫລັກທົ່ວໄປໃນການຂຽນບົດ....................55

# ພາກທີ I ຫລັກພາສາລາວ

## ບົດທີ 1 ໄຂຫົວເລື່ອງ(ອາລຳພະບົດ)

### 1. ພາສາ ແລະຄວາມສຳຄັນຂອງພາສາ

ພາສາລາວ ແມ່ນຜະລິດຕະພັນທາງດ້ານວັດທະນະທຳອັນໜຶ່ງຂອງຊາວລາວ. ຊາວລາວໃຊ້ພາສາລາວເປັນພາຫະນະເພື່ອ:

+ ຄົ້ນຄິດ
+ ສື່ສານ ແລກປ່ຽນຄວາມຄິດເຫັນ
+ ສົ່ງທອດຄວາມຮູ້ ປະສົບການອັນເປັນບົດຮຽນຕ່າງໆ ໃນການດຳລົງຊີວິດທາງດ້ານຈັນຍາທຳ, ວັດຖຸທຳ ແລະຄະຕິທຳຈາກຄົນລຸ່ນກ່ອນຫາຄົນລຸ່ນຕໍ່ໆມາ.

ຈາກນັ້ນ, ເຮົາຈິ່ງເຫັນໄດ້ວ່າ ພາສາລາວເຮົາມີບົດບາດສຳຄັນບໍ່ໜ້ອຍຕໍ່ກັບຊາວລາວ. ຄວາມສຳຄັນບໍ່ພຽງແຕ່ເທົ່ານັ້ນ; ໃນໂຕມັນ, ພາສາລາວເຮົາພັດຍັງແມ່ນປັດໄຈສຳຄັນອັນໜຶ່ງ ທີ່ຜູກສ້າງຄວາມເປັນເຜົ່າລາວ, ເປັນສັນຍະລັກ, ເອກະລັກອັນໜຶ່ງຂອງເຜົ່າ. ຊາວບູຮານກໍເຄີຍໄດ້ກ່າວສັນເສີນຄວາມສຳຄັນຕໍ່ບັນຫານີ້ວ່າ: "ພາສາບອກຊາດ ມາລະຍາດບອກຕະກຸນ" ພາສາລາວແມ່ນມໍລະດົກລວມຂອງຊາວລາວໃນວົງຕະກຸນຂອງເຜົ່າລາວ ແລະກໍແມ່ນມໍລະດົກສະເພາະຂອງລາວ ໃນວົງສາຄະນະຍາດມະນຸດຊາດແຫ່ງໂລກ.

ສັງຮວມແລ້ວ, ມໍລະດົກຕ່ອນນີ້ໄດ້ແນບສະໜິດກັບຊີວິດຂອງຊາວລາວ ມາແຕ່ມື້ກຳເນີດຕາບເທົ້າເຖິງປັດຈຸບັນ ກ່າວຄືມັນໄດ້ເຂົ້າໄປແຊກຊ້ອນຢູ່ກັບເກືອບທຸກບັນຫາ ປັດຊະຍາຊີວິດ.

ໃນຊີວິດຂອງເຮົາ, ເຮົາກໍເຫັນວ່າ ພາສາເປັນທັງພາຫະນະ ແລະເພື່ອນໃຈ. ມັນໄດ້ເປັນເຄື່ອງມືທັງໂດຍກົງ ແລະໂດຍອ້ອມ ໃຫ້ແກ່ການສ້າງຄວາມສຳເລັດຂອງແຕ່ລະຊັ້ນຄົນ ແລະວິຊາຊີບຕ່າງໆ ອັນໄດ້ປະກອບສ່ວນສ້າງໃຫ້ຊາດເຮົາໄດ້ມີຄວາມສີວິໄລ ຄືຊາດອື່ນໆໃນໂລກ.

ຜ່ານມາ, ບັນພະບຸລຸດພວກເຮົາຈະແມ່ນວ່າຕົກຢູ່ໃນພາວະການໃດໆກໍຕາມ ຕ່າງກໍໄດ້ປົກປັກຮັກສາ ແລະຖະໜອມຮັກພາສາຂອງຊາດ ຕ່າງແຕ່ວ່າຢູ່ໃນລະດັບແຕກຕ່າງກັນ ຕາມແຕ່ລະສະພາບຄວາມເປັນຈິງຂອງຍຸກສະໄໝນັ້ນໆ. ຍ້ອນແນວນັ້ນ, ມັນຈິ່ງໄດ້ກາຍເປັນມໍລະດົກຕົກທອດມາເຖິງພວກເຮົາໃນປັດຈຸບັນ.

ເຖິງຢ່າງໃດກໍຕາມ, ໃນແງ່ການສຶກສາ, ການເອົາໃຈໃສ່ຫລັກພາສາໃນການຮຽນ-ການສອນພາສາແມ່ຂອງພວກເຮົາ ບໍ່ຄ່ອຍເປັນສິ່ງເອົາຈິງເອົາຈັງທໍ່ໃດ. ການກຳນົດຫລັກການທີ່ເປັນພື້ນຖານ ໂດຍສະເພາະໃນດ້ານອັກຂະຫລະວິທີຍັງບໍ່ທັນຊັດເຈນ ທັງບໍ່ເປັນເອກະພາບກັນໃນໝູ່ປັນຍາຊົນ. ການສົ່ງຄວາມຮູ້ດ້ານພາສາແມ່ແກ່ຜູ້ສືບທອດ ຈິ່ງເປັນໄປຕາມຄວາມມັກ ຫລືທ່າອ່ຽງຂອງຜູ້ສອນເປັນສ່ວນໃຫຍ່. ສະພາບອະນຸໂລມ ຫລືຄະຕິທີ່ວ່າ"ໄດ້ຫລະສ່ຳນີ້" ແຜ່ລາມປົກຄຸມໄປທົ່ວທຸກພາກສ່ວນຂອງວົງການການນຳໃຊ້ພາສາລາວ. ປັດຈຸບັນສຽງໂຈດຂານກ່ຽວກັບຊາຕາກຳຂອງພາສາລາວກໍກຳລັງຊວ່າແຊວຢູ່ຕາມແຕ່ລະຍ່ອມຍານ ວ່ານັກຮຽນ ຫລືຄົນຊູ່ມື້ນີ້ຈົບມັດທະຍົມປາຍ ຫລືແມ່ນກະທັ້ງຈົບປະລິນຍາຕີກໍຍັງຂຽນພາສາລາວບໍ່ຖືກ, ໃຊ້ພາສາລາວບໍ່ເປັນ... ສະພາບຄວາມເປັນໄປຄືແນວນັ້ນ ໃຜຈະເປັນຜູ້ແກ້. ຄຳຕອບທຳອິດກໍຊິແມ່ນຄົນລາວເຮົາທຸກຄົນນີ້ແຫລະເປັນເຈົ້າການແກ້. ນັ້ນກໍເພາະວ່າ ພາສາລາວແມ່ນສົມບັດລວມ

ຂອງຄົນລາວ ຕະຫລອດເຖິງຜູ້ຊົມໃຊ້ພາສາລາວເປັນພາຫະນະທຸກຄົນ. ເຂົາເຫລົ່ານັ້ນມີສິດຊົມໃຊ້ ແລະ ກໍມີສິດປົກປັກຮັກສາ ແລະພັດທະນາມັນ. ກ່ອນອື່ນໝົດຄູສອນພາສາລາວເປັນເຈົ້າການຄົ້ນຄິດຫລັກການ, ໃຫ້ຂໍ້ມູນຫລັກການເບື້ອງຕົ້ນແກ່ຜູ້ສືບທອດ ແລະກະໂຕຜູ້ສືບທອດກໍຄືນັກສຶກສາພວກເຮົາຜູ້ເຊິ່ງກຽມໂຕເປັນຜູ້ກໍາຊາຕາກໍາຂອງຊາດໃນຕໍ່ໜ້າ ເປັນຜູ້ເອົາໃຈໃສ່ສຶກສາຄົ້ນຄວ້າໃຫ້ລະອຽດເລິກເຊິ່ງ ແລະ ນໍາໃຊ້ມັນ; ພ້ອມດຽວກັນນັ້ນກໍເຈຍລະໄນມັນໃຫ້ເສາະໃສ, ກະທັດຮັດ, ງ່າຍ ແລະຊັດເຈນ ທັງໃນດ້ານຮູບການ ແລະຄວາມໝາຍ.

ໃນທີ່ນີ້, ພວກເຮົາຈະສະເໜີ ແລະຮ່ວມກັນຄົ້ນຄວ້າຢ່າງເປັນລະບົບ ຕໍ່ຄວາມຮູ້ດ້ານພາສາລາວທີ່ຮຽນມາໃນສາມັນສຶກສາ ຕາມເວລາໂຄງການກໍານົດໃຫ້. ເວລາເຮົາໜ້ອຍທຽບກັບປະລິມານ ຄວາມຮູ້ທີ່ຕ້ອງການຄົ້ນຄວ້າ, ແຕ່ຄວາມຕ້ອງການໃນການປັບປຸງຄວາມຮູ້ພັດສູງ. ນັ້ນແມ່ນສິ່ງທີ່ພວກເຮົາຕ້ອງຮ່ວມກັນແກ້ໄຂ. ໃນການສະເໜີພາສາລາວນີ້ ຈະສະເໜີເປັນລັກສະນະທວນດ້ານທິດສະດີ ແລະລົງເລິກການນໍາໃຊ້ເປັນຈຸດໜັກ ຄືຈະສະເໜີທິດສະດີ 50% ແລະພາກປະຕິບັດ 50% ໃນບາງກໍລະນີຈະສະເໜີທິດສະດີ 25% ພາກປະຕິບັດ 75%.

## 2. ວິວັດທະນາການຂອງພາສາລາວ

ກ່ອນອື່ນໝົດ, ພວກເຮົາຕ້ອງເຂົ້າໃຈນໍາກັນວ່າ ພາສາລາວມັນກໍາເນີດ ແລະຂະຫຍາຍໂຕພ້ອມໆກັບການກໍາເນີດ ແລະການຂະຫຍາຍໂຕຂອງຊາດລາວ ສັງຄົມລາວ ຜ່ານຕາມແຕ່ລະໄລຍະປະຫວັດສາດລາວ.

ພາສາລາວ, *ໂດຍພື້ນຖານແມ່ນພາສານອນຢູ່ໃນກຸ່ມພາສາຄໍາໂດດ, ບໍ່ປ່ຽນຮູບຄໍາ*. ມັນແມ່ນໜຶ່ງພາສາຄົນສະໄໝບູຮານຕອນປາຍຂອງຍຸກເຫລັກຢູ່ໃນພາກພື້ນອາຊີອາຄະເນ.

ຊາດລາວເປັນຊາດທີ່ເກົ່າແກ່ ມີອາຍຸເຖິງ 5000 ປີ. ຕາມທີ່ພໍຮູ້ໄດ້ຈາກເອກະສານປະຫວັດສາດ, ລາວກໍາເນີດຢູ່ຕາມສາຍພູອານໄຕ(ມົງໂກລີ) ໄດ້ມາຕັ້ງຫລັກແຫລ່ງຢູ່ຕາມລ້ອງແມ່ນໍ້າຫວງໂຫ ແລະຢັງຊີກຽງ(ຢູ່ໃນປະເທດຈີນປັດຈຸບັນ) ປະມານກ່ອນ ຄ.ສ. 3543 ປີ. ເມື່ອເປັນດັ່ງນັ້ນ, ພາສາລາວກໍມີອາຍຸເທົ່າກັບຊາດລາວ ແລະກໍອາດຍ້ອນວ່າເກີດຢູ່ໃນເຂດພູເຂົາອານໄຕ ກຸ່ມຊົນພວກນີ້ຈຶ່ງຖືວ່າ ແມ່ນຕະກຸນໄຕ.

ເຜົ່າລາວແມ່ນເຜົ່າໜຶ່ງໃນຕະກຸນໄຕ ລວມມີຫລາຍຈຸ້ມ ເຊິ່ງແຍກຍ້າຍກັນຢູ່ໃນຫລາຍຂົງເຂດຄື:

1. ພວກທີ່ຍ້າຍໄປຢູ່ເຂດອັດສໍາຂອງອິນເດຍ ເອີ້ນຕົນເອງວ່າ "ໄຕອາຫົມ"
2. ພວກທີ່ໃນຢູ່ເຂດລັດຊານ ພາກເໜືອຂອງພະມ້າ ມີຊື່ເອີ້ນວ່າ "ໄຕໃຫຍ່"
3. ພວກທີ່ເຄື່ອນຍ້າຍໄປຕັ້ງຖິ່ນຖານບ້ານເຮືອນຢູ່ຕາມລ້ອງແມ່ນໍ້າເຈົ້າພະຍາ ກາຍເປັນ "ໄຕສະຫຍາມ"
4. ພວກທີ່ຍັງຄົງຢູ່ແຜ່ນດິນຈີນຕອນໃຕ້ເຂດມົນທົນຍູນານ ແລະຈໍານວນໜຶ່ງຢູ່ໃນເຂດພາກເໜືອຂອງລາວ ເອີ້ນຕົນເອງວ່າ "ໄຕລື້"
5. ພວກທີ່ຖອຍລົງມາຕາມລ້ອງແມ່ນໍ້າຂອງ ເອີ້ນຕົນເອງວ່າ ລາວ "ໄຕລາວ"

ໃນບັນດາຈຸ້ມເຈື້ອທີ່ແຕກອອເປັນຈຸນີ້, ມີສອງຈຸໃຫຍ່ທີ່ຕັ້ງໂຕເປັນລັດເອກະລາດໄດ້ ຄືກາຍເປັນປະເທດໜຶ່ງໃນໂລກ ນັ້ນຄື ຈຸລາວ ແລະຈຸໄທສະຫຍາມ.

ເມື່ອເວົ້າເຖິງການຂະຫຍາຍໂຕ, ການຂະຫຍາຍໂຕຂອງພາສາ ມັນກໍເປັນໄປຕາມລະດັບການຂະຫຍາຍໂຕຂອງສັງຄົມແຕ່ລະຈຸ້ມ. ໃນທີ່ນີ້ພວກເຮົາຈະລອງໃຫ້ຂໍ້ສັງເກດແບບພາງໆ ສະເພາະການຂະ

ຫຍາຍໂຕຂອງພາສາລາວ. ພາສາລາວຢູ່ບ່ອນນີ້ ກວມເອົາພາສາຂອງເຜົ່າລາວທີ່ດຳລົງຊີວິດໃນລ້ານນາ (ຊຽງໃໝ່) ແລະພາກອີສານຂອງໄທປັດຈຸບັນ. ສ່ວນໃນສອງເຂດຫລັງນີ້ຈະໄດ້ພິຈາລະນາສະເພາະເວລາຢູ່ກັບເຜົ່າລາວໃນລາວ ແລະໄລຍະທີ່ຍັງຕັ້ງໂຕເປັນເອກະລາດເທົ່ານັ້ນ.

ໃນການຈັດແບ່ງໄລຍະວິວັດການແຫ່ງພາສາລາວ ສາມາດແບ່ງໄດ້ດ້ວຍຫລາຍໄລຍະທີ່ແຕກຕ່າງຕ່າງກັນ. ຖ້າອີງຕາມໄລຍະແຫ່ງການຮ່ວມສຳພັນກັບພາສາອື່ນ, ເຮົາອາດແບ່ງໄລຍະວິວັດການອອກເປັນສາມໄລຍະ ຄື:

+ ໄລຍະທີ່ພົວພັນໃກ້ຊິດກັນ ໃນກຸ່ມພາສາຕະກຸນດຽວ(ພາສາຄຳໂດດ)
+ ໄລຍະພົວພັນກັບພາສາຕ່າງຕະກຸນໃນເຂດອາຊີ(ພາສາຫລາຍພະຍາງ, ປ່ຽນຮູບຄຳ)
+ ໄລຍະພົວພັນກັບພາສາເອີຣົບ

ຫາກອີງຕາມໄລຍະການຜັນປ່ຽນທາງດ້ານປະຫວັດສາດ, ອາດແບ່ງອອກເປັນຫ້າໄລຍະຄື:

+ ໄລຍະກໍ່ຕົວ
+ ໄລຍະຕັ້ງກຸ່ມທົວເມືອງລາວ
+ ໄລຍະລາວເອກະພາບ 1
+ ໄລຍະລາວແຕກແຍກ
+ ໄລຍະລາວເອກະພາບ 2

ສົມທຽບສອງບ່ອນອີງ, ເຮົາຈະເຫັນວ່າໄລຍະທີໜຶ່ງຂອງທັງສອງຕົກຢູ່ໃນໄລຍະດຽວກັນ. ໄລຍະທີສອງຂອງບ່ອນອີງທີໜຶ່ງກວມເອົາທັງໄລຍະໜຶ່ງ ແລະສອງຂອງບ່ອນອີງທີສອງ. ໄລຍະທີສາມຂອງບ່ອນອີງທີໜຶ່ງກວມເອົາສອງໄລຍະທ້າຍຂອງບ່ອນອີງທີສອງ.

ຢ່າງໃດກໍຕາມ, ໃນການສັງເກດເບື້ອງຕົ້ນນີ້ ຈະເບິ່ງຢູ່ໃນຮູບການຈັດແບ່ງຕາມບ່ອນອີງທີໜຶ່ງ ເພາະມີເຫດຜົນຫລາຍຢ່າງ ຄືເວລາກ່າວເຖິງແຕ່ລະໄລຍະການເກີດປະຕິສຳພັນນັ້ນ ມັນກໍຈະເວົ້າພາດກ່າຍເຖິງໄລຍະປະຫວັດສາດຂອງມັນໃນຕົວ. ດ້ານໜຶ່ງອີກ, ໄລຍະການເສື່ອມ ແລະຂະຫຍາຍໂຕຂອງພາສາກໍບໍ່ອາດຈະຖືກຄືກັບຂັ້ນໄລຍະການແບ່ງເຫດການທາງການເມືອງໄດ້ຢ່າງຂາດໂຕ.

**ກ. ໄລຍະທີ 1** ໄລຍະທີ່ພົວພັນໃກ້ຊິດກັນ ໃນກຸ່ມພາສາຕະກຸນດຽວ(ພາສາຄຳໂດດ)

**ໄລຍະພາສາຂະຫຍາຍໂຕພາຍໃນ ແລະມີການປະຕິສຳພັນກັບກຸ່ມພາສາຕະກຸນຄຳໂດດນຳກັນ.**

ໄລຍະນີ້ອາດນັບເອົາແຕ່ມື້ກຳເນີດຊາດລາວ ຈົນຮອດ ພ.ສ. 600(ຄ.ສ. 57). ຄົນລາວດຳລົງຊີວິດຕິດພັນກັບທຳມະຊາດ ໂດຍຢູ່ກັນເປັນຈຸ້ມ ມີການພົວພັນແບບສາຍຍາດສະໜິດແໜ້ນ ແລະອີງອາໄສສິ່ງອຳນວຍຈາກທຳມະຊາດເພື່ອການຄົງຕົວ, ຜ່ານການເຄື່ອນໄຫວຊອກຢູ່ຫາກິນຕາມຂະເຍີມ. ຈຸດ ໜັກໃນການຊອກຢູ່ຫາກິນ ອາດແມ່ນການຄວ່າເນື້ອ ຫລືສູງກວ່ານັ້ນແດ່ກໍອາດທຳການລ້ຽງສັດ, ປູກຝັງ, ການພົວພັນສັງຄົມກໍຈະຈຳກັດຢູ່ໃນຂອດເຂດຂອງວົງຕະກຸນ ຫລາຍກວ່າການພົວພັນພາຍນອກ.

ພາສາກໍຈະຂະຫຍາຍໂຕ ເພື່ອສ່ອງແສງພໍເໝາະແກ່ການດຳລົງຊີບ ບົນພື້ນຖານການຈັດຕັ້ງໃນຮູບການທີ່ງ່າຍດາຍ:

• ດ້ານການສ່ອງແສງ

ການພົວພັນສັງຄົມຈະຂະຫຍາຍໂຕດີເຊັ່ນ ຊື່ເອີ້ນ, ລັກສະນາການ, ກິລິຍາການກ່ຽວກັບອິລິຍະບົດ ແລະພຶດຕິກຳບາງສ່ວນ...

• ດ້ານການຈັດຕັ້ງ

ໂຄງສ້າງສັບ: ຄຳສັບທີ່ສ້າງຂຶ້ນອາດລ້ວນແຕ່ເປັນຄຳໂດດ(ພະຍາງດຽວ) ເຊັ່ນ ພໍ່, ແມ່, ລູກ, ຄ້ອນ, ແຫລມ, ງາມ, ຫວານ, ກິນ, ໄປ, ຕີ,... ແນ່ນອນ. ສັບປະສົມທີ່ເກີດຈາກຄຳໂດດທີ່ມີຄວາມໝາຍເຕັມໂຕກໍປາກົດເຊັ່ນ ໝາກໄມ້, ໜອງປາ, ດິນສວນ... ຄວາມໝາຍສັງລວມຂອງສັບເຫລົ່ານີ້ຍັງຢູ່ໃນລະດັບຕ່ຳ ຄືຈະເຫັນຮູບສັບຕາມຄວາມໝາຍຂອງສັບທີ່ນຳປະສົມກັນເຂົ້າຈະແຈ້ງ ກ່າວຄືຍັງເປັນວະລີຢູ່.

ໂຄງສ້າງວາກະຍະສຳພັນ: ໂດຍພື້ນຖານພາສາລາວຈະຖືກຈັດວາງຕາມລະບຽບຄຳ ໂດຍໂຕຕົ້ນເປັນໂຕສຳຄັນ ກ່າວຄືໂຕຢູ່ກ່ອນເປັນໂຕແກນ, ຄຳຖັດມາເປັນຄຳຂະຫຍາຍ ບອກເຖິງລັກສະນາການ, ອາກັບກິລິຍາ,... ແລະຈັດຕັ້ງແບບງ່າຍດາຍບໍ່ສັບສົນ:

- ໝາດຳ, ຫົວມັນ, ໝາກໄມ້, ...
- ຂ້ອຍ ນອນ, ລາວ ກິນ ເຂົ້າ, ພໍ່ ໄປ ນາ, ...

**ຂ. ໄລຍະທີ 2** ໄລຍະພົວພັນກັບພາສາຕ່າງຕະກຸນໃນເຂດອາຊີ(ພາສາຫລາຍພະຍາງ, ປ່ຽນຮູບຄຳ)

ໄລຍະນີ້, ອາດກຳນົດເອົາແຕ່ປີ ຄ.ສ. 57 ເຖິງ 1897 ພ້ອມໆກັບການໃຊ້ພາສາຂອງຕົນ ແລະພົວພັນກັບກຸ່ມພາສາຄຳໂດດ, ພາສາລາວໄດ້ພົວພັນກັບພາສາຕ່າງຕະກຸນຄື ພາສາທີ່ມີຫລາຍພະຍາງ ແລະປ່ຽນຮູບຄຳ. ຕາມປະຫວັດສາດລາວ, ຊາວລາວໄດ້ຮັບເອົາ ຫລືນັບຖືພຸດທະສາສະໜາລັດທິມະຫາຍານແຕ່ປີ ພ.ສ. 600 ຜ່ານສຳມະນະທູດຈາກອິນເດຍຝ່າຍເໜືອ. ລັດທິມະຫາຍານໃຊ້ພາສາສັນສະກິດເປັນພາສາບັນທຶກພຸດທະທຳຄຳສອນ ແລະປັດຊະຍາ. ເມື່ອເປັນແນວນັ້ນກໍໝາຍຄວາມວ່າ ພາສາລາວເຮົາໄດ້ມີການແຊກສົມກັບພາສາສັນສະກິດ ອັນເປັນພາສາທີ່ມີຫລາຍພະຍາງ ແລະປ່ຽນຮູບຄຳມາແຕ່ດົນນານແລ້ວ.

ຕໍ່ມາ, ເມື່ອອິບພະຍົບລົງສູ່ແຫລມທອງ(ສຸວັນນະພູມ), ຊາວລາວກໍໄດ້ຮັບອິດທິພົນຈາກພຸດທະສາສະໜາລັດທິລັງກາວົງ(ຫີນະຍານ) ແລະສືບທອດຮ່ອງຮອຍມໍລະດົກສ່ວນໜຶ່ງຂອງຂອມ ເຊິ່ງເຄີຍມີບົດບາດ ແລະມີອິດທິພົນສູງໃນເມື່ອກ່ອນບົນດິນແດນສ່ວນນີ້ອີກຕໍ່ໜຶ່ງ. ທຽບກັບຮູບແບບການດຳລົງຊີວິດໃນເມື່ອກ່ອນ ເຊິ່ງປັດຊະຍາຊີວິດ, ແນວຄິດອ່ານ, ຍັງງ່າຍດາຍ; ເມື່ອໄດ້ຮັບອິດທິພົນທາງສາສະໜາ, ຫລັກປັດຊະຍາ ແລະແນວຄິດໄດ້ຂະເຍີບໂຕຂຶ້ນຢູ່ໃນລະດັບໃໝ່, ຄວາມສັບສົນດ້ານຈິນຕະນາການກໍສູງຂຶ້ນ; ພາສາເຊິ່ງແມ່ນພາຫະນະສະແດງແນວຄິດ ກໍພອຍສູງຂຶ້ນໄປຕາມ.

**ວິວັດທະນາການທາງພາສາໃນໄລຍະນີ້ ເຮົາຈະເຫັນໄດ້ຈາກບາງຈຸດ ດັ່ງລຸ່ມນີ້:**

- ມີການໃຊ້ສັບຄຽງຄູ່ ປາລີ/ສັນສະກິດ-ລາວ (ມາຕາ, ອັມມາ, ແມ່)
- ມີປາກົດການໃຊ້ຄຳເຊື່ອມຫລາຍ(ໄປຍັງບ້ານ, ເຫັນເຊິ່ງພິກຂຸ, ດອກໄມ້ທີ່ພວມບານ, ...)
- ໃຊ້ຄຳຍາບ/ສ້ອຍຫລາຍ(ແລ, ເຖີດ, ເທີ້ນ,...)
- ດ້ານສຳນວນ: ໃຊ້ແບບພັນລະນາຫລາຍ, ຮູບປະໂຫຍກກໍມີລັກສະນະສັບສົນຂຶ້ນ ຄືມີປະໂຫຍກລົບ, ປະໂຫຍກປະສົມ, ປະໂຫຍກແຊກ,...

- ສິນ : ໝາທີ່ຂີບໄກ່ຖືກຂ້າ
- ປະສົມ : ພວກບ່າວສາວພາກັນແຕ່ງໂຕສວຍງາມ ຍ່າງໄປຕາມເສັ້ນທາງ ເລາະຊົມງານບຸນ; ສ່ວນກຸ່ມຄົນໄວກາງຄົນ ພັດພາກັນແຕ້ມໜ້າຕາ ຕີກອງກິນເຫລົ້າ ຟ້ອນແອະແອ່ນ ຢູ່ຕາມເດີ່ນບໍລິເວນອ້ອມແອ້ມນັ້ນ.
- ແຊກ : ຝູງນົກທັງຫລາຍ ເມື່ອຕາເວັນລັບປາຍໄມ້ ກໍພາກັນກັບສູ່ຮວງຮັງ.

- ປາກົດວ່າໄດ້ມີການນຳໃຊ້ເຄື່ອງໝາຍເຂົ້າໃນການຂຽນໜັງສື ແຕ່ກໍເຫັນມີໃຊ້ໃນເວລາຂຶ້ນຕົ້ນເລື່ອງຂຽນ ເຊິ່ງເພິ່ນຮຽກວ່າ <u>ຕາໄກ່</u> ( o ) ແລະລົງທ້າຍເລື່ອງຂຽນ ເຊິ່ງຮຽກວ່າ <u>ໂຄມຸດ</u> (  ) ຫລາຍກວ່າບ່ອນອື່ນໆ.
- ຄຳມີຫລາຍພະຍາງເກີດມີ ແລະມີທ່າອ່ຽງຂະຫຍາຍຕົວຂຶ້ນ.

ແນວໃດກໍແນວ, ອາດເວົ້າໄດ້ວ່າພາສາລາວໃນໄລຍະນີ້ ແມ່ນໄລຍະທີ່ຈະເລີນຮຸ່ງເຮືອງຢູ່ໃນລະດັບສູງ. ບັນດາໜັງສືຕ່າງໆທີ່ຕົກທອດມາເຖິງພວກເຮົາປັດຈຸບັນ ກໍແມ່ນຂີດຂຽນຂຶ້ນໃນສະໄໝດັ່ງກ່າວນີ້.

ກ່ຽວກັບໂຕອັກສອນ, ນັກປາດຫລາຍທ່ານໄດ້ໃຫ້ຄວາມເຫັນວ່າ ຖືກປະດິດແຕ່ງຂຶ້ນໃນໄລຍະນີ້ ເຊັ່ນດຽວກັນ. ສັງເກດຈາກໂຕຈິງ, ໜັງສືລາວທີ່ເຮົາໃຊ້ໃນປັດຈຸບັນ ມີລັກສະນະສືບທອດຢ່າງຈະແຈ້ງຈາກໂຕໜັງສືອັນເດຍ.

**ຄ. ໄລຍະທີ 3 ໄລຍະການພົວພັນກັບພາສາເອີຣົບ(ອາດນັບເອົາແຕ່ປີ 1893 ເຖິງປັດຈຸບັນ)**

ໃນໄລຍະຕົ້ນ, ການພົວພັນກຸ່ມພາສາເອີຣົບ ແມ່ນຢູ່ໃນໄລຍະບ້ານແຕກຊະແລກຂາດກ່າວ ຄື ຢູ່ໃນໄລຍະທີ່ລັດລາວຖືກແບ່ງແຍກ ແລະເສື່ອມອຳນາດ.

ເມື່ອຝຣັ່ງເຂົ້າມາຮຸກຮານ, ພາສາລາວເຊິ່ງເຄີຍເປັນພາສາປາກເວົ້າ ແລະໃຊ້ຕິດຕໍ່ຂີດຂຽນທາງການ ຍັງເຫລືອແຕ່ພຽງບົດບາດທີໜຶ່ງ. ເອກະສານທາງທັງໝົດ ຕະຫລອດການສຶກສາຮ່ຳຮຽນໃນໂຮງຮຽນກໍນຳໃຊ້ພາສາຝຣັ່ງ. ໃນໄລຍະທ້າຍຂອງພວກລ່າເມືອງຂຶ້ນຝຣັ່ງ, ພາສາລາວໃນດ້ານທາງການ, ໄດ້ເລີ່ມຟື້ນໂຕ, ມີການພະຍາຍາມຫລາຍຢ່າງ ເພື່ອປັບປຸງພາສາລາວ ນັບທັງການດັດແປງຮູບແບບຕົວໜັງສື. ສະພາຈັນທະບູລີ ໂດຍການເປັນປະທານຂອງເຈົ້າເພັດຊະລາດ ໄດ້ບັນຍັດຕົວອັກສອນລາວໃຫ້ຄົບຕາມພາສາປາລີ-ສັນສະກິດ.

ພາຍຫລັງປະກາດເອະລາດ ໄລຍະຟື້ນຊີບຂອງພາສາລາວກໍສືບຕໍ່, ສືບຕໍ່ຢູ່ໃນສອງເຂດທີ່ມີລະບອບການເມືອງແຕກຕ່າງກັນ. ປາກົດວ່າທັງສອງຝ່າຍຕ່າງກໍພະຍາມຍາມປັບປຸງພາສາລາວຢ່າງເຕັມຂີດຕາມພາວະໂຕຈິງ. ດ້ານອັກຂະຫລະວິທີມີອັນແຕກຕ່າງກັນແດ່. ເຖິງແມ່ນວ່າທັງສອງຝ່າຍມີທິດເລັງດຽວກັນວ່າ <u>ຂຽນຕາມສຽງ</u> ແຕ່ລະດັບການບັນຍັດກົດລະອຽດ ມີອັນແຕກຕ່າງກັນໂດຍພື້ນຖານແມ່ນ:

**✷ ຝ່າຍວຽງຈັນ:**

- ມີພະຍັນຊະນະ 27 ໂຕ, (ມີໂຕ ຣ), ມີອັກສອນປະສົມ, ອັກສອນຈູງ ແລະອັກສອນຄວບ.
- ການໃສ່ຊື່ໄວຍາກອນ, ອັກສອນ ຮຽນຕາມພາສາປາລີ ຕະຫຼອດເຖິງການເອີ້ນຊື່ປະໂຫຍກກໍເອົາຕາມພາສາດັ່ງກ່າວ.

✷ . **ຝ່າຍແນວລາວຮັກຊາດ:**

- ມີພະຍັນຊະນະ 32 ໂຕ ໂດຍນັບເອົາພະຍັນຊະນະປະສົມເຂົ້ານຳ, ບໍ່ຮັບຮູ້ການມີໂຕ ຣ ໃນພາສາລາວ, ບໍ່ໃຊ້ອັກສອນຈຽງ ແລະຮັບຮູ້ອັກສອນຄວບມີແຕ່ຕົວດຽວຄືຕົວ ວ.

- ການໃສ່ຊື່ສັບ ຫລືສັບໄວຍາກອນ ມີອັນດັດແປງໃຫ້ແທດເໝາະກັບພາສາລາວຫລາຍຂຶ້ນ ("ຄຳແທນນາມ" - ຄຳສັບພະນາມ; ("ຄຳຕໍ່" - ຄຳສັນທານ; ("ຄຳເຊື່ອມ" - ຄຳບຸບພະບົດ... ). ການຮຽກ ຊື່ປະໂຫຍກ ກໍເອີ້ນຕາມຄວາມໝາຍລາວ ເປັນສ່ວນຫລາຍ.

ນອກຈາກວ່າໄດ້ມີປະຕິສຳພັນກັບພາສາຝຣັ່ງແລ້ວ, ໃນໄລຍະດຽວກັນນີ້, ພາສາລາວກໍໄດ້ພົວພັນກັບພາສາອັງກິດນຳອີກ. ສະພາບແນວນີ້ ສ່ວນໜຶ່ງໄດ້ຊ່ວຍໃຫ້ພາສາເຮົາຂະຫຍາຍໂຕ ສ່ວນໜຶ່ງກໍເຮັດໃຫ້ເກີດພາວະເຫລືອບໍ່ຈຳເປັນເຊັ່ນວ່າ ຊື່ດຽວ ເອີ້ນສອງແນວເອີ້ນສາມແນວ (ເອີ້ນຕາມສຽງພາສາຝຣັ່ງ-ອັງກິດ): ປາເລັດສະຕິນ, ປາແລັດສະໄຕ ຯລຯ

**ລັກສະນະສະເພາະພາສາລາວໄລຍະນີ້:**

+ ມີສັບບັນຍັດຫລາຍ, ແລະຄຳຢືມກໍມາກຫລາຍ
+ ຮູບແບບສຳນວນ ມີລັກສະນະກະທັດຮັດ(ບໍ່ພັນລະນາຫລາຍ), ນຳໃຊ້ເຄື່ອງໝາຍວັກຕອນ ເຂົ້າໃນການຂີດຂຽນ.
+ ມີການໃຊ້ຫລັກວິຊາພາສາສາດ ເຂົ້າຊ່ວຍໃນການຄົ້ນຄວ້າພາສາແມ່.

ເມື່ອປະເທດຊາດໄດ້ຮັບການປົດປ່ອຍທົ່ວປະເທດ ແລະສະຖາປານາເປັນປະເທດ ສ.ປ.ປ. ລາວແລ້ວ, ພາສາລາວກໍໄດ້ຮັບການຟື້ນຟູສືບຕໍ່ມາ ແລະອາດເວົ້າໄດ້ວ່າ ໄລຍະນີ້, ພາສາລາວໄດ້ມີບົດບາດດີຂຶ້ນ ແລະຢູ່ໃນທ່ານຂະຫຍາຍສູງຢ່າງບໍ່ເຄີຍມີມາກ່ອນ. ດຽວນີ້, ກຳລັງດຳເນີນການກວດກາຄືນໜັງສືເກົ່າແກ່ທີ່ເຄີຍມີມາ ແລະພ້ອມດຽວກັນນັ້ນກໍໄດ້ສ້າງປັດໄຈໃໝ່ໂອກາດໃໝ່, ສ້າງເອົາຄຳໃໝ່ໆທີ່ເປັນເຈົ້າການຕັດສິນ, ຊີແກ້ໄຂ ແລະປັບປຸງພາສາລາວແນວໃດ ເພື່ອໃຫ້ເປັນພາສາຄຽງຄູ່ກັບຄົນລາວ, ຊາດລາວຕະຫລອດໄປ.

ສະຫຼະພິເສດ: ໄx, ໃx, ເxົາ

# ບົດທີ 2 ການປະກອບສ້າງສັບ ແລະການໃຊ້ສັບ

## 1. ວ່າດ້ວຍການສະກົດຄຳ

ການສະກົດຄຳ ແມ່ນການຂຽນຫລືສ້າງ ແລະການອ່ານພະຍາງ ຫລືຄຳໃຫ້ອອກສຽງຂອງຄຳເວົ້າຕ່າງໆ. ດັ່ງນັ້ນ, ເພື່ອຢາກສະກົດຄຳໃດ ເພິ່ນຕ້ອງມີການປະກອບຕົວອັກສອນເຂົ້າກັນໃຫ້ເປັນພະຍາງ ຫລືຄຳເວົ້າ. ການປະກອບຕົວອັກສອນເຂົ້າກັນໃຫ້ເປັນພະຍາງ ຫລືຄຳເວົ້ານີ້ ໄດ້ມີຢູ່ຫລາຍຂັ້ນຕອນດັ່ງນີ້:

### 1.1 ບັນຫາການຈັດວາງຕຳແໜ່ງຕົວອັກສອນໃນພະຍາງ

#### 1.1.1 ວິທີປະກອບພະຍາງ

**ກ. ການປະກອບດ້ວຍຕົວແກນກັບສະຫລະ( ພ + ສ )**

ການປະກອບພະຍັນຊະນະຕົວແກນກັບສະຫລະເຂົ້າກັນນີ້ ເປັນໄລຍະເບື້ອງຕົ້ນຂອງການສ້າງພະຍາງ ຫລືຄຳເວົ້າ ເພາະວ່າລຳພັງແຕ່ພະຍັນຊະນະ ຫລືສະຫລະ ຍັງບໍ່ເປັນພະຍາງຫລືຄຳເວົ້າເທື່ອ ແລະຍັງບໍ່ທັນມີຄວາມໝາຍ. ດັ່ງນັ້ນ, ເພື່ອຢາກໃຫ້ໄດ້ຄວາມໝາຍຢ່າງໃດຢ່າງໜຶ່ງ ເພິ່ນຈຶ່ງອີງສອງພາກສ່ວນນີ້ປະກອບເຂົ້າກັນ. ໃນຂັ້ນນີ້ມັນປະກອບດ້ວຍສອງພາກສ່ວນ.

| | | | | | | |
|---|---|---|---|---|---|---|
| ຕົວຢ່າງ: | ກ | + | xາ | ຈະໄດ້ຄຳວ່າ | ກາ | (ກາແມ່ນນົກຊະນິດໜຶ່ງມີຂົນສີດຳ) |
| | ຂ | + | xາ | ຈະໄດ້ຄຳວ່າ | ຂາ | (ເຈັບຂາ) |
| | ຕ | + | xິ | ຈະໄດ້ຄຳວ່າ | ຕິ | (ຕິຕຽນ) |
| | ສ | + | xີ | ຈະໄດ້ຄຳວ່າ | ສີ | (ນ້ຳສີ) |
| | ໝ | + | xູ | ຈະໄດ້ຄຳວ່າ | ໝູ | (ໝູໂຕໜຶ່ງ) |
| | ປ | + | ໄx | ຈະໄດ້ຄຳວ່າ | ໄປ | (ໄປໂຮງຮຽນ) |
| | ນ | + | ໃx | ຈະໄດ້ຄຳວ່າ | ໃນ | (ໃນເຮືອນ) |
| | ອ | + | ເxົາ | ຈະໄດ້ຄຳວ່າ | ເອົາ | (ເອົາໃຈໃສ່) |
| | ລ | + | xຳ | ຈະໄດ້ຄຳວ່າ | ລຳ | (ໝໍລຳ) |

**ຂ. ການປະກອບດ້ວຍຕົວແກນ, ສະຫລະ ແລະຕົວສະກົດ( ພ + ສ + ພ )**

ເພື່ອຢາກໄດ້ຄຳສັບຈຳນວນໃດໜຶ່ງເພີ່ມຂຶ້ນມາ, ພາຍຫລັງເພິ່ນເອົາພະຍັນຊະນະຕົວແກນ ແລະສະຫລະປະກອບເຂົ້າກັນແລ້ວ ກໍຍັງເອົາຕົວສະກົດຕື່ມເຂົ້າທ້າຍອີກ. ໃນຂັ້ນຕອນນີ້ພະຍາງໜຶ່ງປະກອບດ້ວຍສາມພາກສ່ວນ.

| | | | | | | | | |
|---|---|---|---|---|---|---|---|---|
| ຕົວຢ່າງ: | ປ | + | xາ | + | ກ | ຈະໄດ້ຄຳວ່າ | ປາກ | (ປາກຫວານ, ປາກເວົ້າ) |
| | ກ | + | xາ | + | ດ | ຈະໄດ້ຄຳວ່າ | ກາດ | (ໂອກາດ, ຜັກກາດ) |
| | ຂ | + | xາ | + | ບ | ຈະໄດ້ຄຳວ່າ | ຂາບ | (ຂາບໄຫວ້, ຂີ້ຂາບ) |
| | ຍ | + | xິ | + | ງ | ຈະໄດ້ຄຳວ່າ | ຍິງ | (ແມ່ຍິງ, ຍິງນົກ) |
| | ກ | + | xິ | + | ນ | ຈະໄດ້ຄຳວ່າ | ກິນ | (ກິນເຂົ້າ, ແມວກິນ) |
| | ສ | + | xຸ | + | ມ | ຈະໄດ້ຄຳວ່າ | ສຸມ | (ສຸມໃຈ, ສຸມໃຜ່) |

| | | | | | | | |
|---|---|---|---|---|---|---|---|
| ລ | + | xຸ | + | ຍ | ຈະໄດ້ຄຳວ່າ | ລຸຍ (ລຸຍນ້ຳ) |
| ມ | + | ແx | + | ວ | ຈະໄດ້ຄຳວ່າ | ແມວ (ຊື່ສັດຊະນິດໜຶ່ງ) |

**ຄ. ການປະກອບດ້ວຍຕົວແກນ, ສະຫລະ ແລະວັນນະຍຸດ( ພ + ສ + ວ)**

ໃນໄລຍະທີສາມນີ້, ພະຍາງໜຶ່ງປະກອບດ້ວຍສາມພາກສ່ວນຄື ພະຍັນຊະນະຕົວແກນ, ສະຫລະ ແລະວັນນະຍຸດ, ສາມາດອ່ານອອກເປັນຄຳ ແລະມີຄວາມໝາຍ.

| | | | | | | | |
|---|---|---|---|---|---|---|---|
| ຕົວຢ່າງ: | ປ | + | xາ | + | x່ | ຈະໄດ້ຄຳວ່າ | ປ່າ (ປ່າໄມ້, ປ່າເຫ່ວ) |
| | ປ | + | xາ | + | x້ | ຈະໄດ້ຄຳວ່າ | ປ້າ (ເອື້ອຍຂອງພໍ່ ຫລືເອື້ອຍແມ່) |
| | ປ | + | xູ | + | x່ | ຈະໄດ້ຄຳວ່າ | ປູ່ (ພໍ່ຂອງພໍ່) |
| | ຍ | + | xາ | + | x່ | ຈະໄດ້ຄຳວ່າ | ຍ່າ (ແມ່ຂອງພໍ່) |
| | ກ | + | ເxົາ | + | x່ | ຈະໄດ້ຄຳວ່າ | ເກົ່າ (ເສື້ອເກົ່າ) |
| | ກ | + | ເxົາ | + | x້ | ຈະໄດ້ຄຳວ່າ | ເກົ້າ (ເລກເກົ້າ, ເກົ້າຜົມ) |

**ງ. ການປະກອບດ້ວຍຕົວແກນ, ສະຫລະ, ຕົວສະກົດ ແລະວັນນະຍຸດ( ພ + ສ + ພ + ວ)**

ໃນຂັ້ນຕອນນີ້, ພະຍາງໜຶ່ງປະກອບດ້ວຍ 4 ພາກສ່ວນຄື ພະຍັນຊະນະຕົວແກນ, ສະຫລະ, ຕົວສະກົດ ແລະວັນນະຍຸດ. ເມື່ອປະກອບເຂົ້າກັນແລ້ວ ກໍມີຄວາມໝາຍຢ່າງໃດຢ່າງໜຶ່ງ.

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| ຕົວຢ່າງ: | ກ | + | xາ | + | ນ | + | x້ | ຈະໄດ້ຄຳວ່າ | ກ້ານ | (ກ້ານພ້າວ) |
| | ຈ | + | xິ | + | ນ | + | x້ | ຈະໄດ້ຄຳວ່າ | ຈິ້ນ | (ທາງຈິ້ນ) |
| | ບ | + | xອ | + | ງ | + | x່ | ຈະໄດ້ຄຳວ່າ | ບ່ອງ | (ແກ້ມບ່ອງ) |
| | ຕ | + | xຸ | + | ມ | + | x່ | ຈະໄດ້ຄຳວ່າ | ຕຸ່ມ | (ສິວ 10 ຕຸ່ມ) |

**1.1.2 ຕຳແໜ່ງຕົວອັກສອນໃນພະຍາງ**

**ກ.** ຖ້າວ່າພະຍັນຊະນະຕົ້ນພະຍາງ ແມ່ນພະຍັນຊະນະເຄົ້າ ຫລືພະຍັນຊະນະປ່ຽວຄື ພະຍັນຊະນະຕົວດຽວ ຕ້ອງໃສ່ສະຫລະ ຫລືວັນນະຍຸດໃຫ້ຖືກຕ້ອງຕາມການສະກົດຄຳຄື ໃຫ້ໃສ່ໄວ້ໜ້າ, ຫລັງ, ເທິງ ຫລື ລຸ່ມ ຂອງພະຍັນຊະນະຕົ້ນພະຍາງທີ່ເປັນຕົວອັກສອນນັ້ນ ຕາມແຕ່ກໍລະນີ.

ຕົວຢ່າງ: ຊ່າ, ຂີ້, ຈີ່, ນີ້, ພຸ້ນ, ພື້, ທັ້ນ, ແທ້ແລ້ວ ຯລຯ

ຂ. ຖ້າພະຍັນຊະນະຕົ້ນພະຍາງ ແມ່ນອັກສອນປະສົມ ຫລືອັກສອນຄວບ, ເວລານັ້ນຈະມີພະຍັນຊະນະໄປນຳກັນສອງຕົວ; ເມື່ອໃສ່ສະຫລະ ນອກຈາກສະຫລະທີ່ຢູ່ໜ້າກໍຕ້ອງໃສ່ກັບພະຍັນຊະນະຕົວທີສອງນັ້ນສະເໝີ ສ່ວນວ່າວັນນະຍຸດນັ້ນຕ້ອງໃສ່ຢູ່ທ້າຍເທິງພະຍັນຊະນະຕົວທີສອງທຸກກໍລະນີ.

ຕົວຢ່າງ: - ພະຍັນຊະນະປະສົມ: ຫລີ້, ໜ້າ, ໜ່າຍ, ຫລ້າ, ໄຫມ້, ໄຫວ້ ຯລຯ

- ພະຍັນຊະນະຄວບ. ກວ່າ, ໄຂວ່, ແກວ່ງ, ຄົ້ນຄວ້າ, ຂວ້ານຂູ, ຂວັ້ນອ່ອນ ຯລຯ

**ໝາຍເຫດ:** ຕົວອັກສອນທີ່ຂີດກ້ອງໄວ້ນັ້ນ ເອີ້ນວ່າພະຍັນຊະນະຕົ້ນພະຍາງ ຫລືອັກສອນຕົວແກນ ເພາະມັນເປັນສຽງຕົ້ນ(ພື້ນສຽງ) ຂອງຄຳເວົ້າ.

**1.2 ບັນຫາການໃຊ້ຄຳທີ່ເປັນສຽງເອກ**

ອັກສອນຄູ່ເປັນອັກສອນແກນໃນພະຍາງ ແມ່ນໝາຍເອົາຕົວອັກສອນສູງ ແລະອັກສອນຕ່ຳ ເພາະວ່າການອອກສຽງຂອງອັກສອນທັງສອງໝວດນີ້ ມີລັກສະນະໃກ້ຄຽງກັນຫລາຍ ແຕ່ວ່າການຂຽນ ແລະ

ຄວາມໝາຍຂອງມັນຊໍ້າພັດຕ່າງກັນ. ດັ່ງນັ້ນ, ເວລາເຮົາຂຽນກໍຕ້ອງໄດ້ອີງໃສ່ຄວາມໝາຍ ແລະເຄົ້າສັບເປັນຕົ້ນຕໍ.

ໃນບັນດາຄໍາເຫລົ່ານີ້ ຈະເວົ້າແຕ່ໝວດອັກສອນສູງ ແລະອັກສອນຕໍ່າທີ່ມີວັນນະຍຸດເອກ(x̀) ເທົ່ານັ້ນ ແລະຈະໃຫ້ຮູ້ແຕ່ດ້ານຄວາມໝາຍຂອງສັບ, ສ່ວນການໃຊ້ຄໍາຢູ່ໃນແຕ່ລະປະໂຫຍກນັ້ນ ໃຫ້ຊອກຮູ້ ແລະຄົ້ນຄວ້າຕື່ມ.

ເພື່ອບໍ່ໃຫ້ຫລົງຄວາມໝາຍຂອງສັບ ຈຶ່ງຂໍຍົກເອົາບາງຄໍາສັບພໍເປັນທີ່ສັງເກດ ດັ່ງລຸ່ມນີ້:

| **ອັກສອນສູງ** | **ອັກສອນຕໍ່າ** |
|---|---|
| ຂ່າ (ຫົວຂ່າ) | ຄ່າ (ລາຄາ, ຄຸນຄ່າ) |
| ຂູ່ (ເຮັດໃຫ້ຢ້ານ) | ຄູ່ (ສອງ) |
| ໄຂ່ (ໄຂ່ເປັດ, ໄຂ່ໄກ່) | ໃຄ່ (ໃຄ່ພອງ, ໜ້າໃຄ່) |
| ຂ່າງ (ໝາກຂ່າງ) | ຄ່າງ (ສັດຊະນິດໜຶ່ງຄ້າຍຄືລີງ) |
| ແຂ່ງ (ແຂ່ງຂັນ, ເສັງ, ຊ່ວງເສັງ) | ແຄ່ງ (ແຄ່ງຂາ) |
| ສ່ຽວ (ສ່ຽວສະຫາຍ, ໝູ່ເພື່ອນໃກ້ຊິດ) | ຊ່ຽວ (ຊ່ຽວຊານ) |
| ສ່າ (ສ່າເຫລົ້າ, ເຊື້ອເຫລົ້າ) | ຊ່າ (ຊ່າລື, ດັງໄປໄກ, ມີຊື່ສຽງ) |
| ສີ່ (ຕິດຕໍ່ພົວພັນ) | ຊີ່ (ນາມ, ບໍ່ຄິດ, ສັດຊື່) |
| ສໍ່ (ສັບສໍ່) | ຊໍ່ (ຊໍ່ດອກໄມ້) |
| ເສື່ອ (ເສື່ອປູນອນ) | ເຊື່ອ(ເຊື່ອໃຈ, ເຊື່ອຟັງ, ເຊື່ອຖື) |
| ໃສ່ (ເອົາໃຈໃສ່, ເອົາໃສ່) | ໃຊ່(ແມ່ນ, ມິໃຊ່ = ບໍ່ແມ່ນ) |
| ສັ່ງ (ບອກ, ບັງຄັບ, ສັ່ງຄວາມ) | ຊັ່ງ (ຊັ່ງນໍ້າໜັກ) |
| ສ່ອງ (ແດດສ່ອງ, ສ່ອງເບິ່ງ) | ຊ່ອງ (ປ່ອງທາງ, ຊ່ອງລົມ) |
| ສ່ວງ (ແຄນໄຄແດ່) | ຊວ່ງ (ເສັງ, ແຂ່ງຂັນ) |
| ສຸ່ມ ( ເຄື່ອງຫາປາຊະນິດໜຶ່ງ) | ຊຸ່ມ (ປຽກໜ້ອຍໜຶ່ງ, ບໍ່ແຫ້ງດີ) |
| ເສື່ອມ (ເສຍ, ສູນຫາຍ, ເສຍຄຸນ) | ເຊື່ອມ (ຕິດເຂົ້າກັນ, ເຊື່ອມເຂົ້າກັນ) |
| ສ່ວຍ (ສ່ວຍສາອາກອນ, ເງິນເສຍສ່ວຍ) | ຊ່ວຍ (ຊ່ວຍເຫລືອກັນ, ຊ່ວຍຊູ) |
| ຖີ່ (ຖ້ວນຖີ່, ຂີ້ຖີ່) | ທີ່ (ທີ່ຢູ່, ບ່ອນ, ສະຖານທີ່) |
| ຖົ່ວ (ໝາກຖົ່ວ, ຊື່ການພະນັນຊະນິດໜຶ່ງ) | ທົ່ວ (ໄປທົ່ວ, ບໍ່ສະເພາະ) |
| ຖ່ວງ (ຈ່ອງ, ດຶງ, ໜ່ວງ, ກົດໜ່ວງ) | ທ່ວງ (ທ່ວງທີ, ທັນເວລາ, ຢ່າງໄວ) |
| ຖ່ານ (ຖ່ານໄຟ, ຖ່ານຫີນ) | ທ່ານ (ຄໍາແທນນາມ, ຄໍາຂຶ້ນຕົ້ນຊື່ຄົນ) |
| ຜ່ອງ (ຜ່ອງໃສ) | ພ່ອງ (ລາງພ່ອງ, ບາງພ່ອງ) |
| ແຜ່ (ແບອອກ, ເພື່ອແຜ່) | ແພ່ (ມີຫລາຍຂຶ້ນ, ອອກແມ່ແພ່ລູກ) |
| ໄຜ່ (ໄມ້ຊະນິດໜຶ່ງ ເອີ້ນວາໄມ່ໄຜ່) | ໃພ່ (ລາສະດອນ, ຄົນທົ່ວໄປ) |
| ຜໍ່ ( ແນມເບິ່ງ, ຜໍ່ດູ, ຜໍ່ເຫັນ) | ພໍ່ (ຜູ້ຊາຍທີ່ໃຫ້ກໍາເນີດລູກ) |
| ຝັ່ງ (ຝັ່ງນໍ້າ, ດິນແຄມແມ່ນໍ້າ) | ຟັ່ງ (ຟ້າວ, ຮີບຮ້ອນ, ຟ້າວຟັ່ງ) |

| | |
|---|---|
| ແຫ່ (ແຫ່ແຫນ, ແຫ່ຫຽນ) | ແຮ່ (ບໍ່ແຮ່, ສາຍແຮ່, ແຮ່ທາດ) |
| ຫ່າງ (ຫ່າງໄກ, ແຖວຫ່າງ) | ຮ່າງ (ໂຄງຮ່າງ, ຮ່າງກະດູກ) |
| ຫ່ວງ (ກັງວົນ, ຫ່ວງໄຍ, ຫ່ວງຫາ) | ຮ່ວງ ( ຫ່ຽວແຫ້ງ, ຊຸຫລົ່ນ) |
| ຫົ່ມ (ປົກຄຸມ, ຫົ່ມຫຸ້ມ) | ຮົ່ມ (ຮົ່ມເງົາ, ຄັນຮົ່ມ) |
| ຫ່ອນ (ຄວນ, ໜ້າຈະ, ບໍ່ຫ່ອນເປັນ) | ຮ່ອນ (ຮ່ອນເຂົ້າ, ຮ່ອນຄຳ) |
| ເຫື່ອ (ນ້ຳເຫື່ອ, ເຫື່ອອອກ) | ເຮື່ອ (ແດງຮຸ່ງເຮື່ອເຮືອງ) |
| ຫ່ຽວ (ຫ່ຽວແຫ້ງ) | ຮ່ຽວ ( ປ່າຮ່ຽວ, ປ່າຊ້າ) |
| ໄໜ່ (ກະໄໜ່ ຊື່ສັດຊະນິດໜຶ່ງ) | ໃນ່ (ເຂົ້າໃນ່ນ້ຳ) |
| ເໜົ່າ (ຫົວເໜົ່າ) | ເນົ່າ ( ເນົ່າເໝັນ, ເປື່ອຍເນົ່າ) |
| ໜ່າຍ (ໜ່າຍຊັງ, ເປີດໜ່າຍ) | ນ່າຍ ( ນ່ວຍນ່າຍ) |
| ໜຸ່ມ (ໜຸ່ມນ້ອຍ, ຍັງໜຸ່ມ) | ນຸ່ມ ( ເໜັງນຸ່ມໆ) |
| ເໜ່ (ສະເໜ່) | ເນ່ (ພຸ້ນເນ່, ວ່າເນ່) |
| ໝ່ຳ (ສະໝ່ຳສະເໝີ) | ມ່ຳ (ມ່ຳເຂົ້າ, ກິນເຂົ້າ) |
| ໝີ່ (ສີ້ນໝີ່, ເສັ້ນໝີ່) | ມີ່ (ມິດມີ່) |
| ໝື່ນ (ສອງໝື່ນ, ຈຳນວນ) | ມື່ນ (ທາງມື່ນ) |
| ຫຍິ່ງ (ຫຍິ່ງແຂ້ວ) | ຍິ່ງ (ໄດ້ຫລາຍຍິ່ງດີ) |
| ແຫຍະ (ແຫຍາວແຫຍະ) | ແຍະ (ແພະແຍະ) |
| ແຫຍ່ ( ແຫຍ່ຮູ) | ແຍ່ ( ຍໍ່ແຍ່) |
| ຫຍໍ່ (ຂວັນອ່ອນຫຍອນແຫຍ່) | ຍໍ່ (ຍໍ່ງົວຄວາຍ) |
| ຫຍ່ອມ (ໄປທຸກຫຍ່ອມຫຍ້າ) | ຍ່ອມ (ຄຳຊ່ອຍຄຳກຳມະອື່ນ |
| | ບອກຄວາມເປັນໄປແບບປົກກະຕິເຊັ່ນ |
| | ໄຟຍ່ອມມີຄວາມຮ້ອນ) |
| ຫລັ່ງ (ຫລັ່ງນ້ຳຕາ,ໄຫລຫລັ່ງ) | ລັ່ງ (ລັ່ງເລໃຈ) |
| ຫລັ່ນ (ຫລາຍຫລັ່ນ, ເປັນຫລັ່ນ) | ລັ່ນ (ປືນລັ່ນ, ລັ່ນໄກປືນ) |
| ໄຫລ່ (ບ່າໄຫລ່) | ໄລ່ ໄລ່ໜີ, ໄລ່ລຽງ, ໄມ້ໄລ່) |
| ເຫລົ່າ (ປ່າເຫລົ່າ, ເຫລົ່ານີ້-ນັ້ນ) | ເລົ່າ (ເລົ່ານິທານ, ເລົ່າເລື່ອງ) |
| ຫລ່າ (ໜ້າຫລ່າ, ຫລ່າເຫລືອງ | ລ່າ (ລ່າເນື້ອ, ລ່າເມືອງຂື້ນ) |
| ຫລ່າຍ (ຕາຫລ່າຍ) | ລ່າຍ (ຕົວະລ່າຍ, ຫົວມ່າຍລ່າຍ) |
| ຫລິ່ນ (ໄຕ້ຫລິ່ນໄມ້) | ລິ່ນ (ຊື່ສັດຊະນິດໜຶ່ງ) |
| ຫລີ່ (ກະຫລີ່) | ລີ່ (ເຮັດລີ່ເອົາປາ) |
| ຫລູ່ (ຫລີບຫລູ່) | ລູ່ (ລູ່ທາງ, ລູ່ນ້ຳໝອກ) |
| ຫລຶ່ງ (ຊື່ສັດຊະນິດໜຶ່ງ ເອີ້ນວ່າຕົວຫລຶ່ງ) | ລຶ່ງ (ຮູລຶ່ງ, ໃຫຍ່ອອກ, ຫລົມ) |
| ຫງ່າ (ສະຫງ່າງາມ, ສະຫງ່າຜ່າເຜີຍ) | ງ່າ (ງ່າໄມ້) |
| ຫງ່ຽງ (ຕ່ຳລົງຂ້າງໜຶ່ງ: ແປ້ນຫງ່ຽງ) | ງ່ຽງ (ງ່ຽງປາ, ງ່ຽງເບັດ) |

| | |
|---|---|
| ຫວ່າ (ປາຊະນິດໜຶ່ງ) | ວ່າ ( ວ່າເວົ້າ, ວ່າ) |
| ຫວ່າງ (ຫວ່າງຂາ, ລະຫວ່າງ) | ວ່າງ (ເປົ່າວ່າງ, ວ່າງວຽກ) |
| ແຫວ່ງ (ແຫວ່ງແຂ້ວ) | ແວ່ງ (ສິບແວ່ງ) |

## 1.3 ໂຕສະກົດ ກ ດ ບ ກັບການຜັນສຽງ ແລະການໃຊ້ວັນນະຍຸດ

ໂຕສະກົດ ແມ່ນພະຍັນຊະນະທີ່ຢູ່ທ້າຍຄຳ ຫລືພະຍາງ ຄືສ່ວນສຸດສະຫລະ ແລະວາງຢູ່ຫລັງສະຫລະ ທັງເຮັດໜ້າທີ່ຕັດສະຫລະໃຫ້ເປັນພະຍາງອັດ.

ຕົວສະກົດໃນພາສາລາວມີ 8 ຕົວຄື ກ, ດ, ບ, ງ, ຍ, ນ, ມ, ວ. ໃນຕົວສະກົດທັງ 8 ຕົວນີ້ ໄດ້ແບ່ງອອກເປັນ 2 ຢ່າງຄື ຕົວສະກົດຕາຍ ແລະ ຕົວສະກົດເປັນ.

ຕົວສະກົດຕາຍ ແມ່ນຕົວສະກົດທີ່ຜັນສຽງໄປຕາມຮູບວັນນະຍຸດບໍ່ໄດ້ຄົບຖ້ວນ; ຕົວສະກົດຕາຍມີ 3 ຕົວຄື ກ, ດ, ບ.

ຕົວສະກົດເປັນ ແມ່ນຕົວສະກົດທີ່ຜັນສຽງໄປຕາມຮູບວັນນະຍຸດໄດ້; ຕົວສະກົດເປັນມີ 5 ຕົວຄື ງ, ຍ, ນ, ມ, ວ.

ດັ່ງນັ້ນ, ເພື່ອຂຽນພາສາລາວໃຫ້ຖືກຕ້ອງໃນການໃຊ້ຕົວສະກົດ ຈຶ່ງຂໍແນະນຳບາງຫລັກການທີ່ຄວນຮູ້ ດັ່ງຕໍ່ລຸ່ມນີ້:

**1.3.1** ເມື່ອຂຽນພະຍາງຫລືຄຳ ທີ່ປະກອບດ້ວຍສະຫລະ xະ, ເxະ, ແxະ, ໂxະ, ເxາະ, xໍ, xົວະ, xົວ, ເxັຍ, ເxຍ (10ໂຕ) ຈະໃສ່ໃສ່ຕົວສະກົດໃດໜຶ່ງໂລດບໍ່ໄດ້ ຕ້ອງໄດ້ປ່ຽນຮູບສະຫລະເດີມເປັນຮູບໃໝ່ສາກ່ອນ.

| | | | | | | | | |
|---|---|---|---|---|---|---|---|---|
| xະ | ປ່ຽນເປັນ | xັ | ສະກົດດ້ວຍ | ກ | ເປັນ | xັກ | ເຊັ່ນ | ມັກ, ຮັກ, ຄັກ ຯລຯ |
| ເxະ | ປ່ຽນເປັນ | ເxັ | ສະກົດດ້ວຍ | ດ | ເປັນ | ເxັດ | ເຊັ່ນ | ເປັດ, ເຮັດ, ເຈັດ ຯລຯ |
| ແxະ | ປ່ຽນເປັນ | ແxັ | ສະກົດດ້ວຍ | ບ | ເປັນ | ແxັບ | ເຊັ່ນ | ແກັບ, ແຕັບ, ແມັບ ຯລຯ |
| ໂxະ | ປ່ຽນເປັນ | ໂxັ | ສຳລັບຕົວສະກົດ ຍ ແລະ ວ | | | | ເຊັ່ນ | ໂອັຍ, ໂຢັວ ຯລຯ |
| | | xົ | ສຳລັບຕົວສະກົດອື່ນໆ | | | | ເຊັ່ນ | ຄົນ, ມົດ, ກົກ ຯລຯ |
| ເxາະ | ປ່ຽນເປັນ | xັອ | ສະກົດດ້ວຍ | ດ | ເປັນ | xັອດ | ເຊັ່ນ | ກັອດ, ຢັອດ, ນັອດ ຯລຯ |
| xໍ | ປ່ຽນເປັນ | xອ | ສະກົດດ້ວຍ | ມ | ເປັນ | xອມ | ເຊັ່ນ | ຫອມ, ຈອມ, ຕອມ ຯລຯ |
| xົວະ | ປ່ຽນເປັນ | xັວ | ສະກົດດ້ວຍ | ບ | ເປັນ | xັວບ | ເຊັ່ນ | ຈັວບ, ກັວບ, ຍັວບ |
| xົວ | ປ່ຽນເປັນ | xວ | ສະກົດດ້ວຍ | ນ | ເປັນ | xວນ | ເຊັ່ນ | ຄວນ, ຊວນ, ກວນ, |
| ເxັຍ | ປ່ຽນເປັນ | xັຽ | ສະກົດດ້ວຍ | ກ | ເປັນ | xັຽກ | ເຊັ່ນ | ອັຽກ, ຈັຽກ, ຊັຽກ ຯລຯ |
| ເxຍ | ປ່ຽນເປັນ | xຽ | ສະກົດດ້ວຍ | ວ | ເປັນ | xຽວ | ເຊັ່ນ | ກຽວ, ຂຽວ, ຄຽວ ຯລຯ |

**1.3.2** ເມື່ອຂຽນພະຍາງຫລືຄຳ ທີ່ປະກອບດ້ວຍສະຫລະ xາ, xິ, xີ, xຶ, xື, xຸ, xູ, ເx , ແx, ໂx, ເxິ, ເxີ, ເxືອ, ເxືອ, (14 ໂຕ) ນີ້ ສາມາດໃສ່ຕົວສະກົດໄດ້ໂລດ ໂດຍອີງຕາມຄຳສັບທີ່ມີຄວາມໝາຍໃນພາສາລາວ ດັ່ງຕົວຢ່າງລຸ່ມນີ້:

| | | | | | | |
|---|---|---|---|---|---|---|
| xາ | ສະກົດດ້ວຍ | ກ | ເປັນ | xາກ | ເຊັ່ນ | ຈາກ, ປາກ, ມາກ ຯລຯ |
| xິ | ສະກົດດ້ວຍ | ດ | ເປັນ | xິດ | ເຊັ່ນ | ຄິດ, ມິດ, ຊິດ ຯລຯ |
| xິ | ສະກົດດ້ວຍ | ບ | ເປັນ | xິບ | ເຊັ່ນ | ກິບ, ຕິບ, ຈິບ ຯລຯ |

| | | | | | | |
|---|---|---|---|---|---|---|
| ິx | ສະກົດດ້ວຍ | ງ | ເປັນ | ິxງ | ເຊັ່ນ | ບິງ, ຊິງ, ລິງ ຯລຯ |
| ິx | ສະກົດດ້ວຍ | ນ | ເປັນ | ິxນ | ເຊັ່ນ | ກິນ, ປິນ, ຄິນ ຯລຯ |
| xຸ | ສະກົດດ້ວຍ | ມ | ເປັນ | xຸມ | ເຊັ່ນ | ຂຸມ, ຊຸມ, ນຸມ ຯລຯ |
| xູ | ສະກົດດ້ວຍ | ກ | ເປັນ | xູກ | ເຊັ່ນ | ດູກ, ຜູກ, ຫູກ ຯລຯ |
| ເx | ສະກົດດ້ວຍ | ດ | ເປັນ | ເxດ | ເຊັ່ນ | ເທດ, ເຜດ, ເຂດ ຯລຯ |
| ແx | ສະກົດດ້ວຍ | ວ | ເປັນ | ແxວ | ເຊັ່ນ | ແມວ, ແນວ, ແຊວ ຯລຯ |
| ໂx | ສະກົດດ້ວຍ | ຍ | ເປັນ | ໂxຍ | ເຊັ່ນ | ໂຮຍ, ໂດຍ, ໂທຍ ຯລຯ |
| ເິx | ສະກົດດ້ວຍ | ງ | ເປັນ | ເິxງ | ເຊັ່ນ | ເທິງ, ເຫິງ, ເຊິງ ຯລຯ |
| ເິx | ສະກົດດ້ວຍ | ນ | ເປັນ | ເິxນ | ເຊັ່ນ | ເຊິນ, ເມິນ, ເຂິນ ຯລຯ |
| ເືxອ | ສະກົດດ້ວຍ | ກ | ເປັນ | ເືxອກ | ເຊັ່ນ | ເກືອກ, ເຂືອກ, ເຄືອກ ຯລຯ |
| ເືxອ | ສະກົດດ້ວຍ | ຍ | ເປັນ | ເືxອຍ | ເຊັ່ນ | ເດືອຍ, ເປືອຍ, ເຟືອຍ ຯລຯ |

**1.3.3** ເມື່ອຂຽນພະຍາງ ຫລືຄຳທີ່ປະກອບດ້ວຍສະຫລະ ໄx, ໃx, ເົາ, xຳ ໃສ່ຕົວສະກົດບໍ່ໄດ້ ເພາະວ່າມັນມີສຽງຕົວສະກົດຢູ່ໃນຕົວແລ້ວ.

ຕົວຢ່າງ: ໄx ເຊັ່ນຄຳວ່າ: ໄປ, ໄວ, ໄກ, ໄຂ, ໄຖ, ໄທ ຯລຯ

ໃx ເຊັ່ນຄຳວ່າ: ໃຄ, ໃຈ, ໃສ, ໃບ, ໃໝ, ໃຫຼ ຯລຯ

ໝາຍເຫດ:

- ສຳລັບ ສະຫລະ xະ ທີ່ສະກົດ ຍ ນັ້ນ ມັນປ່ຽນເປັນຮູບນີ້ " ັxຍ " ແຕ່ກ່ອນ, ຄຳທີ່ຢືມມາຈາກພາສາປາລີ-ສັນສະກິດທີ່ມີສຽງນີ້ ເພິ່ນໃຊ້ສະຫລະໂຕນີ້ ແລະກໍອ່ານວ່າ " ໄx " ຄືກັນ, ແຕ່ວ່າປັດຈຸບັນນີ້ບໍ່ໃຊ້ຂຽນ, ເພິ່ນໃຫ້ໃຊ້ສະຫລະໄອໄມ້ມາຍ( ໄx ) ແທນ.

- ສຳລັບ ສະຫລະ xະ ທີ່ສະກົດ ວ ນັ້ນ ມັນປ່ຽນເປັນຮູບນີ້ " ັxວ " ແຕ່ວ່າປັດຈຸບັນນີ້ບໍ່ໃຊ້ຂຽນ ເພິ່ນໃຊ້ສະຫລະ " ເົາ " ແທນ.

- ສຳລັບ ສະຫລະ xະ ທີ່ສະກົດ ມ ນັ້ນ ມັນປ່ຽນເປັນຮູບນີ້ " ັxມ " ແຕ່ກ່ອນ, ຄຳທີ່ຢືມມາຈາກພາສາປາລີ-ສັນສະກິດທີ່ມີສຽງນີ້ ເພິ່ນໃຊ້ສະຫລະໂຕນີ້ ແລະກໍອ່ານວ່າ " ອຳ " ຄືກັນ, ແຕ່ວ່າໃນປັດຈຸບັນນີ້ບໍ່ໃຊ້ຂຽນ ເພິ່ນໃຊ້ສະຫລະອຳ ເຊິ່ງມີຮູບ " xຳ " ແທນ.

**1.3.4** ເມື່ອຂຽນພະຍາງ ຫລືຄຳທີ່ປະກອບດ້ວຍວັນນະຍຸດ ຕ້ອງຂຽນໃຫ້ຖືກຕ້ອງຕາມຫລັກການຜັນສຽງຂອງວັນນະຍຸດທີ່ໃຊ້ຕົວສະກົດ ເພາະວ່າຕົວສະກົດນັ້ນແບ່ງອອກເປັນສອງຢ່າງຄື ຕົວສະກົດຕາຍ ແລະຕົວສະກົດເປັນ ແລະການຜັນສຽງຕາມວັນນະຍຸດນີ້ກໍແຕກຕ່າງກັນ ໂດຍອີງຕາມຫລັກການດັ່ງນີ້:

**ກ. ຕົວສະກົດຕາຍ**: ຕົວສະກົດທີ່ໄດ້ມາຈາກຕົວສະກົດ 3 ຕົວຄື ກ, ດ, ບ.

- ໃຊ້ສະກົດຄຳທີ່ປະກອບດ້ວຍສະຫລະສຽງຍາວ ໃນຈຳພວກອັກສອນກາງ ຜັນສຽງໄປຕາມວັນນະຍຸດໄດ້ພຽງແຕ່ໄມ້ໂທ(x້) ເທົ່ານັ້ນ; ຄຳພວກນີ້ສ່ວນຫລາຍແມ່ນສັບສອນສຽງ ບອກລັກສະນາການ.

| | | | |
|---|---|---|---|
| ຕົວຢ່າງ | ກ້າບ | ເຊັ່ນ | ເປັດຮ້ອງກ້າບໆ |
| | ກ້ອກ | ເຊັ່ນ | ສຽງກິນດັງກ້ອກໆ |
| | ປ້າບ | ເຊັ່ນ | ຮູ້ສຶກເຈັບປ້າບໆ |
| | ເຈ້ດ | ເຊັ່ນ | ບໍ່ແຊບຈັກໜ້ອຍ, ຈາງເຈ້ດເລດ |

ເກື໊ອກ ເຊັ່ນ ຄືຊິແມ່ນລາວຫິວແຮງ, ຟັງສຽງກິນນ້ຳດັງເກື໊ອກໆ

- ໃຊ້ສະກົດຄຳທີ່ປະກອບດ້ວຍສະຫລະສຽງສັ້ນ ໃນຈຳພວກອັກສອນກາງ ສາມາດຜັນສຽງໄປຕາມວັນນະຍຸດໄດ້ພຽງແຕ່ໄມ້ຕີ ( x̆ ) ເທົ່ານັ້ນ; ຄຳພວກນີ້ສ່ວນຫລາຍແມ່ນສັບສອນສຽງ, ຊີ້ບອກລັກສະນາການ ເຊັ່ນດຽວກັນ.

ຕົວຢ່າງ ກ໊ອກ ເຊັ່ນ ສຽງເຄາະປະຕູດັງກ໊ອກໆ

ປິ໊ກເປີ໊ກ ເຊັ່ນ ໝາກກະທັນຫລົ່ນໃສ່ຫລັງຄາດັງປິ໊ກໆເປີ໊ກໆ

ກ໊ອດແກ໊ດ ເຊັ່ນ ໜູກັດໄມ້ດັງກ໊ອດໆແກ໊ດໆ

ອິ໊ບອັ໊ບ ເຊັ່ນ ສຽງກົບຮ້ອງດັງ ອິ໊ບໆອັ໊ບໆທົ່ວທົ່ງນາ

ຈຸ໊ດຈິ໊ດ ເຊັ່ນ ຟັງສຽງເຂົ້າເຈົ້າເຕັ້ນຂ້າມຮ່ອງດັງຈຸ໊ດໆຈິ໊ດໆ

- ສ່ວນອັກສອນສູງ ແລະອັກສອນຕ່ຳ ເມື່ອມີຕົວສະກົດຕາຍຈະປະກອບດ້ວຍສະຫລະສຽງສັ້ນ ຫລືສະຫລະສຽງຍາວ ກໍບໍ່ສາມາດຜັນສຽງໄປຕາມວັນນະຍຸດໄດ້ຈັກໄມ້.

ຕົວຢ່າງ - ອັກສອນສູງ: ສິດ, ຜິດ, ຂັບ, ເຖິດ, ຂາບ,ຜັກ, ຫວັດ, ຫຍາບ, ຯລຯ

- ອັກສອນຕ່ຳ: ພິກ, ຄັກ, ນາບ, ຟາດ, ວາດ, ມອບ: ເຊືອກ, ຯລຯ

**ຂ. ຕົວສະກົດເປັນ**: ແມ່ນໂຕສະກົດທີ່ໄດ້ມາຈາກຕົວສະກົດ 5 ໂຕຄື ງ, ຍ, ນ, ມ, ວ.

- ໃຊ້ສະກົດຄຳທີ່ປະກອບດ້ວຍສະຫລະສຽງສັ້ນ ຫລືສຽງຍາວໃນຈຳພວກອັກສອນກາງ ອາດສາມາດຜັນສຽງໄປຕາມວັນນະຍຸດໄດ້ທຸກໄມ້. ຄຳພວກນີ້, ສ່ວນຫລາຍແມ່ນຄຳສອນສຽງ ຫລືຄຳອຸທານ

ຕົວຢ່າງ ຕ້ອງ ຕ່ອງ ຕ້ອງ ຕ໊ອງ ຕ໋ອງ

ກ້ອຍ ກ່ອຍ ກ້ອຍ ກ໊ອຍ ກ໋ອຍ

ປົງ ປົ່ງ ປົ້ງ ປົ໊ງ ປົ໋ງ

ຕູມ ຕູ່ມ ຕູ້ມ ຕູ໊ມ ຕູ໋ມ

ອາວ ອ່າວ ອ້າວ ອ໊າວ ອ໋າວ

- ໃຊ້ສະກົດຄຳທີ່ປະກອບດ້ວຍສະຫລະສຽງສັ້ນ ຫລືສຽງຍາວ ໃນຈຳພວກອັກສອນສູງ ແລະອັກສອນຕ່ຳ ສາມາດຜັນສຽງໄປຕາມວັນນະຍຸດໄດ້ສອງໄມ້ຄື ໄມ້ເອກ ( x̀ ) ແລະໄມ້ໂທ ( x̂ ).

| | | | | | | |
|---|---|---|---|---|---|---|
| ຕົວຢ່າງ | ຄັນ | ຄັ່ນ | ຄັ້ນ | ຜຽນ | ຜ່ຽນ | ຜ້ຽນ |
| | ສິງ | ສິ່ງ | ສິ້ງ | ຫວານ | ຫວ່ານ | ຫວ້ານ |
| | ຊຸມ | ຊຸ່ມ | ຊຸ້ມ | ລອງ | ລ່ອງ | ລ້ອງ |
| | ມຸງ | ມຸ່ງ | ມຸ້ງ | ຟອນ | ຟ່ອນ | ຟ້ອນ |

## 1.4 ການໃຊ້ສະຫລະ ໄx ແລະສະຫລະ ໃx

### 1.4.1 ການໃຊ້ສະຫລະ ໄx

ເພິ່ນເອີ້ນສະຫລະ ໄx ຕົວນີ້ວ່າ ສະຫລະໄອໄມ້ມາຍກໍຍ້ອນວ່າ ຫາງຂອງມັນມາຍ. ຕາມທຳມະດາຖ້າອີງໃສ່ຫລັກການປະສົມສະຫລະກັບຕົວສະກົດແລ້ວ, ສະຫລະ xະ ເມື່ອປະສົມກັບຕົວສະກົດ ຍ ມັນຈະປ່ຽນເປັນຮູບນີ້ xັຍ ແລ້ວກໍອ່ານວ່າ ໄອ ຄືກັນ ແຕ່ວ່າສະຫລະໄອ ( xັຍ ) ຮູບນີ້ບໍ່ໃຊ້ຂຽນໃນຄວາມລາວ, ພວກເຮົາມີສະຫລະໄອ ( ໄx ) ຮູບນີ້ແລ້ວ. ດັ່ງນັ້ນ, ເພິ່ນຈຶ່ງໃຫ້ຂຽນສະຫລະໄອໄມ້ມາຍແທນ ໂດຍ

ມີຫລັກການດັ່ງນີ້:

ກ. ຄຳລາວຄຳໃດທີ່ຜັນປ່ຽນມາຈາກພາສາປາລີ-ສັນສະກິດ ເຊິ່ງມີຕົວ ຍ ຢູ່ຫລັງທີ່ອ່ານອອກສຽງ ອະຍະ ຫລື ເອຍຍະ ໃນພາສາປາລີ-ສັນສະກິດ ເວລາຂຽນຄວາມລາວໃຫ້ໃຊ້ສະຫລະໄອໄມ້ມາຍ ( ໄ x ).

ຕົວຢ່າງ ສະມະຍະ ປ່ຽນເປັນ ສະມັຍ ຕ້ອງຂຽນວ່າ ສະໄໝ ເຊັ່ນ ສະໄໝບູຮານ

ວິທະຍາລະຍະ ປ່ຽນເປັນ ວິທະຍາລັຍ ຕ້ອງຂຽນວ່າ ວິທະຍາໄລ ເຊັ່ນ ວິທະຍາໄລ ສຸກສະຫວັດ.

ພະຍະ ປ່ຽນເປັນ ພັຍ ຕ້ອງຂຽນວ່າ ໄພ ເຊັ່ນ ອຸທະກະໄພ

ປັດຈະຍະ ປ່ຽນເປັນ ປັດຈັຍ ຕ້ອງຂຽນວ່າ ປັດໄຈ ເຊັ່ນ ປັດໄຈສີ່ ໝາຍເຖິງ ທີ່ຢູ່ອາໃສ, ອາຫານ, ເຄື່ອງນຸ່ງຫົ່ມ ແລະຢາປົວພະຍາດ.

ວິຈະຍະ ປ່ຽນເປັນ ວິຈັຍ ຕ້ອງຂຽນວ່າ ວິໄຈ ເຊັ່ນ ຫ້ອງວິໄຈ

ວິນະຍະ ປ່ຽນເປັນ ວິນັຍ ຕ້ອງຂຽນວ່າ ວິໄນ ເຊັ່ນ ພະສົງປະຕິບັດວິໄນ

ຊະຍະ ປ່ຽນເປັນ ຊັຍ ຕ້ອງຂຽນວ່າ ໄຊ ເຊັ່ນ ພວກເຮົາຕ້ອງມີໄຊ

ອາສະຍະ ປ່ຽນເປັນ ອາສັຍ ຕ້ອງຂຽນວ່າ ອາໄສ ເຊັ່ນ ໂລກນີ້ມີຄົນອາໄສຢູ່ຢ່າງຫລວງຫລາຍ

ເວຍຍາກາຣະນະ ປ່ຽນເປັນ ໄວຍາກອນ ເຊັ່ນ ໄວຍາກອນລາວ ປະກອບດ້ວຍ 4 ພາກ

ອະທິປະເຕຍຍະ ປ່ຽນເປັນ ອະທິປະໄຕ ເຊັ່ນ ພວກເຮົາມີອະທິປະໄຕ

ອະສັງເຂຍຍະ ປ່ຽນເປັນ ອະສົງໄຂ ເປັນຕົ້ນ.

ຂ. ຄຳໃດທີ່ຜັນປ່ຽນມາຈາກພາສາປາລີ-ສັນສະກິດ ເຊິ່ງອອກສຽງເປັນ ໄx (ຕາມຫລັກການແປງຕົວອັກສອນ, ການແປງສະຫລະ) ໃຫ້ຂຽນເປັນສະຫລະໄອໄມ້ມາຍ ( ໄx )

ຕົວຢ່າງ ພິບູນ ເປັນ ໄພບູນ

ພິທູນ ເປັນ ໄພທູນ

ອິສະວະຣະ ເປັນ ໄອສວນ

ຕີຣະຕະນະ ເປັນ ໄຕຣະຕະນະ

ເຕປິຕະກະ ເປັນ ໄປປິດົກ

ຄ. ຄວາມລາວທົ່ວໄປທີ່ອອກສຽງສະຫລະໄອ ເຊິ່ງບໍ່ແມ່ນຄຳທີ່ໃຊ້ສະຫລະໄອໄມ້ມ້ວນ ( ໃx ) ໃຫ້ຂຽນດ້ວຍສະຫລະໄອໄມ້ມາຍ ( ໄx ) ໝົດ.

| | | | |
|---|---|---|---|
| ຕົວຢ່າງ | ໄຂ | ເຊັ່ນ | ໄຂປະຕູ, ໄຂກະເປົ໋າ, ໄຂຫີບ ຯລຯ |
| | ໄກ້ | ເຊັ່ນ | ມື້ວານນີ້, ຂ້ອຍເຫັນໄກ້ໂຕໜຶ່ງ. |
| | ໄຂ່ | ເຊັ່ນ | ໄຂ່ເປັດ 5 ໜ່ວຍ. |
| | ໄຄ | ເຊັ່ນ | ເດັກນ້ອຍບໍ່ອາບນ້ຳ ຕົນຕົວມີແຕ່ຂີ້ໄຄ. |
| | ໄຄ່ | ເຊັ່ນ | ພວກເຮົາມີຄວາມຮັກໄຄ່ ເຊິ່ງກັນແລະກັນ. |
| | ໄຈ້ແຍກ | ເຊັ່ນ | ພວກເຮົາຄວນໄຈ້ແຍກແຕ່ລະບັນຫາໃຫ້ລະອຽດ. |
| | ໄສ | ເຊັ່ນ | ເດັກນ້ອຍທຸກຄົນຕ້ອງໄດ້ສັກຢາກັນໝາກສຸກໝາກໃສ. |

24/VII
ຫ້າມຈຳໜ່າຍ

ໄສ່ ເຊັ່ນ ມື້ວານນີ້, ພໍ່ຂອງຂ້ອຍໄປໃສ່ແຮ້ວ ໄດ້ນົກໄສ່ຊາວໂຕ.

ໄສ້ ເຊັ່ນ ຢານີ້ໃຊ້ສຳລັບປົວພະຍາດລຳໄສ້.

ໄຊ້ ເຊັ່ນ ຢືມເງິນເພິ່ນແລ້ວ ຕ້ອງໄຊ້ເພິ່ນຄືນ.

ໄຍ ເຊັ່ນ ຢ່າຢອກໄຍກັນໃນເວລານັ່ງຮຽນໃນຫ້ອງ.

ໄດ ເຊັ່ນ ຕຶກຫລັງນີ້ມີຂັ້ນໄດສິບຂັ້ນ.

ໄຕ ເຊັ່ນ ລາວເປັນຕຸ່ມຢູ່ຄາງກະໄຕ.

ໄຕ້ ເຊັ່ນ ຫ້ອງນີ້ມືດຫລາຍ ກະລຸນາໄຕ້ໄຟແດ່.

ໄນ ເຊັ່ນ ໝາໄນອາໄສຢູ່ໃນປ່າ.

ໄບ ເຊັ່ນ ມື້ວານນີ້, ລາວໄປຊື້ເຫລັກສຳໄບຢູ່ຕະຫລາດດົງໂດກ.

ໄພ້ ເຊັ່ນ ການຫລິ້ນໄພ້ແມ່ນການຫລິ້ນການພະນັນຊະນິດໜຶ່ງ.

ໄຢ ເຊັ່ນ ແມງໄຢມັກເຮັດຮັງຢູ່ຕາມຝາເຮືອນ.

ໄຫ້ ເຊັ່ນ ລູກຂອງລາວມັກໄຫ້ຍາມກາງຄືນ.

ໄຮ່ ເຊັ່ນ ຫ້າມຖາງໄຮ່ທຳລາຍປ່າ.

ໄໝ ເຊັ່ນ ສິ້ນໄໝຜືນນີ້ລາຄາເທົ່າໃດ?.

ໄຫລ ເຊັ່ນ ນ້ຳຫ້ວຍສາຍນີ້ໄຫລແຮງຫລາຍ.

ໄຫລ ເຊັ່ນ ນ້ຳຫ້ວຍສາຍນີ້ໄຫລແຮງຫລາຍ.

໑. ຖ້າເຮົາຢາກຂຽນພາສາຕ່າງປະເທດ ເຊິ່ງໃຊ້ປົນຢູ່ກັບພາສາລາວເຮົາ ຫລືນຳມາໃຊ້ຄວບຄູ່ກັບຄວາມລາວເຮົາ ເພື່ອໃຫ້ອ່ານອອກສຽງໄດ້ຕາມສຽງໄອ ເຊິ່ງແມ່ນສຽງເດີມພາສາເຫລົ່ານັ້ນແມ່ນໃຫ້ຂຽນສະຫລະໄອໄມ້ມາຍ ( ໄx ).

ຕົວຢ່າງ ສີວິໄລ ເຊັ່ນ ປະເທດທີ່ສີວິໄລຍ່ອມມີອຸປະກອນການຜະລິດທີ່ທັນສະໄໝ.

ໄມ ເຊັ່ນ ໜຶ່ງໄມ ເທົ່າກັບ 1, 61 ກິໂລແມັດ.

ໄຊງ່ອນ ເຊັ່ນ ແຕ່ກ່ອນ, ນະຄອນໂຮ່ຈິມິນ ມີຊື່ວ່າ ໄຊງ່ອນ.

ຊຽງໄຮ ເຊັ່ນ ແມ່ນນະຄອນອຸດສະຫະກຳແຫ່ງຂອງ ສ.ປ. ຈີນ.

ຮັອກໄກໂດ ເຊັ່ນ ເກາະຮັອກໄກໂດ ຕັ້ງຢູ່ດິນແດນທາງພາກເໜືອຂອງຍີ່ປຸ່ນ.

### 1.4.2 ການໃຊ້ສະຫລະ ໃx

ເພິ່ນເອີ້ນວ່າ ສະຫລະໄມ້ມ້ວນ ( ໃx ) ນັ້ນ, ຍ້ອນວ່າຫາງຂອງມັນມ້ວນເຂົ້າ. ການໃຊ້ສະຫລະໄອຮູບນີ້ ( ໃx ) ແມ່ນໃຊ້ຂຽນຄຳສັບຕ່າງໆໃນພາສາລາວ ເພື່ອໃຫ້ຈຳແນກໄດ້ຄວາມໝາຍຂອງມັນ ຕາມສຳນຽງຂອງປະຊາຊົນລາວບາງທ້ອງຖິ່ນທີ່ເຄີຍໃຊ້ກັນເຊັ່ນ ຊາວເມືອງຫລວງພະບາງ ແລະໄທດຳເຄີຍອອກສຽງວ່າ " ອາເອີ " ຫລືອອກສຽງວ່າ " ເອີ " ເຊັ່ນຄຳວ່າ ໄປໃສ ເວົ້າວ່າ " ໄປເສີ ", ພາກໃຕ້ ເວົ້າວ່າ " ພາກເຕີ້ " ໃນຮືອນ " ເນີເຮືອນ " ເຫລົ່ານີ້ເປັນຕົ້ນ. ປະຊາຊົນລາວບາງທ້ອງຖິ່ນ ຫລືບາງຊົນເຜົ່າທີ່ເຄີຍໃຊ້ສະຫລະໄອໄມ້ມ້ວນນີ້ຕາມສຳນຽງຂອງຕົນມີຄື ໄທພວນ, ໄທເໜືອ, ຜູ້ໄທ,... ແຕ່ໂດຍທົ່ວໄປແລ້ວໃນພາກກາງ ຫລືທ້ອງຖິ່ນວຽງຈັນຊ້ຳພັດອອກສຽງເປັນສຽງດຽວກັນກັບສະຫລະໄອໄມ້ມາຍ ( ໄx ) ແຕ່ເວລາຂຽນກໍຂຽນສະຫລະໄອໄມ້ມ້ວນ( ໃx ). ດັ່ງນັ້ນ, ເພື່ອເປັນທິດທາງໃນການຂຽນພາສາລາວໃຫ້ຖືກຕ້ອງ

ແລະບໍ່ໃຫ້ຫລົງກັນກັບສະຫລະໄອໄມ້ມາຍ ຈຶ່ງຂໍຍົກເອົາຄຳສັບທີ່ໃຊ້ສະຫລະໄອໄມ້ມ້ວນ ດັ່ງລຸ່ມນີ້:

ຕົວຢ່າງ ໃກ້ - ມີຄວາມໝາຍວ່າ ມໍ່, ແປ, (ບ້ານໃກ້ເຮືອນຄຽງ)

- ໃຊ້ໃນຄຳໃກ້ຊິດ, ໃກ້ຄຽງ

ໃຂ້ ມີຄວາມໝາຍວ່າ ມໍ່, ໃກ້(ມາເຮົາຢູ່ໃຂ້ບ້ານ)

ໃຂ່ ມີຄວາມໝາຍວ່າ ແປ້ວ, ບໍ່ອື່ນ(ຕາກເຄື່ອງບໍ່ທັນໃຂ່ ຢ່າຟ້າວກູ້ເດີ)

ໃຄ່ - ມີຄວາມໝາຍວ່າ ພອງ, ໂນ, ບວມ(ຕົນລາວພົກໂບກຈຶ່ງໃຄ່)

- ໃຊ້ໃນຄຳ ໜ້າໃຄ່(ໜ້າໃຄ່ບໍ່ໝາຍວ່າໜ້າໂນຫລືບວມ)

ໃຈ - ສິ່ງທີ່ພາໃຫ້ເກີດຄວາມຮູ້ສຶກນຶກຄິດ(ແນວຄິດຈິດໃຈ, ຫົວໃຈ)

- ສິ່ງທີ່ເປັນຈຸດເຄິ່ງກາງ ຫລືສູນກາງ(ໃຈໄມ້, ໃຈມື, ໃຈກາງ)

- ໃຊ້ໃນຄຳ: ໃຈບຸນ, ໃຈບາບ, ໃຈແຄບ, ໃຈກວ້າງ, ໃຈເຢັນ, ໃຈຮ້ອນ ຯລຯ

ໃຈ້ ຊື່ປີໜຶ່ງຕາມປີບູຮານ(ປີໃຈ້ = ປີຊວດ)

ໃສ - ມີຄວາມໝາຍວ່າ ບໍ່ຂຸ່ນ, ບໍ່ມົວ(ນ້ຳຂຸ່ນແພ້ນ້ຳໃສ ໃຈດີແພ້ໃຈຮ້າຍ)

- ບ່ອນໃດ, ທີ່ໃດ(ໄປໃສມາໃສກໍເບິ່ງບ້ານເບິ່ງເມືອງເພິ່ນແດ່)

- ໃຊ້ໃນຄຳ ສົດໃສ, ແຈ່ມໃສ, ຜ່ອງໃສ, ປອດໃສ.

ໃສ່ - ມີຄວາມໝາຍວ່າ ບັນຈຸ, ບັນທຸກ(ຖົງສ່ຂີ້ເຫຍື້ອ)

- ຫ້າງໄວ້, ດັກໄວ້(ເຈົ້າເຄີຍໃສ່ກັບບໍ?)

ໃສ້ ຊື່ປີໜຶ່ງຕາມປີບູຮານ(ປີໃສ້ = ປີມະເສັງ)

ໃຊ່ ມີຄວາມໝາຍວ່າ ແມ່ນ; ແຕ່ມັກໃຊ້ໃນບົດກາບກອນຫລາຍກວ່າ:

ກຸມພັນແຄ້ນ ເຄືອງມະໂນຄ້ອຍຄັ່ງ

*ລືຈັກ ໃຊ້ແອ່ວອ້ວນ ໂອມນ້ອງກໍໃຊ່ການ* (ສິນໄຊ)

ໃຊ້ ມີຄວາມໝາຍວ່າ ຈ່າຍ(ແຕ່ລະເດືອນຂ້ອຍຕ້ອງໃຊ້ຄ່ານ້ຳຄ່າໄຟຟ້າເອງ)

ໃຍ - ສິ່ງທີ່ເປັນເສັ້ນນ້ອຍໆ ເຊັ່ນ ໃຍແມງມຸມ, ໃຍບົວ ຯລຯ

ໃດ ມີຄວາມໝາຍວ່າ ຫຍັງ, ອັນໃດ(ເຈົ້າມັກອາຈານສອນແບບໃດ?)

ໃຕ ອະໄວຍະວະສ່ວນໜຶ່ງ(ກະເພາະ) ຂອງສັດປີກ ເຊັ່ນ ໄກ່, ເປັດ, ນົກ...)

ໃຕ້ - ທິດທີ່ກົງກັນຂ້າມກັບເໜືອ(ລາວແມ່ນຄົນພາກໃຕ້)

- ມີຄວາມໝາຍວ່າ ກ້ອງ, ລຸ່ມ(ແມວນອນຢູ່ກ້ອງໂຕະ)

- ໃຊ້ໃນຄຳ ໃຕ້ລ່າງ(ໃຕ້ລ່າງ ຈະເວົ້າວ່າຕະລ່າງກໍໄດ້).

ໃນ - ມີຄວາມໝາຍກົງກັນຂ້າມກັບ ນອກ (ໃນເຮືອນ, ໃນບ້ານ...)

ໃບ - ສ່ວນຂອງພືດທີ່ຕິດກັບ ກິ່ງ, ກ້ານ(ໃບມ່ວງ, ໃບມີ້, ໃບຕອງ)

- ໃຊ້ໃນຄຳ: ໃບສະເໜີ, ໃບຄຳຮ້ອງ, ໃບມອບສິດ, ໃບພັດ ຯລຯ

ໃບ້ ມີຄວາມໝາຍວ່າ ກືກ ເວົ້າບໍ່ເປັນພາສາ(ບ້າໃບ້ເສຍຈິດ)

ໃຜ ຜູ້ໃດ (ຂ້ອຍບໍ່ຮູ້ວ່າໃຜຍ່າງມາຫັ້ນ)

ໃຝ່ ມຸ່ງຫວັງ, ຕັ້ງໃຈ; ແຕ່ເວລາໃຊ້ມັກໃຊ້ກັບຄຳອື່ນ(ໃຝ່ຝັນ, ໃຝ່ໃຈ)

ໃຍ ໃຊ້ເປັນຄຳອຸທານ(ໃຍ ! ຢ່າເຮັດແນວນັ້ນແມ)

ໃຫ້ - ມີຄວາມໝາຍວ່າ ມອບ, ອະນຸຍາດ(ຂ້ອຍໃຫ້ເຈົ້າຢືມ 100. 000 ກີບ)

- ໃຊ້ໃນຄວາມໝາຍວ່າ ເພື່ອ, ຈົນ (ຮຽນໃຫ້ເກັ່ງ ເສັງໃຫ້ໄດ້)

ໃຮ່ ບ່ອນທີ່ມີຄັນຂັ້ນເປັນຕາຕາມທົ່ງນາ(ນາທົ່ງນີ້ ມີຫຍ້າເກີດຫລາຍ)

ໃທ່ງ ຂີ້ຝຸ່ນ, ມີຝຸ່ນປິວຂຶ້ນ(ຂີ້ຝຸ່ນ ຈະເວົ້າວ່າຂີ້ໃທ່ງກໍໄດ້; ແຕ່ກ່ອນທາງເສັ້ນນີ້ໃທ່ງ, ດຽວ ນີ້ບໍ່ໃທ່ງແລ້ວ).

ໃໝ່ - ຫາກໍມີ, ບໍ່ເກົ່າ(ລາວນຸ່ງສິ້ນໃໝ່)

- ຕໍ່ໜ້າ, ຕໍ່ໄປ(ມື້ນີ້ເອົາສໍ່ານີ້ແຫລະ, ມື້ໜ້າຈັ່ງຄ່ອຍວ່າກັນ).

ໃຫລ ມີຄວາມໝາຍວ່າ ລະເມີເວົ້າຫລືຮ້ອງໃນເວລານອນຫລັບ(ຄືນນີ້ລາວນອນໃຫຼ)

ໃຫຍ່ ບໍ່ນ້ອຍ(ເຮືອນຂອງລາວໃຫຍ່ກວ່າເຮືອນຂ້ອຍ).

## 2. ການໃຊ້ສັບ

### 2.1 ການໃຊ້ສັບທີ່ຖືກຕໍາແໜ່ງການພົວພັນໃນສັງຄົມ.

ການໃຊ້ສັບຖືກຕໍາແໜ່ງການພົວພັນໃນສັງຄົມນັ້ນ ໝາຍເອົາການໃຊ້ສັບຕ່າງໆໃນພາສາລາວເຮົາໃຫ້ເໝາະສົມຖືກຕ້ອງ ແລະສອດຄ່ອງກັບສະພາບຕົວຈິງຂອງຖານະລະຫວ່າງຄົນຕໍ່ຄົນ ແລະຖືກກັບຄວາມໝາຍຂອງສັບ.

#### 2.1.1 ຄໍາແທນນາມ

ດ້ານຫລັກການ, ຄໍາແທນນາມກໍແມ່ນຄໍາທີ່ໃຊ້ແທນສັບທີ່ເປັນຄໍານາມ. ດັ່ງນັ້ນ, ເມື່ອບໍ່ຕ້ອງການໃຊ້ສັບທີ່ເປັນນາມນັ້ນ ກໍໃຊ້ຄໍາແທນນາມແທນມັນໂລດກໍຖືວ່າໄດ້ແລ້ວ. ແຕ່ບັນຫາຊໍ້າພັດມີຢູ່ບ່ອນວ່າ ຄໍາແທນນາມໃນພາສາລາວເຮົາມີຈຸດພິເສດແນວໜຶ່ງ ຄືມີສາຍພົວພັນແບບເຊື່ອງຊ້ອນກັບຄໍານາມ; ຄໍານາມມີສ່ວນກໍານົດຄໍາທີ່ຈະມາໃຊ້ແທນມັນເອງ. ເວົ້າແນວໜຶ່ງແມ່ນ ຄວາມໝາຍທີ່ສັງຄົມຊ້ອນແຝງໄວ້ໃນຄໍາແທນນາມ ເປັນໂຕເຮັດໜ້າທີ່ແທນຄໍານາມ, ບໍ່ແມ່ນຄໍາແທນນາມແຕ່ລະຄໍາ.

✷ ການໃຊ້ຄໍາແທນນາມບຸລຸດທີ 1 ບຸລຸດທີ 2

| ບຸລຸດທີ 1 | ບຸລຸດທີ 2 | ຂອບເຂດການໃຊ້ |
|---|---|---|
| ຂ້ອຍ | ເຈົ້າ | ແບບສຸພາບທົ່ວໄປ ① ອາຍຸຫລືໜ້າທີ່ສະເໝີກັນ.<br>② ຜູ້ເວົ້າມີອາຍຸ ຫລືໜ້າທີ່ສູງກວ່າ.<br>③ ທັງສອງຢູ່ໃນຫົວໜ່ວຍດຽວກັນ. |
| ຂ້າພະເຈົ້າ | ທ່ານ | ແບບສຸພາບ ① ໃຊ້ແບບທາງການ.<br>② ຜູ້ເວົ້າ ເວົ້າຕໍ່ສາທາລະນະ. |
| ເຮົາ | ໂຕ | ① ເປັນກັນເອງ (ບໍ່ຈໍາກັດອາຍຸຫລືຖານະ).<br>② ຜູ້ເວົ້າມີອາຍຸ ຫລືຖານະສູງກວ່າ. |
| ເຮົາ | ເຈົ້າ | ແບບເປັນກັນເອງ ( ລະຫວ່າງເພດຂອງໄວໜຸ່ມ). |
| ເຮົາ | ໝູ່, ຜູ້ອື່ນ | ① ບຸລຸດທີສອງ ມີຄົນຫລາຍສໍາອາຍຸ.<br>② ຜູ້ເວົ້າເນັ້ນການຖ່ອມຕົວ. |
| ເຮົາ | (ອາວ,ບ່າວ...) | ຜູ້ເວົ້າມີອາຍຸໜ້ອຍກວ່າ. |

| | | |
|---|---|---|
| ນ້ອງ | (ຫົວໜ້າ...) | ຜູ້ເວົ້າມີອາຍຸ ຫລືຖານາຕ່ຳກວ່າ. |
| ນ້ອງ | ອ້າຍ, ເອື້ອຍ | ຜູ້ເວົ້າມີອາຍຸ ຫລືຖານາຕ່ຳກວ່າ, ນັບຖືຫລາຍກວ່າ. |
| ໝູ່ | ເພິ່ນ | ໃຊ້ໃນກຸ່ມຄົນທີ່ສະໜິດສະໜົມ (ໄວໜຸ່ມ, ຍິງໜຸ່ມ). |
| ເຂົາ | ເພິ່ນ | ໃຊ້ໃນກຸ່ມຄົນທີ່ສະໜິດສະໜົມກັນ (ຍິງໜຸ່ມ). |
| ຂະນ້ອຍ, ຂ້ານ້ອຍ | (ຍາທ່ານ...) | ຜູ້ເວົ້າມີຖານະຕ່ຳກວ່າ, ຄາລະວາດເວົ້າກັບສົງ. |

✍ ຄຳຊີ້ແຈງ: 1. ໃຊ້ຄຳນາມເປັນຄຳແທນນາມ

2. ໃຊ້ຄຳແທນນາມບຸລຸດທີສາມເປັນບຸລຸດທີສອງ

3. ໃຊ້ຄຳແທນນາມບຸລຸດທີສາມເປັນບຸລຸດທີໜຶ່ງ

✷ ການໃຊ້ຄຳແທນນາມບຸລຸດທີ 3

| ບຸລຸດທີ 3 | ຂອບເຂດການໃຊ້ |
|---|---|
| ທ່ານ | ແບບທາງການ (ໃຊ້ເປັນບຸລຸດທີສອງໄດ້) |
| ເພິ່ນ | ແບບເຄົາລົບນັບຖື (ໃຊ້ເປັນບຸລຸດທີສອງໄດ້) |
| ລາວ | ແບບນັບຖື |
| ເຂົາ | ໃຊ້ກັບຄົນນອກວົງ, ໃຊ້ໃນບົດວັນນະກຳ, ອາຍຸ ຫລືຖານະຕ່ຳກວ່າ |
| ມັນ | ໃຊ້ກັບຄົນນອກວົງ, ອາຍຸສະເໝີ ຫລືຕ່ຳກວ່າ, ສັດ ຫລືວັດຖຸ. |
| ໝໍ | ແບບເປັນກັນເອງ (ມັກໃຊ້ໃນກຸ່ມຜູ້ຊາຍ). |
| ກັນ | ໃຊ້ແທນໝວດໝູ່ (ໃຊ້ເປັນບຸລຸດທີໜຶ່ງໄດ້). |
| ໂຕ | ໃຊ້ແທນຜູ້ດຽວ ຫລືຕົນເອງ (ໃຊ້ເປັນບຸລຸດທີສອງໄດ້). |
| ໃຜ | ໃຊ້ແທນຜູ້ໃດ ຫລືຜູ້ໃດຜູ້ໜຶ່ງໄດ້. |
| ຫຍັງ | ໃຊ້ແທນອັນໃດ ຫລືອັນໃດອັນໜຶ່ງໄດ້. |

✍ ຄຳຊີ້ແຈງ: " ກັນ " ໃຊ້ໃນຮູບແບບພະຫູພົດ ເຊັ່ນ ລົດຕຳກັນ; ຊ່ວຍເຫລືອກັນ; ໄປນຳກັນ ຯລຯ

" ໂຕ " ໃຊ້ໃນຮູບແບບເອກະພົດ ເຊັ່ນ ຄົນຂ້າໂຕຕາຍ; ເບິ່ງເພິ່ນເບິ່ງໂຕແດ່ ຯລຯ

" ໃຜ " ແລະ " ຫຍັງ " ແມ່ນຄຳແທນນາມທີ່ໃຊ້ເປັນຄຳຖາມ (ປຸດສາສັບພະນາມ). ແລະເປັນຄຳແທນນາມທີ່ບໍ່ມີກຳນົດແນ່ນອນ (ອະນິຍົມສັບພະນາມ). ພວກມັນມີຄວາມອາດສາມາດກວມເອົາທັງເອກະພົດ ແລະພະຫູພົດ; ພວກມັນຈະຊີ້ບອກພະຫູຈະແຈ້ງກໍຕໍ່ເມື່ອມີ " ແດ່ " ຕາມຫລັງເປັນ " ໃຜແດ່, ຫຍັງແດ່ ".

" ໃຜ " ແມ່ນຄຳແທນນາມ ທີ່ໃຊ້ຄຳນາມຊີ້ບອກຄົນ (ບຸກຄະລານາມ) ແບບທົ່ວໄປທີ່ສຸດ. ສ່ວນວ່າ " ຫຍັງ ແລະ ມັນ " ກໍແມ່ນຄຳແທນນາມທີ່ໃຊ້ແທນຄຳນາມຊະນິດອື່ນ ແບບທົ່ວໄປທີ່ສຸດເຊັ່ນດຽວກັນ.

### 2.1.2 ຄຳນຳໜ້ານາມ

ຄຳນຳໜ້ານາມແມ່ນຄຳທີ່ໃຊ້ຂຽນ ຫລືເວົ້າຂຶ້ນຕົ້ນຊື່ຂອງຄົນ; ຄຳພວກນີ້ມີລັກສະນະຄ້າຍຄືຄຳແທນນາມ ເພາະມັນຂຶ້ນກັບຄວາມນິຍົມຂອງສັງຄົມເປັນຫລັກ, ສັງຄົມເປັນຜູ້ກຳນົດ. ຄຳນຳໜ້ານາມທີ່ຄວນຮູ້ຈັກມີ :

" ພະນະທ່ານ " ໃຊ້ນຳໜ້າຊື່ຄົນທີ່ມີຕຳແໜ່ງສູງເຊັ່ນວ່າ ປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ທູຕານຸທູດ ຯລຯ

" ທ່ານ " ໃຊ້ນຳໜ້າຊື່ຄົນທີ່ມີຕຳແໜ່ງໃດໜຶ່ງໃນສັງຄົມ.

" ທ່ານ ນາງ " ໃຊ້ຄືກັບ " ທ່ານ " ແຕ່ໃຊ້ນຳໜ້າຊື່ແມ່ຍິງ.

" ທ້າວ " ໃຊ້ນຳໜ້າຊື່ຜູ້ຊາຍແບບທາງການ ຫລືສຸພາບ.

" ນາງ " ໃຊ້ນຳໜ້າຊື່ຜູ້ຍິງແບບທາງການ ຫລືສຸພາບ.

" ບັກ " ① ໃຊ້ນຳໜ້າຊື່ເດັກຊາຍ (ພາສາປາກ).
② ໃຊ້ນຳໜ້າຜູ້ຊາຍທີ່ສະໜິດສະໜົມທີ່ສຸດ (ພາສາປາກ).
③ ໃຊ້ນຳໜ້າຊື່ຜູ້ຊາຍນອກວົງ (ພາສາປາກ).

" ອີ " ① ໃຊ້ນຳໜ້າຊື່ເດັກຍິງ (ພາສາປາກ).
② ໃຊ້ນຳໜ້າຊື່ແມ່ຍິງທີ່ສະໜິດສະໜົມທີ່ສຸດ (ພາສາປາກ).
③ ໃຊ້ນຳໜ້າຊື່ແມ່ຍິງນອກວົງ (ພາສາປາກ).

" ໝໍ " ① ໃຊ້ຄືກັນກັບ " ບັກ " ① ແລະ ②

" ຄຳເຄືອຍາດ " ໃຊ້ນຳໜ້າຊື່ຂອງຄົນທີ່ເຫັນວ່າ ຄວນເຄົາລົບນັບຖືແບບຄອບຄົວ.

" (ຖານະນາມ) " ໃຊ້ນຳໜ້າຊື່ຂອງຄົນທີ່ມີຖານະນາມໃນສັງຄົມ.

### 2.1.3 ຄຳສະແດງອາການ

ຄຳສະແດງອາການໃນນີ້ ໝາຍເຖິງຄຳທີ່ຊີ້ບອກການເຄື່ອນໄຫວ ຫລືຄວາມເປັນໄປຂອງຄຳຕົວຕັ້ງໃນປະໂຫຍກ. ຍ້ອນແນວນັ້ນຄຳສະແດງອາການຈຶ່ງຂຶ້ນກັບຄວາມນິຍົມຂອງສັງຄົມ ຫລືຜູ້ໃຊ້; ມັນແມ່ນປາກົດການພ້ອມຄວາມໝາຍຂອງສັບ ຫລືວ່າມະໂນພາບດຽວແຕ່ມີຫລາຍສັບຊີ້ບອກ; ຈະນຳໃຊ້ສັບໃດຊີ້ບອກ ຊ້ຳພັດຂຶ້ນກັບຂອບເຂດຂອງສັງຄົມເປັນຜູ້ກຳນົດໃຫ້ ເຊັ່ນວ່າ

✍ ມະໂນພາບກ່ຽວກັບ " ການບໍ່ມີຊີວິດ ຫລືຫລັບຕາອຳລາໂລກ " ກໍມີຫລາຍສັບຊີ້ບອກ ແລະໃຊ້ຕ່າງກັນໄປຕາມແຕ່ສະຖານະການ ດັ່ງລຸ່ມນີ້:

" ປະລິນິບພານ " ໃຊ້ສະເພາະພະພຸດທະເຈົ້າ ແລະພະອໍລະຫັນເທົ່ານັ້ນ.

" ນິບພານ " ໃຊ້ສະເພາະພະອໍລະຫັນ ຫລືພະເຖລະຊັ້ນສູງເທົ່ານັ້ນ.

" ສຸລະຄົດ, ສະຫວັນນະຄົດ" ໃຊ້ສະເພາະເຈົ້າຊີວິດເທົ່ານັ້ນ.

" ມໍລະນາພາບ " ໃຊ້ສະເພາະພະສົງທົ່ວໄປເທົ່ານັ້ນ.

" ເຖິງແກ່ອະສັນຍະກຳ " ໃຊ້ສະເພາະຜູ້ມີຖານະຕຳແໜ່ງສູງ.

" ເຖິງແກ່ກຳ " ໃຊ້ສະເພາະບຸກຄົນທີ່ມີຖານະຕຳແໜ່ງຮອງລົງມາ.

" ມໍລະນາກຳ " ໃຊ້ສະເພາະບຸກຄົນທົ່ວໄປ.

" ລັບລ່ວງ " ໃຊ້ສະເພາະບຸກຄົນໃນເຄືອຍາດ(ຍາດພີ່ນ້ອງ), ໃຊ້ໃນບົດວັນນະກຳ.

" ເສຍ, ເສຍຊີວິດ" ໃຊ້ສະເພາະບຸກຄົນ ທີ່ມີຜົນງານດີເດັ່ນ.

" ຕາຍ " ໃຊ້ສະເພາະບຸກຄົນນອກວົງ.

" ມຸດມອດ, ມອດມ້ວຍ " ໃຊ້ທົ່ວໄປກັບຄົນທຸລະດັບ ແຕ່ນິຍົມໃຊ້ໃນບົດວັນນະກຳບູຮານ.

໔ ມະໂນພາບກ່ຽວກັບ " ການເອົາອາຫານປ້ອນເຂົ້າປາກ ແລ້ວຫຍ້ຳ ຫລືບໍ່ຫຍ້ຳ ຈາກນັ້ນກໍກືນລົງທ້ອງ " ກໍມີຫລາຍສັບຊີ້ບອກ ເຊັ່ນດຽວກັນ.

" ຮັບປະທານ " ໃຊ້ແບບທາງການ ຫລືໃຊ້ແບບສຸພາບທົ່ວໄປ.

" ກິນ " ໃຊ້ແບບສຸພາບທົ່ວໄປ.

" ສັນ " ໃຊ້ສະເພາະພະສົງສຳມະເນນເທົ່ານັ້ນ.

" ສະເຫວີຍ " ໃຊ້ສະເພາະ ເຈົ້າຊີວິດ ແລະໃຊ້ໃນບົດວັນນະກຳ.

" ຮ່ວມພາເຂົ້າ " ໃຊ້ສະເພາະເວລຮ້ອງຂໍແຂກ ໃຫ້ກຽດແກ່ພວກເຮົາ.

" ຊຸມເຂົ້າ " ໃຊ້ສະເພາະເວລາສະແດງຄວາມເປັນກັນເອງ.

### 2.1.4 ຄຳຂານຕອບ

ຄຳຂານຕອບ ແມ່ນຄຳສະແດງການຕ້ອນຮັບຜູ້ອື່ນ ໃນເວລາພວກເຮົາຖືກຮຽກເອີ້ນ ຫລືວ່າທວງຖາມ; ຈະໃຊ້ຄຳໃດຂານຕອບນັ້ນ ມັນຂຶ້ນກັບຜູ້ທີ່ຮຽກເອີ້ນ ຫລືທວງຖາມເຮົາ.

" ໂດຍ " ① ຄາລະວະຕອບພະສົງ.

② ຜູ້ນ້ອຍຕອບຮັບຜູ້ໃຫຍ່, ໃຊ້ເພື່ອຄວາມສຸພາບຕໍ່ໄປ.

" ເຈົ້າ " ① ໃຊ້ເພື່ອຄວາມສຸພາບຕໍ່ໄປ.

② ໃຊ້ແບບເປັນທາງການ.

" ເອີ, ອື " ① ໃຊ້ໃນກຸ່ມຄົນທີ່ສະໜິດສະໜົມກັນ.

② ໃຊ້ແບບທົ່ວໄປ ຫລືບໍ່ເປັນທາງການ.

### 2.1.5 ຄຳອາລະປະນະ (ຄຳແຮກ ຫລືຄຳຜາລົບ)

ຄຳອາລະປະນະ ແມ່ນຄຳທີ່ພວກເຮົາເວົ້າຂຶ້ນກ່ອນ ຫລືຂຽນຂຶ້ນກ່ອນເນື້ອຄວາມທີ່ຈະເວົ້າ ຫລືຂຽນ. ຈະໃຊ້ຄຳໃດມັນຂຶ້ນກັບຖານະຕຳແໜ່ງຂອງຜູ້ທີ່ເຮົາຈະຂໍໂອກາດເວົ້ານຳນັ້ນ.

" ນ້ອມນະມັດສະການ " ໃຊ້ກັບການຂໍໂອກາດຕໍ່ພະເຖລະຊັ້ນຜູ້ໃຫຍ່.

" ນະມັດສະການ " ໃຊ້ກັບການຂໍໂອກາດຕໍ່ພະສົງທົ່ວໄປ.

" ຮຽນ " ① ໃຊ້ກັບການຂໍໂອກາດຕໍ່ຜູ້ໃຫຍ່ ຫລືຊັ້ນເທິງ.

② ໃຊ້ກັບການຂໍໂອກາດຕໍ່ສາທາລະນະ.

## 2.2 ການໃຊ້ສັບມາດຕະຖານ

ການໃຊ້ສັບມາດຕະຖານ ແມ່ນການໃຊ້ສັບຕ່າງໆໃຫ້ຖືກຕ້ອງ ຕາມຫລັກການຂຽນຂອງໄວຍາກອນລາວໄດ້ວາງອອກ ພ້ອມທັງໃຫ້ຖືກຕ້ອງກັບຄວາມໝາຍຂອງຄຳສັບນັ້ນໆ ໂດຍອີງຕາມປຶ້ມໄວຍາກອນລາວສະບັບຂອງພະແນກສຶກສາສູນກາງ ພິມອອກໃນວັນທີ 22 ມີນາ 1967 ເຊິ່ງແມ່ນທ່ານພູມີ ວົງວິຈິດ ເປັນຜູ້ແຕ່ງ ແລະຮຽບຮຽງຂຶ້ນນັ້ນເປັນຫລັກ. ພ້ອມດຽວກັນນັ້ນກໍຕ້ອງໄດ້ອີງໃສ່ປຶ້ມວັດຈະນານຸກົມ

ລາວທີ່ພວກເຮົາມີແລ້ວເຊັ່ນ ຂອງກະຊວງວັດທະນທຳ ເຊິ່ງແມ່ນທ່ານ ດຣ. ທອງຄຳ ອ່ອນມະນີສອນ ພ້ອມດ້ວຍຄະນະແຕ່ງ ແລະຮຽບຮຽງ ໂດຍເຫັນວ່າອັນໃດມັນເໝາະສົມແລ້ວກໍຄວນໃຊ້.

ເພື່ອເປັນທິດທາງ ແລະປັບປຸງການຂຽນ, ການເວົ້າ ແລະການນຳໃຊ້ພາສາລາວໃຫ້ຖືກຕ້ອງ ແລະ ຄ່ອຍໆເປັນເອກະພາບກັນ ຈຶ່ງຂໍສະເໜີບາງຄຳສັບມາດຕະຖານທີ່ເຫັນວ່າຄວນໃຊ້ ແລະບໍ່ຄວນໃຊ້ດັ່ງນີ້:

| **ສັບທີ່ຄວນໃຊ້** | **ສັບທີ່ບໍ່ຄວນໃຊ້** |
|---|---|
| ສາສະໜາ | ສາດສະໜາ |
| ຊີວະປະຫວັດ | ສີລະປະຫວັດ, ຊີລະປະຫວັດ |
| ຄຸນະພາບ(ຄວາມເປັນຢູ່ຢ່າງດີ) | ຄຸນນະພາບ |
| ຮຸກຮານ(ລ່ວງລຳ້, ລ່ວງກາຍ) | ລຸກລານ |
| ອິບຣິມ(ເຮັດໃຫ້ມີຄວາມຮັບຮູ້ຕື່ມ) | ໂອບລົມ |
| ສັງສັນ(ພິທີສັງສັນ), ຮ່ວມກັນ, ພ້ອມກັນ | ສ້າງສັນ(ຄວາມໝາຍຕ່າງ) |
| ເສດຖະກິດ | ເສຖະກິດ |
| ສຸຂະພາບ(ຄວາມເປັນຢູ່ຂອງຮ່າງກາຍ) | ສຸກຂະພາບ, ສຸກກະພາບ |
| ສິລະປະ(ການສະແດງ) | ສິນລະປະ |
| ປາຖະໜາ(ຄວາມຕັ້ງໃຈໝັ້ນ) | ປາດຖະໜາ |
| ປັດຊະຍາ(ຄວາມຮູ້ແຈ້ງລະອຽດ) | ປາຊະຍາ |
| ໄວຍາກອນ(ຫລັກກຳນົດໃນພາສາ) | ວັຍກອນ, ວະຍະກອນ, ໄວຍະກອນ |
| ຖວາຍ(ມອບໃຫ້, ເຄນໃຫ້) | ຖະຫວາຍ |
| ສູ້ຮົບ(ຕໍ່ສູ້ກັນ, ຕີກັນ) | ສູ້ລົບ |
| ຮັບຮອງ(ຢັ້ງຢືນ, ຮັບຮູ້ນຳ) | ລັບລອງ |
| ຮ້ອຍ(ຈຳນວນທົວຮ້ອຍ) | ລ້ອຍ |
| ອະນຸໂລມ(ຄ້ອຍໄປຕາມ) | ອານຸໂລມ |
| ຂີ້ຮ້າຍ(ບໍ່ງາມ, ບໍ່ເກັ່ງ, ບໍ່ດີ) | ຂີ້ລ້າຍ |
| ສຳຮອງ(ທີສອງ) | ສຳລອງ |
| ອະນາຄົດ(ເວລາທີ່ບໍ່ທັນມາເຖິງ) | ອານາຄົດ |
| ກາຍະບໍລິຫານ(ການບໍລິຫານຮ່າງກາຍ) | ກາຍຍະບໍລິຫານ |
| ສະຕະວັດ(ໜຶ່ງຮ້ອຍປີ) | ສັດຕະວັດ(ມີຄວາມໝາຍອື່ນ) |
| ອຸດສາຫະກຳ(ການຜະລິດດ້ວຍເຄື່ອງຈັກ) | ອຸດສະຫະກຳ |
| ເອກະລັກ(ລັກສະນະສະເພາະຕົວ) | ເອກກະລັກ |
| ເອກະພາບ(ຄວາມເປັນອັນໜຶ່ງອັນດຽວກັນ) | ເອກກະພາບ |
| ອຸປະກອນ(ເຄື່ອງມືໃນວຽກງານໃດໜຶ່ງ) | ອຸບປະກອນ |
| ວາສະໜາ(ການເຄີຍຢູ່ຮ່ວມກັນ, ບຸນກຳ) | ວາດສະໜາ |
| ສາເຫດ(ຕົ້ນເຫດທີ່ເປັນມາ) | ສາຍເຫດ |
| ນະວະນິຍາຍ(ເລື່ອງທີ່ແຕ່ງຂຶ້ນໃນໄລຍະໃໝ່ໆ) | ນາວະນິຍາຍ |

| | |
|---|---|
| ວັດທະນະທຳ(ການຊົງໄວ້ເຊິ່ງຄວາມຈະເລີນ) | ວັດທະນາທຳ |
| ຍຸຕິທຳ(ຄວາມທ່ຽງທຳ) | ຍຸດຕິທຳ |
| ປະຢັດ(ທ້ອນໂຮມໄວ້) | ປະຫຍັດ |
| ໄອຍະການ(ຊື່ຕຳແໜ່ງໜຶ່ງຂອງເຈົ້າໜ້າທີ່ໃນ | ໄອຍາການ |
| ກະຊວງຍຸຕິທຳ | ກະຊວງຍຸດຕິທຳ |
| ອາຍາ(ອຳນາດ, ໂທດ) | ອາດຍາ |
| ຄະດີແພ່ງ(ເລື່ອງກົດໝາຍທາງແພ່ງ) | ຄະດີແຜ່ງ |
| ສັນຊາຕະຍານ(ຄວາມຮູ້ທີ່ມີມາພ້ອມມາແຕ່ມື້ເກີດ) | ສັນຊາດຕະຍານ, ສັນຊາດທະຍານ |
| ສະຫະກອນ(ການຮ່ວມກັນ) | ສະຫາກອນ |
| ສັນຍະລັກ(ເຄື່ອງໝາຍ) | ສັນຍາລັກ |
| ອຸປະກາລະ(ການຊ່ອຍເຫລືອອຸດໜູນ) | ອຸບປະກາລະ |
| ກະຕະເວທີ(ຜູ້ຮູ້ບຸນຄຸນ) | ກະຕາເວທີ |
| ກະຕິກາ(ຂໍ້ຕົກລົງ, ຂໍ້ກຳນົດ) | ກະຕິກາ |
| ສັດຈະທຳ(ຊົງໄວ້ເຊິ່ງຄວາມຈິງ, ຄວາມສັດຊື່) | ສັດຈາທຳ |
| ວິວາຫະມຸງຄຸນ(ງານວິວາ, ການແຕ່ງດອງ) | ວິວາຫາມຸງຄຸນ |
| ລາສະດອນ(ຄົນທົ່ວໄປ) | ລາດສະດອນ, ລາຊະດອນ |
| ຈະລາຈອນ(ການທ່ຽວໄປມາ) | ຈາລະຈອນ |
| ຫັດຖະກຳ(ການຜະລິດດ້ວຍມື) | ຫັດທະກຳ |
| ເຄຫະສະຖານ(ເຮືອນ, ບ່ອນນີ້ໃຊ້ເປັນເຮືອນ) | ເຄຫາສະຖານ) |
| ກຳມາທິການ(ກຳມະການໃຫຍ່) | ກຳມະທິການ |
| ເຈຕະນາ(ຄວາມຕັ້ງໃຈ) | ເຈດຕະນາ |
| ເວທະກຳ(ສະແດງຄວາມຮູ້ສຶກ) | ເວດທະກຳ |
| ສຸຄະຕິ(ທາງດີ, ທາງສະຫວັນ) | ສຸກຂະຕິ, ສຸກຄະຕິ |

## ບົດຄົ້ນຄວ້າ

1. ຈົ່ງຊອກຫາຄຳສັບທີ່ເຫັນວ່າເໝາະສົມ ໃຊ້ຖືກກັບຕຳແໜ່ງໃນສັງຄົມຢ່າງໃດຢ່າງໜຶ່ງ ມາປະກອບກັບຕົວຢ່າງຕາມທີ່ໃຫ້ໄວ້ໃນບົດຮຽນ (ເອົາຄຳສັບອື່ນນອກຈາກບົດຮຽນມີແລ້ວ) ອະທິບາຍຄວາມໝາຍແລະນຳໃຊ້ພ້ອມ.

2. ຈົ່ງຊອກຫາຄຳສັບທີ່ຖືກມາດຕະຖານ ທີ່ເຫັນວ່າຄວນໃຊ້ ແລະບໍ່ຄວນໃຊ້ ມາປະກອບໃສ່ກັບບົດຮຽນນັ້ນໃຫ້ກວ້າງຂວາງອອກຕື່ມ(ໃຫ້ໄດ້ຫລາຍຄຳສັບຕື່ມນອກຈາກສັບທີ່ມີຢູ່ໃນບົດຮຽນແລ້ວ) ໂດຍເລັງໃສ່ຄວາມໝາຍ ແລະຮູບການຂຽນພ້ອມ).

## ບົດທີ 3 ວາກະຍະສຳພັນ

### I. ສະເໜີແນະ

### 1. ຄວາມສຳນຶກກ່ຽວກັບວາກະຍະສຳພັນ

ໂດຍຮູບສັບ, ວາກະຍະສຳພັນແມ່ນຄຳສະໝາດ. ວາກະຍະ(ຄວາມເວົ້າ, ການກ່າວ) ແລະ ສຳພັນ(ຄວາມກ່ຽວຂ້ອງ), ທັງສອງສັບປະສົມເຂົ້າກັນມີຄວາມໝາຍວ່າ ຄວາມກ່ຽວຂ້ອງກັນຂອງຄຳເວົ້າ.

ວາກະຍະສຳພັນ ຖືກບັນຍັດເປັນຊື່ໄວຍາກອນ ພາກທີສາມຂອງໄວຍາກອນລາວ. ໃນແງ່ສາສາດ ວາກະຍະສຳພັນແມ່ນລະບົບການສຳພັນຂອງຄຳໃນກຸ່ມຄຳ. ມັນອາດຄົ້ນຄວ້າເຖິງການປະກອບສ້າງ ຫລືຜູກຄຳ ແລະການວິໄຈສາຍຜູກພັນຂອງຄຳຕ່າງໆທີ່ມີຕໍ່ກັນໃນກຸ່ມຄຳນັ້ນໆ. ເວົ້າລວມແລ້ວມັນມີໜ້າທີ່ວິໄຈການຜູກຄຳ ແລະວິທີຜູກຄຳໃຫ້ເປັນກຸ່ມຄຳ ເພື່ອໃຊ້ພາສາໃຫ້ໄດ້ຕາມຄວາມປະສົງຂອງຜູ້ຊົມໃຊ້ ໃນການສະແດງແນວຄິດຂອງຕົນ ແລະຮູ້ຮັບຟັງການສະແດງແນວຄິດຂອງຄົນອື່ນໄດ້ຢ່າງໃກ້ຄວາມເປັນຈິງທີ່ສຸດ, ເຊັ່ນ ເຮົາມີຄຳວ່າ:

- ຄວາຍ
- ເຈົ້າ

ເພື່ອຢາກສະແດງໃຫ້ຮູ້ວ່າຄວາຍນັ້ນເປັນຄວາຍຂອງເຈົ້າ ບໍ່ແມ່ນຄວາຍຂອງຄົນອື່ນ, ເຮົາກໍຜູກຄຳເຫລົ່ານັ້ນເຂົ້າກັນເປັນກຸ່ມ:

- ຄວາຍເຈົ້າ
- ຫລື
- ຄວາຍຂອງເຈົ້າ

ກຸ່ມຄຳປະເພດນີ້ ເຮົາຮຽກວ່າ ວະລີ.

ຫລືເຮົາມີຄຳ:

- ຄວາຍ
- ສວນ
- ລຸງສາ
- ເຂົ້າ
- ເຈົ້າ

ເຮົາອາດປະກອບເຂົ້າກັນ ສະແດງເຫດການຕ່າງໆ ຕາມຈຸດປະສົງໄດ້:

- ຄວາຍເຈົ້າເຂົ້າສວນລຸງສາ.
- ຄວາຍລຸງສາເຂົ້າສວນເຈົ້າ.
- ສວນເຈົ້າ, ຄວາຍລຸງສາເຂົ້າ...

ກຸ່ມຄຳປເພດນີ້ ເຮົາຮຽກວ່າ ປະໂຫຍກ.

ເມື່ອເປັນແນວນັ້ນ, ໜ້າທີ່ຕົ້ນຕໍຂອງວາກະຍະສຳພັນ ກໍແມ່ນການຄົ້ນຄວ້າຫຼັກການສຳພັນຂອງຄຳ ແລະຮູບການສະແດງອອກຂອງກຸ່ມຄຳ. ກຸ່ມຄຳໃນໄວຍາກອນລາວ ມີສອງປະເພດຄື ວະລີ ແລະປະໂຫຍກ. ດັ່ງນັ້ນ, ເປົ້າໝາຍການຄົ້ນຄວ້າຂອງວິຊາວາກະຍະສຳພັນຈຶ່ງແມ່ນວະລີ ແລະປະໂຍຫກ.

## 2. ຊະນິດສາຍສຳພັນວາກະຍະສຳພັນ

ເມື່ອສຶກສາເບິ່ງການພົວພັນຂອງຄຳໃນກຸ່ມຄຳ ໂດຍທົ່ວໄປແລ້ວ, ເພິ່ນສະຫລຸບການສຳພັນວາກະຍະສຳພັນມີຢູ່ສາມຊະນິດຄື ການສຳພັນແບບໂຕຕົ້ນຕໍ-ໂຕສຳຮອງ, ການສຳພັນແບບສະເໝີພາກ ແລະການສຳພັນແບບໂຕຕັ້ງ-ໂຕສຳແດງ.

### 2.1 ການສຳພັນວາກະຍະສຳພັນແບບໂຕຕົ້ນຕໍ-ໂຕສຳຮອງ

ການສຳພັນແບບນີ້ ແມ່ນການສຳພັນຄຳໜຶ່ງເປັນຫລັກ, ສ່ວນຄຳອື່ນໃນກຸ່ມຄຳນັ້ນເປັນຄຳສຳຮອງ.

ເພື່ອຢາກສຳຫລວດວ່າ ຄຳໃດເປັນຄຳຕົ້ນຕໍ, ຄຳໃດເປັນຄຳສຳຮອງ, ເຮົານຳເອົາກຸ່ມຄຳນັ້ນເຂົ້າໄປນອນໃນກຸ່ມຄຳທີ່ໃຫຍ່ກວ່າມັນ. ຢູ່ໃນການເຄື່ອນໄຫວ, ຄຳຕົ້ນຕໍ(ຄຳຫລັກ) ຈະໄປພົວພັນກັບຄຳອື່ນ; ສ່ວນຄຳທີ່ເປັນໂຕສຳຮອງນັ້ນ ບໍ່ມີສິດໄປພົວພັນກັບຄຳອື່ນໄດ້, ມັນພຽງແຕ່ເປັນຄຳຂະຫຍາຍໃຫ້ໂຕຕົ້ນຕໍເຊັ່ນວ່າ ເຮົາຢາກສຳຫລວດເບິ່ງກຸ່ມຄຳທີ່ເປັນວະລີ: ໝາຂອງຂ້ອຍ ວ່າຄຳໃດເປັນໂຕສຳຮອງ ແລະຄຳໃດເປັນໂຕຕົ້ນຕໍ ເຮົາກໍເອົາກຸ່ມຄຳນີ້ເຂົ້າໄປນອນຢູ່ໃນກຸ່ມຄຳທີ່ໃຫຍ່ກວ່າມັນຄື ປະໂຫຍກ.

ຕົວຢ່າງ: **ໝາຂອງຂ້ອຍຂົບໝູເຈົ້າ**

ເຮົາຈະເຫັນວ່າ, ໃນປະໂຫຍກນີ້ມີແຕ່ <u>ໝາ</u> ເທົ່ານັ້ນທີ່ໄປພົວພັນກັບ <u>ຂົບ</u> ສ່ວນ <u>ຂ້ອຍ</u> ພຽງແຕ່ຊີ້ບອກຄວາມເປັນເຈົ້າຂອງຂອງໝາເທົ່ານັ້ນ. ຈາກນັ້ນ, ເຮົາຈຶ່ງສາມາດເວົ້າໄດ້ວ່າ ຢູ່ໃນກຸ່ມຄຳນີ້(ໝາຂອງຂ້ອຍ) ໝາ ເປັນໂຕຕົ້ນຕໍ, ສ່ວນຂ້ອຍເປັນໂຕສຳຮອງ ຫລືງ່າຍໄປກວ່ານັ້ນ, ເຮົາອາດສຳຫລວດໄດ້ດ້ວຍການໃຊ້ຄຳນິຍົມຄຸນນາມ(ຄຳຄຸນນາມບົ່ງຊີ້): ນີ້, ນັ້ນ ເຂົ້າໄປກຳນົດ. ກຸ່ມຄຳທີ່ສາມາດໃຊ້ຄຳນິຍົມຄຸນນາມຢູ່ທ້າຍໄດ້ ກຸ່ມນັ້ນແມ່ນວະລີ ແລະຄຳນິຍົມຄຸນນາມບົ່ງຊີ້ຄຳໃດ ຄຳນັ້ນເປັນຄຳຕົ້ນຕໍ, ສ່ວນຄຳອື່ນໆລ້ວນແຕ່ເປັນໂຕສຳຮອງ(ໃນກໍລະນີນາມວະລີ).

| ຕົວຢ່າງ: | ① | ② |
|---|---|---|
| | - ໄກ່ຂາວ | ໝາຂອງຂ້ອຍ |
| | - ໄກ່ຂາວນີ້ | ໝາຂອງຂ້ອຍນີ້ |
| | - ໄກ່ຂາວໂຕນີ້ | ໝາຂອງຂ້ອຍໂຕນີ້ |
| | - ໄກ່ສີຂາວໂຕນີ້ | ໝາຂອງຂ້ອຍທີ່ແມ່ຕູ້ໃຫ້ນີ້ |

**ໝາຍບອກ**: ຄຳ " ນີ້ " ໃນກຸ່ມຄຳຕ່າງໆຂ້າງເທິງນີ້ ລ້ວນແຕ່ກຳນົດຄຳຫລັກ "ໄກ່ " ແລະ "ໝາ" ສ່ວນວ່າ: ສີຂາວໂຕ ແມ່ນຄຳສຳຮອງໃຫ້ແກ່ການເຮັດວຽກ ເຊິ່ງມີໜ້າທີ່ຂະຫຍາຍຄຳວ່າ ໄກ່; <u>ຂອງຂ້ອຍ</u> <u>ທີ່ແມ່ຕູ້ໃຫ້</u> ແມ່ນຄຳສຳຮອງໃຫ້ຄຳຫລັກ <u>ໝາ</u>, ເຮັດໜ້າທີ່ຂະຫຍາຍ <u>ໝາ</u> ທີ່ເປັນໂຕຕົ້ນຕໍໃນກຸ່ມຄຳ.

## 2.2 ການສຳພັນວາກະຍະສຳພັນແບບສະເໝີພາກ

ສາຍພົວພັນແບບນີ້ຕ່າງຈາກການສຳພັນວາກະຍະສຳພັນໃນຂໍ້ 2.1, ກຸ່ມຄຳທີ່ສ້າງຂຶ້ນດ້ວຍສາຍສຳພັນແບບສະເໝີພາກ ແມ່ນກຸ່ມຄຳທີ່ທັງສອງຄຳ ຫລືຫລາຍຄຳໃນກຸ່ມຄຳນັ້ນ ມີຄວາມເທົ່າທຽມກັນດ້ານໜ້າທີ່ໄວຍາກອນ. ຄວາມສະເໝີພາກຂອງພວກມັນໃນກຸ່ມຄຳນີ້ສະແດງອອກໃຫ້ເຫັນ ໂດຍທີ່ເຮົາສາມາດແຊກຄຳຕໍ່(ສັນທານ) ທີ່ບອກຄວາມເທົ່າທຽມກັນຄື " ແລະ, ກໍຄື... " ເຂົ້າລະຫວ່າງການຄຳເຫລົ່ານັ້ນໄດ້.

ຕົວຢ່າງ: ຄູນັກຮຽນ, ພໍ່ແມ່, ທະຫານຕຳຫລວດ... ເຮົາສາມາດແຊກຄຳ " ແລະ " ເຂົ້າລະຫວ່າງກາງ: ຄູ ແລະນັກຮຽນ, ພໍ່ ແລະແມ່, ທະຫານ ແລະຕຳຫລວດ.

ດ້ານໜຶ່ງ, ເຮົາສຳຫລວດເບິ່ງຄວາມສະເໝີພາກນີ້ ໂດຍການນຳເອົາກຸ່ມຄຳປະເພດນີ້ເຂົ້າໄປນອນຢູ່ໃນກຸ່ມຄຳທີ່ໃຫຍ່ກວ່າມັນຄື ປະໂຫຍກ. ເມື່ອໜຶ່ງໃນສອງ ຫລືໃນຫລາຍຄຳຂອງກຸ່ມຄຳນີ້ເຮັດໜ້າທີ່ເປັນອັນໃດ ອັນອື່ນໆກໍເປັນອັນນັ້ນນຳ.

ຕົວຢ່າງ: ກຸ່ມຄຳ <u>ພໍ່ແມ່</u> ໃນປະໂຫຍກ: <u>ພໍ່ແມ່ຮັກລູກລູກ</u>. ໃນປະໂຫຍກນີ້ <u>ພໍ່</u> ທຳໜ້າທີ່ເປັນໂຕຕັ້ງໃນປະໂຫຍກ; <u>ແມ່</u> ກໍເຮັດໜ້າທີ່ດຽວກັນກັບ<u>ພໍ່</u> ຄືທັງສອງຄຳນັ້ນເປັນຄຳຕົວຕັ້ງດ້ວຍກັນແລະໃນປະໂຫຍກ <u>ລູກລູກກໍຮັກພໍ່ແມ່</u> ເຊັ່ນດຽວກັນ. <u>ພໍ່</u> ໃນປະໂຫຍກນີ້ເຮັດໜ້າທີ່ເປັນໂຕປະກອບ, ແມ່ກໍເປັນໂຕປະກອບຄືກັນ.

## 2.3 ການສຳພັນວາກະຍະສຳພັນແບບໂຕຕັ້ງ-ໂຕສຳແດງ

ການສຳພັນແບບນີ້ ທັງສອງພາກສ່ວນທີ່ປະກອບຢູ່ໃນກຸ່ມຂຶ້ນກັບກັນ; ໂຕໜຶ່ງຄືງໂຕຢູ່ໄດ້ກໍຍ້ອນອາໄສໂຕທີສອງ ແລະໂຕທີສອງຄືງໂຕຢູ່ໄດ້ກໍຍ້ອນໂຕທີ່ໜຶ່ງ ເຊິ່ງບໍ່ອາດສາມາດຂາດກັນໄດ້.

ຕົວຢ່າງ: <u>ແມ່ນອນ</u> ຖ້າຂາດ <u>ນອນ</u> ຍັງແຕ່ <u>ແມ່</u> ຫລືຂາດ <u>ແມ່</u> ຍັງແຕ່ <u>ນອນ</u> ສາຍພົວພັນນີ້ກໍຖືກສະຫລາຍ.

### ຄຳຖາມຄົ້ນຄວ້າ

1. ການພົວພັນວາກະຍະສຳພັນຂອງກຸ່ມຄຳ AB ໃນນີ້ B ຂຶ້ນກັບ A ເຊິ່ງອາດຂຽນເປັນຜັງດັ່ງນີ້: A ⟵ B ຕົວຢ່າງ: ນ້ອງຂ້ອຍ ແມ່ນການສຳພັນວາກະຍະສຳພັນແບບໃດ? ຈົ່ງຍົກຕົວຢ່າງອື່ນມາປະກອບຈັກສາມກຸ່ມຄຳ ໃນການສຳພັນແບບນີ້.

2. ການສຳພັນຂອງກຸ່ມຄຳ AB ໃນນັ້ນລະຫວ່າງ A ແລະ B ທັດທຽມກັນ ເຊິ່ງອາດຂຽນເປັນຜັງດັ່ງນີ້: A = B ຕົວຢ່າງ: ທະຫານຕຳຫລວດ ແມ່ນການສຳພັນວາກະຍະສຳພັນແບບໃດ? ຈົ່ງໃຫ້ເຫດຜົນ.

3. ການສຳພັນວາກະຍະສຳພັນຂອງກຸ່ມຄຳ AB ໃນນັ້ນ A ຄືງໂຕຢູ່ໄດ້ຍ້ອນອາໄສ B, ກົງກັນຂ້າມ B ຄືງໂຕຢູ່ໄດ້ຍ້ອນ A ເຊິ່ງອາດຂຽນເປັນຜັງໄດ້ດັ່ງນີ້: A ⟷ B ຕົວຢ່າງ <u>ນົກບິນ</u> ແມ່ນການສຳພັນວາກະຍະສຳພັນແບບໃດ? ອະທິບາຍ.

### ແບບເຝິກຫັດ

✍ ຈົ່ງບອກກຸ່ມຄຳຕ່າງໆຕໍ່ໄປນີ້ວ່າ ແຕ່ລະກຸ່ມຄຳນອນໃນສາຍສຳພັນວາກະຍະສຳພັນຊະນິດໃດ?

- ນັກສຶກສາມະຫາວິທະຍາໄລແຫ່ງຊາດ.
- ຄະດີລັກລົດຈັກ.
- ວຽກງານຄຸ້ມຄອງນັກສຶກສາ.

- ກະຊວງສຶກສາທິການກັບກະຊວງວັດທະນະທຳ.

- ອາຈານ, ພະນັກງານ ແລະນັກສຶກສາ.

- ລົດຈັກຕຳກັນ.

- ອາຈານ, ພະນັກງານ ແລະນັກສຶກສາຮ່ວມກັນຈັດຕັ້ງສະເຫລີມສະຫລອງວັນຄູແຫ່ງຊາດ.

## II. ວະລີ(Phrase)

### 1. ຄວາມສຳນຶກກ່ຽວກັບວະລີ

ວະລີແມ່ນກຸ່ມຄຳຊະນິດໜຶ່ງ ເຊິ່ງປະກອບຂຶ້ນຈາກຄຳແຕ່ສອງຄຳຂຶ້ນໄປ ຕາມຫລັກສຳພັນວາກະຍະສຳພັນແບບໂຕຕົ້ນຕໍ-ໂຕສຳຮອງ ຫລືແບບສະເໝີພາກ.

ລະດັບຄວາມສັ້ນຍາວຂອງວະລີບໍ່ຈຳກັດ. ບາງວະລີກໍມີແຕ່ສອງຄຳ: ອ້າຍເອື້ອຍ ໄກ່ນ້ອຍ, ພໍ່ແມ່ ບາງວະລີກໍປະກອບດ້ວຍຫລາຍຄຳ: ໝາດຳຂອງຂ້ອຍທີ່ລຸງໃຫ້; ປະຊາຊົນລາວ, ຕຳຫລວດຊາຍແດນ ແລະຄູອາຈານ,...

### 2. ການຈັດແບ່ງຊະນິດວະລີ

ວະລີມີສອງປະເພດຄື ວະລີຄົງໂຕ ແລະວະລີເສລີ. ວະລີຄົງໂຕແມ່ນວະລີທີ່ປ່ຽນຈາກວະລີເສລີ ຈົນບໍ່ສາມາດຈຳແນກໄດ້ກັບຄຳປະສົມ ຕົວຢ່າງ: ສັນນັ້ນ, ດັ່ງນັ້ນ, ແນວໃດ... ວະລີປະເພດນີ້ພວກເຮົາຈະບໍ່ຄົ້ນຄວ້າໃນທີ່ນີ້; ສ່ວນຄຳວ່າວະລີເສລີ ແມ່ນວະລີທີ່ຍັງຮັກສາຮູບແບບຂອງການສຳພັນວາກະຍະສຳພັນວາກະຍະສຳພັນຂອງຕົນໄວ້ຢ່າງຈະແຈ້ງຄື ເງິນຂອງລາວ, ອາຈານແລະນັກສຶກສາ, ທະຫານກັບຕຳຫລວດ... ໃນທີ່ນີ້ພວກເຮົາຈະລົງເລິກຄົ້ນຄວ້າວະລີປະເພດຫລັງນີ້.

ອີງໃສ່ຄຳທີ່ເປັນໂຕຕົ້ນຕໍໃນກຸ່ມ, ພວກເຮົາອາດຈັດວະລີອອກເປັນຊະນິດຕົ້ນຕໍຄື ນາມວະລີ, ຄຳແທນນາມວະລີ(ສັບພະນາມວະລີ) ກຳມະວະລີ(ກິລິຍາວະລີ), ຄຸນນາມວະລີ(ຄຸນສັບວະລີ).

#### 2.1 ນາມວະລີ

ນາມວະລີ ແມ່ນກຸ່ມຄຳທີ່ໂຕຕົ້ນຕໍໃນກຸ່ມຄຳແມ່ນຄຳນາມ.

ຕົວຢ່າງ:
- ນັກສຶກສາປີທີໜຶ່ງ.
- ວິທະຍາໄລວິທະຍາສາດພື້ນຖານ.
- ສົມບັດຂອງໂຮງຮຽນ.
- ໂຮງຮຽນ ແລະບ້ານ.
- ລົດຈັກກັບລົດໃຫຍ່.

#### 2.2 ຄຳແທນນາມວະລີ(ສັບພະນາມວະລີ)

ຄຳແທນນາມວະລີ ແມ່ນກຸ່ມຄຳທີ່ໂຕຕົ້ນຕໍໃນກຸ່ມຄຳແມ່ນຄຳແທນນາມ.

ຕົວຢ່າງ:
- ພວກທ່ານທັງຫລາຍ.
- ພວກຂ້າພະເຈົ້າທັງໝົດ.
- ຂ້ອຍ ແລະເຈົ້າ.

ຂໍ້ ເ59

2.3 ຄຳກຳມະວະລີ(ກິລິຍາວະລີ)

ກຳມະວະລີ ແມ່ນກຸ່ມຄຳທີ່ໂຕຕົ້ນຕໍໃນກຸ່ມຄຳແມ່ນຄຳກຳມະ.

ຕົວຢ່າງ: - ຮຽນໜັງສື.

- ໄປຫໍສະໝຸດແຫ່ງຊາດ.
- ຄົ້ນຄວ້າ ແລະແກ້ບົດຝຶກຫັດ.

2.4 ຄຸນນາມວະລີ(ຄຸນສັບວະລີ)

ຄຸນນາມວະລີ ແມ່ນກຸ່ມຄຳທີ່ໂຕຕົ້ນຕໍໃນກຸ່ມຄຳແມ່ນຄຳຄຸນນາມ.

ຕົວຢ່າງ: - ງາມປານນາງສາວອາພອນລາວ.

- ສະຫລາດຈົນບໍ່ຮູ້ຊິເວົ້າ.
- ຫວານອີ່ຫລີ.

## III. ປະໂຫຍກ(Sentence)

### 1. ມະໂນພາບກ່ຽວກັບປະໂຫຍກ

ປະໂຫຍກແມ່ນຄຳ ຫລືກຸ່ມຄຳທີ່ຄົບຖ້ວນທາງດ້ານໂຄງສ້າງ ແລະເອກະລາດທາງດ້ານເນື້ອໃນ; ໂດຍທົ່ວໄປ, ປະໂຫຍກແມ່ນກຸ່ມຄຳຊະນິດໜຶ່ງທີ່ສ້າງຂຶ້ນບົນພື້ນຖານ ຫລັກສຳພັນວາກະຍະສຳພັນແບບໂຕຕັ້ງ-ໂຕສະແດງ.

### 2. ພາກສ່ວນຫລັກຂອງປະໂຫຍກ

ພາກສ່ວນຫລັກຂອງປະໂຫຍກ, ໂດຍທົ່ວໄປແລ້ວ ມີຢູ່ສອງພາກສ່ວນໃຫຍ່ຄື ໂຕຕັ້ງ ແລະ ໂຕສຳແດງ; ໃນບາງກໍລະນີໂຕສຳແດງຕ້ອງການໂຕປະກອບທີ່ຈຳເປັນອີກ.

ໂຕຕັ້ງ(Subject) ແມ່ນໂຕທີ່ຍົກຂຶ້ນມາກ່ອນ ເພື່ອໃຫ້ໂຕສຳແດງບົ່ງຊີ້ຄຸນລັກສະນະ, ສະພາບ, ອາການ ຫລືການກະທຳ.

ໂຕສຳແດງ(Predicate) ແມ່ນໂຕສະແດງ(ຊີ້ບອກ) ຄຸນລັກສະນະ, ສະພາບ, ອາການ ຫລືການກະທຳຂອງໂຕຕັ້ງ, ລະຫວ່າງໂຕຕັ້ງ ແລະໂຕສຳແດງມີສາຍພົວພັນແບບຂຶ້ນກັບກັນ.

ຕົວຢ່າງ ① ໄກ່ໂຕນີ້ ງາມຫລາຍ.
(ໂຕຕັ້ງ) (ໂຕສຳແດງ)

② ລາວ ໂສກເສົ້າຫລາຍ ສອງສາມມື້ນີ້.
(ໂຕຕັ້ງ) (ໂຕສຳແດງ)

③ ລາວ ເປັນຫົວໜ້າຫ້ອງ ແຕ່ມື້ເລີ່ມຕົ້ນຮຽນ
(ໂຕຕັ້ງ) (ໂຕສຳແດງ)

④ ນັກສຶກສາຫ້ອງເຮົາ ຄົ້ນຄວ້າ ບົດຮຽນ ຢ່າງບໍ່ຮູ້ອິດເມື່ອຍ.
(ໂຕຕັ້ງ) (ໂຕສຳແດງ) (ໂຕປະກອບ)

**ສັງເກດ:** ປະໂຫຍກ ① ໂຕສຳແດງບອກຄຸນລັກສະນະຂອງໂຕຕັ້ງ, ປະໂຫຍກ ② ບອກອາການ. ປະໂຫຍກ ③ ບອກພາວະ ແລະປະໂຫຍກ ④ ບອກການກະທຳ.

ໂຕປະກອບ(Object) ແມ່ນພາກສ່ວນທີ່ຈຳເປັນສຳລັບໂຕສຳແດງບາງໂຕ ມັນມີການສຳພັນແບບຕົ້ນຕໍ-ສຳຮອງກັບຄຳທີ່ກຳນົດເປັນໂຕສຳແດງ ໃນນັ້ນມັນເປັນໂຕສຳຮອງ. ມັນແມ່ນຄຳຕອບຄຳຖາມ: ເຮັດຫຍັງ? ຈາກໂຕສຳແດງ.

ຕົວຢ່າງ ນັກສຶກສາ ຄົ້ນຄວ້າ ບົດຮຽນ

(ໂຕປະກອບ)

ນັກສຶກສາເຮັດຫຍັງ?

ສັງລວມ, ພາກສ່ວນຫລັກຂອງປະໂຫຍກມີສອງພາກສ່ວນຄື ໂຕຕັ້ງ ແລະ ໂຕສຳແດງ.

ຕົວຢ່າງ ພວກເຮົາ ພັກຜ່ອນ

(ໂຕຕັ້ງ) (ໂຕສຳແດງ)

ບາງປະໂຫຍກ, ໂຕສຳແດງຕ້ອງການໂຕປະກອບອີກ, ມັນຈຶ່ງມີສາມພາກສ່ວນຄື ໂຕຕັ້ງ, ໂຕສຳແດງ ແລະໂຕປະກອບ.

ຕົວຢ່າງ ນັກສຶກສາ ພວມຈົດ ບົດຮຽນ

(ໂຕຕັ້ງ) (ໂຕສຳແດງ) (ໂຕປະກອບ)

### 3. ພາກສ່ວນແອ້ມຂອງປະໂຫຍກ

ພາກສ່ວນແອ້ມ ໝາຍເອົາພາກສ່ວນທີ່ປະກອບໃຫ້ໂຄງຫລັກປະໂຫຍກ ແລະສ່ວນໃດສ່ວນໜຶ່ງຂອງໂຄງຫລັກຂອງປະໂຫຍກ, ລຳພັງແຕ່ໂຄງຫລັກຂອງປະໂຫຍກຈະບໍ່ໃຫ້ຄວາມກະຈ່າງແຈ້ງ ຕາມທີ່ຢາກເວົ້າໄດ້ໝົດ. ດັ່ງນັ້ນ, ມັນຈຶ່ງຈຳເປັນຕ້ອງມີຄຳເສີມຕື່ມຈຳນວນໜຶ່ງ. ຄຳເສີມເຫລົ່ານັ້ນເອີ້ນວ່າ ພາກສ່ວນແອ້ມ. ພາກສ່ວນແອ້ມມີຢູ່ 3 ພາກສ່ວນຄື ຄຳວິເສດ, ຄຳກຳກັບ ແລະຄຳຂະຫຍາຍ.

#### 3.1 ຄຳວິເສດ

ຄຳວິເສດ ແມ່ນຄຳທີ່ສະແດງສະພາບລວມຂອງໂຄງຫລັກປະໂຫຍກທາງດ້ານເວລາ, ສະຖານທີ່, ຈຸດປະສົງ, ພາຫະນະ,... ແຫ່ງຄວາມເປັນໄປຂອງປະໂຫຍກ.

##### 3.1.1 ຄຳວິເສດບອກເວລາ

ຄຳວິເສດປະເພດນີ້ ບອກເວລາແຫ່ງຄວາມເປັນໄປຂອງປະໂຫຍກ. ເຮົາອາດຕັ້ງຄຳຖາມຂຶ້ນວ່າການເປັນໄປແຫ່ງສະພາບຂອງໂຕປະໂຫຍກນັ້ນ ເວລາໃດ, ຍາມໃດ, ເມື່ອໃດ,... ເພື່ອຊີ້ເຖິງເວລາ.

ຕົວຢ່າງ - ອີກສອງເດືອນ, ໂຮງຮຽນຈຶ່ງຈະອັດປີຮຽນ.

ອາດຕັ້ງຄຳຖາມ: ອີກເທິງປານໃດ ໂຮງຮຽນຈຶ່ງຈະອັດປີຮຽນ?

(ອີກສອງເດືອນ)

- ຫົວໜ້າຫ້ອງການຄຸ້ມຄອງນັກສຶກສາ ຈະມາໂອ້ລົມຫ້ອງພວກເຮົາໃນທ້າຍເດືອນນີ້.

ອາດຕັ້ງຄຳຖາມ: ຫົວໜ້າຫ້ອງການ¬¬ ຈະມາໂອ້ລົມຫ້ອງພວກເຮົາເວລາໃດ?

(ໃນທ້າຍເດືອນນີ້)

##### 3.1.2 ຄຳວິເສດບອກສະຖານທີ່

ມັນແມ່ນຄຳ ຫລືກຸ່ມຄຳບອກສະຖານທີ່ ທີ່ໂຕປະໂຫຍກດຳເນີນຢູ່. ຄຳວິເສດຊະນິດນີ້ມັນແມ່ນຄຳຕອບທີ່ອາດຕອບຕໍ່ຄຳຖາມເຫລົ່ານີ້: ຢູ່ໃສ, ບ່ອນໃດ, ຢູ່ບໍລິເວນໃດ, ...

ຕົວຢ່າງ ເພິ່ນຈະຈັດສຳມະນາຂຶ້ນຢູ່ຫ້ອງເບີ 5

ອາດຕັ້ງຄຳຖາມ: ເພິ່ນຈັດຕັ້ງສຳມະນາຂຶ້ນຢູ່ໃສ?

ອາດຕອບໄດ້ວ່າ: ເພິ່ນຈັດຕັ້ງສຳມະນາຂຶ້ນຢູ່ຫ້ອງເບີ 5

ດັ່ງນັ້ນ, ຄວາມວ່າ ຢູ່ຫ້ອງເບີ 5 ຈຶ່ງແມ່ນຄຳວິເສດບອກສະຖານທີ່ຢູ່ໃນປະໂຫຍກ.

**3.1.3 ຄຳວິເສດບອກສາເຫດ**

ຄຳວິເສດຊະນິດນີ້ ມັກໃຊ້ຄຳເຊື່ອມບອກສາເຫດນຳໜ້າ ເຊັ່ນ ຍ້ອນ, ເພາະ, ຄອບ,... ຄຳວິເສດຊະນິດນີ້ ແມ່ນຄຳຕອບຂອງຄຳຖາມ: ຍ້ອນອີ່ຫຍັງ, ເພາະຫຍັງ, ຄອບໃຜ...

ຕົວຢ່າງ - ເຂົາຜິດກັນ ຄອບເຈົ້າ.

(ຄອບໃຜ)

- ຍ້ອນໝູ່ຄູ່ ລາວຈຶ່ງເສັງໄດ້.

(ຍ້ອນໃຜ)

**3.1.4 ຄຳວິເສດບອກຈຸດປະສົງ**

ຄຳວິເສດບອກຈຸດປະສົງ ແມ່ນຄຳວິເສດທີ່ເປັນຄຳຕອບຂອງຄຳຖາມ: ເພື່ອຫຍັງ, ເພື່ອໃຜ, ເພື່ອອັນໃດ,... ຄຳວິເສດຊະນິດນີ້ ຍາມໃດກໍມີຄຳເຊື່ອມບອກຈຸດປະສົງຕິດຕາມໄປສະເໝີ. ຄຳເຊື່ອມບອກຈຸດປະສົງທີ່ມັກໄປກັບມັນແມ່ນ: ເພື່ອ, ແກ່, ສຳລັບ,...

ຕົວຢ່າງ - ເພື່ອອະນາຄົດ, ພວກເຮົາຕ້ອງຕັ້ງໜ້າສຶກສາຮ່ຳຮຽນ.

(ເພື່ອຫຍັງ)

- ອ້າຍເຮັດດ້ວຍຄວາມລຳບາກກາກກຳເພື່ອນ້ອງ.

(ເພື່ອໃຜ)

**3.1.5 ຄຳວິເສດບອກພາຫະນະ**

ຄຳວິເສດບອກພາຫະນະ ແມ່ນຄຳວິເສດທີ່ໄດ້ມາຈາກຄຳຕອບຂອງຄຳຖາມ: ດ້ວຍອັນໃດ, ດ້ວຍອີ່ຫຍັງ, ໂດຍອັນໃດ,...

ຕົວຢ່າງ - ດ້ວຍປືນກະບອກນີ້, ເຂົາດັບສູນສັດຕູໄດ້ນັບສິບ.

(ດ້ວຍອັນໃດ)

- ລາວຫຽວຮຽນ ດ້ວຍຈິດສ່ວນຕົວ.

(ດ້ວຍອີ່ຫຍັງ)

- ໝູ່ຂອງຂ້ອຍໄປຕ່າງປະເທດ ໂດຍທາງອາກາດ.

(ໂດຍອັນໃດ)

A BC.

3.1.6 ຄຳວິເສດບອກວິທີການ

ຄຳວິເສດຊະນິດນີ້ ໄດ້ມາຈາກຄຳຕອບຂອງຄຳຖາມ: ໂດຍວິທີໃດ, ຄືແນວໃດ, ຢ່າງໃດ, ແບບໃດ..

ຕົວຢ່າງ - ນາຍົກລັດຖະມົນຕີ ເດີນທາງໄປ ສ.ສ. ຫວຽດນາມ ຢ່າງເປັນທາງການ.

(ແບບໃດ)

- ລັດຖະມົນຕີກະຊວງສຶກສາທິການ ເດີນທາງໄປຢ້ຽມຢາມຟີລິບປິນ ຕາມຄຳເຊີນ.

(ຄືແນວໃດ)

3.2 ຄຳກຳກັບ

ຄຳກຳກັບ ຫລືອາດເວົ້າຢ່າງໜຶ່ງວ່າ ຄຳຈຳນຳ ມັນແມ່ນຄຳທີ່ຢູ່ນອກໂຄງຫລັກຂອງປະໂຫຍກ ເຊິ່ງຖືກຍົກຂຶ້ນມາເພື່ອໄຂສາກການດຳເນີນໄປຂອງປະໂຫຍກ ຫລືຍ້ຳທ້າຍປະໂຫຍກ. ມັນແມ່ນຄຳໃດຄຳໜຶ່ງໂດຍກົງໃນໂຄງຫລັກຂອງປະໂຫຍກ ຫລືອາດແມ່ນຮູບແບບຂອງການຕີລາຄາຕໍ່ກັບສ່ວນໃດໜຶ່ງຂອງ

ປະໂຫຍກ. ແຕ່ໃນບາງກໍລະນີ, ມັນກໍບໍ່ແມ່ນຄໍາທີ່ຢູ່ໃນໂຄງຫລັກ ຫາກແຕ່ວ່າມັນເປັນໂຕແທນເພື່ອຄວາມເຂົ້າໃຈຕໍ່ໂຄງຫລັກຂອງປະໂຫຍກ. ຄໍາປະເພດນີ້ມີສາຍພົວພັນວາກະຍະທຽມ ເມື່ອສໍາພັນກັບໂຄງຫລັກປະໂຫຍກ. ຄໍາກໍາກັບມີຢູ່ສອງປະເພດຄື ຄໍາແຣກ ແລະຄໍາຢໍ້າ.

### 3.2.1 ຄໍາແຣກ

ຄໍາແຣກ ແມ່ນຄໍາທີ່ຍົກຂຶ້ນໜ້າໂຄງຫລັກຂອງປະໂຫຍກ.

ຕົວຢ່າງ - ບ້ານເຮົາ, ຂ້າພະເຈົ້າເຫັນວ່າ ເວລານີ້ສະພາບການສະຫງົບດີ.

- ຄວາມຈິງ, ສາຍພົວພັນລະຫວ່າງເຮົາທັງສອງ ຍັງປົກກະຕິຄືເກົ່າຄືຫລັງ.
- ເວົ້າແທ້, ໄພທໍາມະຊາດທີ່ອຸບັດຂຶ້ນໃນທ້າຍປີ 2004 ມັນຮ້າຍແຮງພິລຶກ.

### 3.2.1 ຄໍາຢໍ້າ

ຄໍາຢໍ້າ ແມ່ນຄໍາທີ່ຢູ່ທ້າຍປະໂຫຍກ, ແມ່ນຄໍາສັງຮອມຈາກການຕີລາຄາສະພາບທີ່ດໍາເນີນຢູ່ໃນປະໂຫຍກ ຫລືບໍ່ກໍຢໍ້າຄືນຄໍາໃດຄໍາໜຶ່ງໃນພາກສ່ວນຫລັກຂອງປະໂຫຍກ.

ຕົວຢ່າງ - ເຂົາອາດຈະກິນຢາຕາຍກ່ອນເລື່ອງນັ້ນຈະຖືກເປີດເຜີຍ, ບາງເທື່ອໄດ໋ເນາະ.

- ຂ້ອຍປູກຫຍັງ, ລ້ຽງຫຍັງ; ເຂົາກໍມາລັກເອົາໄປກິນໝົດ, ຄືນບໍ່ຄືນ.
- ໃຜຊິບໍ່ຮູ້ມັນເດ, ອັນບັກອັນນີ້.

✍ **ໝາຍບອກ**

ຄໍາປະເພດນີ້(3.2) ບໍ່ໄດ້ນອນຢູ່ໃນໂຄງຫລັກທີ່ເປັນນາມມະທໍາຂອງປະໂຫຍກ; ສ່ວນຫລາຍມັນປາກົດໂຕໃນເວລານໍາໃຊ້ປະໂຫຍກເຂົ້າໃນການປາກເວົ້າເທົ່ານັ້ນ.

## 3.3. ຄໍາຂະຫຍາຍ

ແມ່ນຄໍາຈໍາພວກທີ່ໃຊ້ຂະຫຍາຍໃຫ້ຄໍາໃດໜຶ່ງ ທີ່ເປັນພາກສ່ວນຫລັກຂອງປະໂຫຍກ. ໃນກະໂຕມັນ, ຄໍາພວກນີ້ແມ່ນຄໍາສໍາຮອງຢູ່ໃນກຸ່ມຄໍາທີ່ມີສາຍພົວພັນແບບຕົ້ນຕໍ-ສໍາຮອງນັ້ນເອງ. ດັ່ງນັ້ນມັນແມ່ນຄໍາຂະຫຍາຍຂອງຄໍາໂຕຕັ້ງ, ໂຕສໍາແດງ ແລະໂຕປະກອບກໍໄດ້.

### 3.3. 1 ຄໍາຂະຫຍາຍໂຕຕັ້ງ

ຄໍາຂະຫຍາຍໂຕຕັ້ງ ແມ່ນຄໍາທີ່ຂະຫຍາຍສະເພາະເຈາະຈົງໂຕຕັ້ງເທົ່ານັ້ນ.

ຕົວຢ່າງ - ຄວາຍດໍາມີຫລາຍກວ່າຄວາຍດ່ອນ.

- ຄວາຍນ້ອຍມັກກິນຫຍ້າອ່ອນ.
- ຄວາຍດໍາຂອງລຸງສາຍເຂົ້າຮົ້ວໂຮງຮຽນ.

### 3.3. 2 ຄໍາຂະຫຍາຍໂຕສໍາແດງ

ຄໍາຂະຫຍາຍໂຕສໍາແດງ ແມ່ນຄໍາທີ່ຂະຫຍາຍສະເພາະເຈາະຈົງໂຕສໍາແດງໃນປະໂຫຍກເທົ່ານັ້ນ.

ຕົວຢ່າງ - ອີກສາມເດືອນ, ພວກເຮົາຈະສອບເສັງວິຊາພສາລາວ.

- ລາວຫາກໍອອກໂຮງໝໍຫວ່າງອາທິດແລ້ວນີ້.
- ພວກເຈົ້າຈິ່ງກັບມາໃຫ້ທັນເວລາ.

### 3.3. 2 ຄໍາຂະຫຍາຍໂຕປະກອບ

ຄໍາຂະຫຍາຍໂຕປະກອບ ຄືກັນກັບຄໍາຂະຫຍາຍຄໍາໂຕຕັ້ງ.

ຕົວຢ່າງ - ໝູນ້ອຍມັກກິນຮໍາອ່ອນ.

- ດອກຈຳປາເປັນດອກໄມ້ປະຈຳຊາດລາວ.
- ເພິ່ນຕັດຕົ້ນໄມ້ທີ່ທາງຈຳໜານຜັກ.

## ຄຳຖາມຄົ້ນຄວ້າ

1. ຈົ່ງຈຳແນກຄວາມແຕກຕ່າງລະຫວ່າງພາກສ່ວນຫລັກ ແລະພາກສ່ວນແອ້ມຂອງປະໂຫຍກ?
2. ໂດຍທົ່ວໄປແລ້ວ, ພາກສ່ວນຫລັກຂອງປະໂຫຍກ ມີຈັກພາກສ່ວນ?
3. ພາກສ່ວນແອ້ມທີ່ບໍ່ມັກໃຊ້ຊຽນ ແມ່ນຄຳແອ້ມປະເພດໃດ?

## ບົດເຝິກຫັດ

1. ຈົ່ງຊອກເອົາປະໂຫຍກທີ່ມີຢູ່ໃນສິ່ງພິມຕ່າງໆ(ປຶ້ມ, ວາລະສານ, ໜັງສືພິມ...) ໂດຍໃຫ້ຮູ້ວ່າໃນປະໂຫຍກທີ່ເອົາມານັ້ນ ມີຄຳໃດເປັນ:

   + ໂຕຕັ້ງ, ໂຕສຳແດງ ແລະໂຕປະກອບ(ຖ້າມີ).

   + ຄຳວິເສດ, ຄຳກຳກັບ(ຄຳແຮກ, ຄຳຍໍ້), ຄຳຂະຫຍາຍຂອງພາກສ່ວນຕ່າງໆ(ຂະຫຍາຍຄຳໂຕຕັ້ງ, ໂຕສຳແດງ, ໂຕປະກອບ) ຖ້າມີ.

2. ໂດຍທົ່ວໄປແລ້ວ, ພາກສ່ວນຫລັກຂອງປະໂຫຍກ ມີຈັກພາກສ່ວນ?
3. ພາກສ່ວນແອ້ມທີ່ບໍ່ມັກໃຊ້ຊຽນ ແມ່ນຄຳແອ້ມປະເພດໃດ?

4. ຊະນິດຂອງປະໂຫຍກ

ປະໂຫຍກ, ເຖິງແມ່ນຈະສ້າງຂຶ້ນບົນພື້ນຖານໃດໜຶ່ງ ແຕ່ເປົ້າໝາຍສຸດທ້າຍຂອງມັນກໍແມ່ນເພື່ອການແລກປ່ຽນສື່ສານ. ດັ່ງນັ້ນ, ໃນທີ່ນີ້ຈະໄດ້ອີງໃສ່ທັງໂຄງສ້າງ ແລະຈຸດປະສົງຂອງການປາກເວົ້າ ມາຈັດແບ່ງປະໂຫຍກໃນພາສາລາວເຮົາ ເພື່ອສະໜອງການນຳໃຊ້ປະໂຫຍກ ແລະພໍເປັນປະດຽງທິດໃນການເບິ່ງບັນຫາໃຫ້ກວ້າງໃນການຄົ້ນຄວ້າ.

4.1 ອີງໃສ່ທັງໂຄງສ້າງ

ການຈັດແບ່ງປະໂຫຍກຕາມໂຄງສ້າງນີ້ ໂດຍຫລັກການແລ້ວ, ພວກເຮົາພໍສະຫລຸບໄດ້ມີຢູ່ 4 ຊະນິດ. ໃນເບື້ອງຕົ້ນອາດແບ່ງເປັນ2 ຄື ປະໂຫຍກດ່ຽວ ແລະປະໂຫຍກປະສົມ. ຈາກນັ້ນແຕ່ລະຊະນິດອາດແບ່ງເປັນ 2 ຕື່ມອີກຄື ປະໂຫຍກດ່ຽວ ແບ່ງອອກເປັນ ປະໂຫຍກດ່ຽວສາມັນ ແລະປະໂຫຍກດ່ຽວພິເສດ; ສ່ວນປະໂຫຍກປະສົມກໍແບ່ງອອກເປັນ ປະໂຫຍກປະສົມສາມັນ ແລະ ປະໂຫຍກປະສົມພິເສດ ແຕ່ໃນປຶ້ມແບບຮຽນເຫລັ້ມນີ້ຈະສະເໜີແຕ່ ປະໂຫຍກດ່ຽວສາມັນ ແລະປະໂຫຍກປະສົມສາມັນເທົ່ານັ້ນ ເພາະເປັນປະໂຫຍກທີ່ນິຍົມໃຊ້ຫລາຍ.

ກ. ປະໂຫຍກດ່ຽວສາມັນ

ປະໂຫຍກດ່ຽວສາມັນ ແມ່ນປະໂຫຍກທີ່ປະກອບດ້ວຍພາກສ່ວນຫລັກຂອງປະໂຫຍກຄື ໂຕຕັ້ງ, ໂຕສຳແດງ ແລະໂຕປະກອບ(ຖ້າມີ). ແຕ່ອັນສຳຄັນປະໂຫຍກນີ້ມີແຕ່ໂຕສຳແດງໂຕດຽວຢູ່ໃນປະໂຫຍກເຊິ່ງອາດຂຽນເປັນຜັງດັ່ງນີ້:

| ໂຕຕັ້ງ - ໂຕສຳແດງ - ໂຕປະກອບ |
|---|

| | | | |
|---|---|---|---|
| ຕົວຢ່າງ | - ພວກເຮົາ | ພັກຜ່ອນ | |
| | (ໂຕຕັ້ງ) | (ໂຕສຳແດງ) | |
| | - ອາຈານ | ອະທິບາຍ | ບົດຮຽນ |
| | (ໂຕຕັ້ງ) | (ໂຕສຳແດງ) | (ໂຕປະກອບ) |
| | - ລາວ | ກິນ | ເຂົ້າ |
| | (ໂຕຕັ້ງ) | (ໂຕສຳແດງ) | (ໂຕປະກອບ) |

ປະໂຫຍກສາມັນ ອາດອະນຸຍາດໃຫ້ເຮົາຮັບຮູ້ງ່າຍດາຍ; ຕາມໂຄງສ້າງ ແລະຜັງທີ່ໄດ້ສະເໜີ ແຕ່ກໍອາດເຮັດໃຫ້ເຮົາຮັບຮູ້ໄດ້ຍາກ. ດັ່ງນັ້ນ, ເຮົາຈະເໜີໃຫ້ເຫັນໄດ້ຄວາມງ່າຍ ແລະຄວາມສັບສົນຂອງມັນດັ່ງລຸ່ມນີ້:

ກ.1 ປະໂຫຍກດ່ຽວສາມັນງ່າຍ

ປະໂຫຍກດ່ຽວສາມັນງ່າຍ ອາດປະກອບດ້ວຍໂຕຕັ້ງ ແລະໂຕສຳແດງ. ປະໂຫຍກປະເພດນີ້ສ່ວນຫລາຍແມ່ນຄຳກຳມະຄົບ(ອະກຳກິລິຍາ = Intransitive verb) ເປັນໂຕສຳແດງ.

ຕົວຢ່າງ - ອາຈານກຳລັງມາ
- ແອນ້ອຍກຳລັງນອນຫລັບ
- ຍົນພວມບິນ

ແຕ່ໃນບາງກໍລະນີ ເຮົາໄດ້ພົບເຫັນຄຳຄຸນນາມເຮັດໜ້າທີ່ເປັນໂຕສຳແດງ ໃນປະໂຫຍກຊະນິດນີ້.

ຕົວຢ່າງ - ໄກ່ສອງໂຕນີ້ຕຸ້ຍດີ.

- ໝານ້ອຍໂຕຈ່ອຍຫລາຍ.
- ນາງສາວອາພອນລາວງາມຫລາຍ.

ພ້ອມກັນນີ້ກໍມີປະໂຫຍກສາມັນງ່າຍທີ່ປະກອບດ້ວຍໂຕຕັ້ງ, ໂຕສຳແດງ ແລະໂຕປະກອບ; ຄຳທີ່ເຮັດໜ້າທີ່ເປັນໂຕສຳແດງໃນປະໂຫຍກປະເພດນີ້ ແມ່ນຄຳກຳມະຊາດ(ສະກຳກິລິຍາ = transitive verb) ເປັນໂຕສຳແດງ.

ຕົວຢ່າງ - ພວກເຮົາ ພວມຮຽນ ພາສາລາວ.
(ໂຕຕັ້ງ) (ໂຕສຳແດງ) (ໂຕປະກອບ)

- ໜ່ວຍງານພວກເຂົາ ປະຕິບັດ ໜ້າທີ່ດີ.
(ໂຕຕັ້ງ) (ໂຕສຳແດງ) (ໂຕປະກອບ)
- ພວກເຮົາ ຖ້າ ພວກເຈົ້າ.
(ໂຕຕັ້ງ) (ໂຕສຳແດງ) (ໂຕປະກອບ)

ກ. 2 ປະໂຫຍກດ່ຽວສາມັນສົນ

ຄວາມສັບສົນຂອງປະໂຫຍກດ່ຽວສາມັນ ອາດຈະເກີດຈາກຫລາຍພາກສ່ວນຫລັກຂອງປະໂຫຍກນັ້ນ(ໂຕຕັ້ງ,ໂຕສຳແດງ ແລະໂຕປະກອບ) ມີສ່ວນຂະຫຍາຍໃນຮູບປະໂຫຍກ ຫລືບໍ່ກໍເກີດຈາກປະໂຫຍກນັ້ນຮຽກຮ້ອງໂຕປະກອບຫລາຍໂຕ.

ຕົວຢ່າງ

① ດອກກຸຫລາບ ທີ່ ນາງ ມອບໃຫ້ຂ້ອຍ ງາມເປັນພິເສດ.



② ຂ້ອຍຊົມ ຂອງຂວັນ ທີ່ ເພື່ອນໆມາມອບໃຫ້



③ ເພິ່ນສ້ອມແປງ ອາຄານ ທີ່ ເປ່ເພ



ປະໂຫຍກ ① ທີ່ / ນາງມອບໃຫ້ຂ້ອຍ ເປັນປະໂຫຍກ ແຕ່ມັນໄດ້ຫລຸດຖານະມາເຮັດໜ້າທີ່ເປັນຄຳຂະຫຍາຍໃຫ້ດອກໄມ້; ປະໂຫຍກ ② ທີ່ / ເພື່ອນໆມາມອບໃຫ້ ກໍເປັນປະໂຫຍກ ແຕ່ເຮັດໜ້າທີ່ເປັນຄຳຂະຫຍາຍໃຫ້ຂອງຂວັນ, ແລະ ທີ່ / ເປ່ເພ ໃນປະໂຫຍກ ③ ກໍພຽງແຕ່ເປັນຄຳຂະຫຍາຍໃຫ້ອາຄານ.

✍ ປະໂຫຍກນັ້ນມີໂຕປະກອບຫລາຍໂຕ

(ກ). ນາງ ມອບ ແພມົນຜືນນີ້ ແກ່ ເຮົາ

(ຂ). ລາວ ສົ່ງ ຈົດໝາຍ ຫາ ເພື່ອນ

(ຄ). ມັນ ຍາດ ຊູ້ ກັບ ສ່ຽວ

(ງ). ເຈົ້າພາບ ເຊີນ ແຂກ ຮັບປະທານອາຫານ

(ຈ). ແມ່ ບອກ ລູກ ໄປຕະຫລາດ

ປະໂຫຍກ (ກ) ແລະ (ຂ) ແມ່ນປະໂຫຍກບອກການເຄື່ອນໄຫວມອບ-ຮັບ; ປະໂຫຍກ (ຄ) ແມ່ນປະໂຫຍກການເຄື່ອນໄຫວສິມທົບ, ສ່ວນປະໂຫຍກ (ງ) ແລະ (ຈ) ແມ່ນປະໂຫຍກເຫດ.

ຂ. ປະໂຫຍກປະສົມສາມັນ

ອີງຕາມໂຄງສ້າງ, ຕາມຫລັກການທີ່ພວກເຮົາໄດ້ຮຽນມາໃນເບື້ອງຕົ້ນ, ປະໂຫຍກປະສົມແມ່ນປະໂຫຍກທີ່ມີໂຕສຳແດງ ແຕ່ສອງໂຕຂຶ້ນໄປ.

ຕົວຢ່າງ

**ຮ່ວມໂຕຕັ້ງ:** - ລາວເກີດ ແລະ ເຕີບໃຫຍ່ຂຶ້ນ ໃນບ້ານແຫ່ງນີ້.




**ຕ່າງໂຕຕັ້ງ:** - ຄູເຂົ້າຫ້ອງ; ນັກຮຽນລຸກຂຶ້ນເຄົາລົບ




ອີງຕາມຊະນິດຂອງການສຳພັນຄວາມໝາຍລະຫວ່າງໂຕສຳແດງນຳກັນ ແລະອີງຕາມສັບສານທີ່ສະແດງການສຳພັນນັ້ນ ອາດແບ່ງປະໂຫຍກປະສົມອອກໄດ້ຫລາຍຊະນິດ:

✍ ປະໂຫຍກບອກຈຳນວນລາຍການຕາມລຳດັບ

ຕົວຢ່າງ

- ເຈົ້າໄປຫາຫົວໜ້າ ແລ້ວ ເພິ່ນຈະບອກທິດໃຫ້
- ຜູ້ບັນຊາການຄົນເກົ່າເດັດຂາດ ແລະເຄັ່ງຂຶມ; ຜູ້ໃໝ່ກໍເດັດຂາດ ແຕ່ແຈ່ມໃສ.

✍ ປະໂຫຍກປະສົມບອກການພົວພັນເຫດ-ຜົນ

ຕົວຢ່າງ
- ຍ້ອນລາວບໍ່ຟັງຄວາມໝູ່, ລາວຈຶ່ງເປັນຄົນເສຍ.
- ຍ້ອນວ່າລາວເຈັບຫົວ, ລາວຈຶ່ງບໍ່ມາໂຮງຮຽນ.

✍ ປະໂຫຍກປະສົມບອກການພົວພັນກະທົບໄປ-ມາ

ຕົວຢ່າງ
- ເຖິງວ່າສະພາບຈະຫຍຸ້ງຍາກ ແຕ່ເຂົາກໍບໍ່ທໍ້ຖອຍ
- ແມ່ນວ່າຝົນຈະຕົກແຮງປານໃດລາວກໍຕ້ອງມາ.

✍ ປະໂຫຍກປະສົມບອກການພົວພັນເພີ່ມທະວີ

ຕົວຢ່າງ
- ພໍແຕ່ມາຮອດ, ລາວກໍເລົ່າເລື່ອງນັ້ນສູ່ຟັງໂລດ.
- ວ່າແຕ່ເຫັນ, ຂ້ອຍກໍຮ້ອງໃສ່ລາວໂລດ.

✍ ປະໂຫຍກປະສົມບອກການພົວພັນແບບເລືອກເຟັ້ນ

ຕົວຢ່າງ
- ມັນຕັ້ງບໍ່ມາໂຮງຮຽນ ຫລືພໍ່ແມ່ມັນບໍ່ໃຫ້ມາ.
- ເຈົ້າຊິໄປ ຫລືຊິຢູ່.

24/VII

4.2 ອີງຕາມຈຸດປະສົງການປາກເວົ້າ ຫລືລັກສະນະ

ອີງຕາມຈຸດປະສົງການປາກເວົ້າ, ເພິ່ນແບ່ງປະໂຫຍກອອກເປັນຫລາຍຊະນິດ. ໃນທີ່ນີ້, ພວກເຮົາຈະສະເໜີບາງຊະນິດດັ່ງລຸ່ມນີ້:

**ກ. ປະໂຫຍກບອກເລົ່າ**

ປະໂຫຍກບອກເລົ່າ ແມ່ນປະໂຫຍກທີ່ຜູ້ເວົ້າບອກຂ່າວສະພາບໃດໜຶ່ງແກ່ຜູ້ຟັງ ໂດຍບໍ່ຕ້ອງການຄຳຕອບຈາກຜູ້ຟັງ. ການບອກເລົ່າອາດຢູ່ໃນກໍລະນີຢືນຢັນ ຫລືປະຕິເສດ. ແນ່ນອນວ່າມັນອາດເປັນຄຳຕອບໃຫ້ປະໂຫຍກຄຳຖາມໃດໜຶ່ງ.

ກ.1 **ປະໂຫຍກບອກເລົ່າບອກຄວາມຢືນຢັນ**

ຮູບການສະແດງອອກຂອງປະໂຫຍກບອກເລົ່າບອກຄວາມຢືນຢັນ ສະແດງອອກມໃນຮູບເຄົ້າຂອງປະໂຫຍກ. ຕົວຢ່າງ
- ຂ້ອຍຊິໄປຫລວງພະບາງ.
- ລາວຢາກພົບຫົວໜ້າ.
- ລະດູນີ້, ອາກາດສົດໃສດີ.
- ລົດເມ ວຽງຈັນ-ປາກເຊ ອອກເວລາ 07:00 ມ.

ປະໂຫຍກບອກເລົ່າບອກຄວາມຢືນຢັນ ບາງເທື່ອກໍສະແດງອອກໃນຮູບປະຕິເສດ:

ຕົວຢ່າງ
- ເຂົາບໍ່ອາດບໍ່ຫລົງລືມເຫດການນັ້ນໄດ້( = ລືມ )
- ບໍ່ມີຜູ້ໃດບໍ່ຄິດເຖິງລາວ( = ຄິດເຖິງ )
- ຜູ້ໃດຫວະຊິບໍ່ຮູ້( = ຮູ້ )
- ຜູ້ໃດເດຊິເຮັດບໍ່ໄດ້( = ເຮັດໄດ້ )

ກ.2 **ປະໂຫຍກບອກເລົ່າບອກຄວາມປະຕິເສດ**

ປະໂຫຍກເຫລົ່ານີ້ ອາໄສຄຳບອກປະຕິເສດ: ບໍ່, ບໍ່ແມ່ນ, ບໍ່ທັນ, ບໍ່ເຮ - ຫາ...

ຕົວຢ່າງ
- ລາວບໍ່ແມ່ນຕຳຫລວດ.
- ຂ້ອຍບໍ່ຮູ້ເລື່ອງນີ້ຈັກໜ້ອຍເລີຍ.
- ຄາວຍັງສາວລາວບໍ່ເປັນແນວນີ້.
- ອຸ່ນຫລ້າຍັງບໍ່ທັນແຕ່ງງານເທື່ອ.
- ລາວບໍ່ເຮມາ.
- ຂ້ອຍຫາກໍຮູ້ເລື່ອງນີ້ເມື່ອໃດ.

ບາງເທື່ອປະໂຫຍກປະເພດນີ້ ກໍສະແດງອອກໃນຮູບປະໂຫຍກຄຳຖາມ ແຕ່ບໍ່ແມ່ນເພື່ອຖາມ.

ຕົວຢ່າງ
- ເຈົ້າຄິດວ່າເລື່ອງນີ້ງ່າຍຊັ້ນບໍ( = ບໍ່ງ່າຍ )
- ໃດ ລູກຈຶ່ງວ່າແນວນັ້ນ( = ບໍ່ຄວນວ່າແນວນັ້ນ )

ຮູບການສະແດງອອກຂອງປະໂຫຍກບອກເລົ່າບອກປະຕິເສດ

ໂດຍທົ່ວໄປແມ່ນໃຊ້ຄຳປະຕິເສດຢູ່ຕໍ່ໜ້າຄຳສະແດງ; ສົມທຽບ.

ຕົວຢ່າງ
- ຂ້ອຍຢາກກິນເຂົ້າ ➡ ຂ້ອຍບໍ່ຢາກກິນເຂົ້າ.
- ລາວແຕ່ງງານແລ້ວ ➡ ລາວ ຍັງບໍ່ທັນ ແຕ່ງງານ.
  ລາວບໍ່ແຕ່ງງານເລີຍ.

ຂ. ປະໂຫຍກຄຳຖາມ

ປະໂຫຍກຊະນິດນີ້ຕ່າງຈາກປະໂຫຍກບອກເລົ່າ. ປະໂຫຍກຄຳຖາມໝາຍເຖິງປະໂຫຍກທີ່ຕັ້ງຂຶ້ນເພື່ອສືບຖາມຄວາມເປັນໄປຂອງເຫດການ, ສະພາບການໃດໜຶ່ງ ຈາກຄູ່ສົນທະນາ.

ຕົວຢ່າງ - ໃຜມາຫັ້ນ, ເຈົ້າຮູ້ບໍ?.
- ເຈົ້າຮູ້ຂ່າວນີ້ຈາກແມ່, ແມ່ນບໍ?
- ເຈົ້າພັກຢູ່ນຳໃຜ?

ຮູບການສະແດງອອກຂອງປະໂຫຍກຄຳຖາມ, ອາດຖາມເຖິງໂຕຕັ້ງ, ໂຕສຳແດງ ຫລືບໍ່ກໍແມ່ນຖາມເຖິງໂຕປະກອບ(ສ່ວນໃດໜຶ່ງຂອງຈຸດປະສົງ) ບໍ່ທັນແຈ້ງ:

ຕົວຢ່າງ - ໃຜນັ່ງຢູ່ໂຕະນີ້? ທ້າວ ຄຳສີ ນັ່ງຢູ່ໂຕະນີ້(ເຖິງໂຕຕັ້ງ)
- ເພິ່ນເຮັດຫຍັງ? ເພິ່ນປະຊຸມ (ຖາມເຖິງໂຕສຳແດງ)
- ເພິ່ນສ້າງຫຍັງ? ເພິ່ນສ້າງອາຄານ (ຖາມເຖິງໂຕປະກອບ)

ໃນກໍລະນີເພິ່ນຢາກເນັ້ນຄວາມ, ເພິ່ນຕື່ມຄຳ "ແມ່ນ" ໃສ່ຕໍ່ໜ້າ.

ຕົວຢ່າງ - ແມ່ນໃຜມາຫັ້ນ?
- ແມ່ນເພິ່ນສ້າງຫຍັງເກາະ?
- ແມ່ນເຈົ້າຊິໄປໃສ?

ແລະຖາມເຖິງສະພາບເຊັ່ນ ສາເຫດ, ວັນເວລາ, ສະຖານທີ່.

ຕົວຢ່າງ - ຍ້ອນຫຍັງ ເຈົ້າຈິ່ງມາໂຮງຮຽນຊ້າ?
- ເພິ່ນສ້າງອາຄານຫລັງນີ້ ດົນປານໃດແລ້ວ?
- ເພິ່ນຈະຈັດຕັ້ງສຳມະນາບັນຫານັ້ນ ຢູ່ໃສ?

ບາງກໍລະນີ, ປະໂຫຍກຄຳຖາມມີລັກສະນະສົງໄສ, ບໍ່ໝັ້ນໃຈວ່າແມ່ນແນວນັ້ນຫລືບໍ່, ປະໂຫຍກຄຳຖາມແບບນີ້ ອາດສະແດງອອກຜ່ານຄຳ: ແມ່ນ ຫລື ບໍ່ແມ່ນ, ຫລື, ບໍຫລືບໍ່, ບໍ່, ບໍ, ຫວະ.

ຕົວຢ່າງ - ທ່ານຈະຮຽນຕໍ່ ຫລືອອກໄປປະຕິບັດໜ້າທີ່ກ່ອນ?
- ລາວເປັນຄົນເຮັດຖືກຕ້ອງ ແມ່ນຫລືບໍ່ແມ່ນ?
- ເຈົ້າບໍ່ມັກສິ່ງນັ້ນດອກຫວະ?

ປະໂຫຍກຄຳຖາມໃນພາສາເຮົາຄວນສຶກສາຄົ້ນຄວ້າ ແລະຈັດລະບົບມັນໃຫ້ແທດເໝາະດ້ານໂຄງສ້າງ ແລະເໝາະສົມກັບລະດັບຊັ້ນຄົນ ໃນການພົວພັນຂອງຄົນໃນສັງຄົມ.

ຄ. ປະໂຫຍກບົງການ

ປະໂຫຍກບົງການ ແມ່ນປະໂຫຍກທີ່ມີຄວາມໝາຍວິງວອນ, ຊັກຊວນ, ຫ້າມປາມ, ຄຳສັ່ງ ຫລືອ້ອນວອນພອນ,... ປະໂຫຍກປະເພດນີ້ ໃຊ້ສັບສານເປັນພາຫະນະຕົ້ນຕໍ ແຕ່ກໍມີກໍລະນີໃຊ້ທຳນອງສຽງປະກອບໃຫ້.

✍ ໃຊ້ສັບສານ:

ຕົວຢ່າງ - ຂໍໃຫ້ທຸກຄົນຢູ່ໃນລະບຽບເນີ.
- ພວກເຮົາໄປເທາະ.

- ກິນສາ.

- ຢ່າເຮັດແນວນັ້ນແມ

- ຫ້າມສູບຢາໃນທີ່ປະຊຸມ.

- ຈົ່ງອອກໄປດຽວນີ້.

- ຂໍໃຫ້ທ່ານເດີນທາງດ້ວຍຄວາມສະຫວັດດີພາບ

- ມາໄວໆແມ.

✍ ໃຊ້ຖວງທຳນອງສຽງ:

ຕົວຢ່າງ - ກ້າວຂຶ້ນ!.

- ຊິໄປ ຫລືບໍ່ໄປ!.

- ກິນ!.

- ບະ!.

- ຢຸດ!

**ຄຳຖາມຄົ້ນຄວ້າ**

1. ອີງຕາມໂຄງສ້າງ, ເພິ່ນແບ່ງປະໂຫຍກອອກເປັນຈັກຊະນິດ? ຊະນິດໃດແດ່? ຫລືທີ່ໃຊ້ຫລາຍທີ່ສຸດມີຈັກຊະນິດ?

2. ປະໂຫນກດ່ຽວ ແລະປະໂຫຍກປະສົມຕ່າງກັນແນວໃດ? ຈົ່ງຈຳແນກ.

3. ອີງຕາມຈຸດປະສົງຂອງການປາກເວົ້າ(ໃຊ້), ເພິ່ນແບ່ງປະໂຫຍກອອກເປັນຈັກຊະນິດ? ຊະນິດໃດແດ່? ຈົ່ງຍົກຕົວຢ່າງປະກອບໃນແຕ່ລະຊະນິດ.

## ພາກທີ II ທັກສະທາງພາສາ

## ບົດທີ 1 ທັກສະການຟັງ

### 1. ຄວາມເຂົ້າໃຈກ່ຽວກັບທັກສະການຟັງ

ໃນຊີວິດປະຈຳວັນຂອງພວກເຮົາແຕ່ລະມື້ຈະເຫັນວ່າ ພວກເຮົາໄດ້ປະໂຫຍດຈາກການຟັງຢ່າງຫລວງຫລາຍ, ບໍ່ວ່າຈະເປັນການສົນທະນາ, ການສະແດງຄວາມຄິດເຫັນ ຫລືການຄົບຄ້າສະມາຄົມຕ່າງໆ; ນອກຈາກນັ້ນຍັງໄດ້ຟັງຄຳສັ່ງສອນ, ຄຳອະທິບາຍຂອງພໍ່ແມ່ ແລະຄູອາຈານ, ຟັງການບັນລະຍາຍຂອງຜູ້ມີຄວາມຮູ້ໃນແງ່ວິຊາການຕ່າງໆ, ຟັງວິທະຍຸ, ໂທລະພາບ ແລະອື່ນໆ. ທຸກສິ່ງເຫລົ່ານີ້ທຸກຄົນສາມາດຟັງໄດ້. ແຕ່ການທີ່ຈະຟັງເປັນ ເພື່ອໃຫ້ເກີດປະໂຫຍດຢ່າງເຕັມເມັດເຕັມໜ່ວຍນັ້ນ ອາດເປັນເລື່ອງຍາກພໍສົມຄວນ; ມັນຮຽກຮ້ອງໃຫ້ຜູ້ຟັງຕ້ອງໄດ້ເຝິກທັກສະໃນການຟັງ ເພື່ອໃຫ້ເກີດຄວາມຊິນເຄີຍໃນທາງທີ່ຈະເປັນປະໂຫຍດໃນທຸກວິຊາ ແລະຊີວິດປະຈຳວັນ.

ການເຝິກທັກສະໃນການຟັງ, ຜູ້ຟັງບໍ່ພຽງແຕ່ໄດ້ຍິນໄດ້ຟັງເທົ່ານັ້ນ ຈະຕ້ອງປະກອບດ້ວຍຄວາມຮູ້, ຄວາມເຂົ້າໃຈ ຫລືຄວາມຄິດ ແລະສະຕິປັນຍາ. ຜູ້ທີ່ "ຟັງເປັນ" ຕ້ອງມີວິຈາລະນາຍານ(ໄຕ່ຕອງ) ໃນການຟັງ ເຊິ່ງໝາຍເຖິງການໃຊ້ຄວາມຮູ້, ຄວາມຄິດ ແລະສະຕິປັນຍາຂອງຕົນພິຈາລະນາ ເພື່ອຄວາມເຂົ້າໃຈເນື້ອຫາສາລະຕ່າງໆຈາກເລື່ອງທີ່ໄດ້ຟັງ. ນອກຈາກນັ້ນ, ຍັງຮັບຮູ້ ແລະຕີລາຄາເລື່ອງທີ່ຟັງນັ້ນວ່າເປັນ ຕາໜ້າເຊື່ອຖືຫລືບໍ່ ແລະເປັນໜ້າເຊື່ອຖືພຽງໃດ ສາມາດນຳເອົາສິ່ງໄດ້ຟັງໃນສ່ວນທີ່ເປັນໜ້າເຊື່ອຖືນັ້ນ ໄປໃຊ້ໃຫ້ເກີດປະໂຫຍດແກ່ຕົນເອງ ແລະສ່ວນລວມອີກດ້ວຍ.

"ການຟັງ" ເປັນທັກສະໜຶ່ງໃນສີ່ທັກສະຂອງການໃຊ້ພາສາ ນອກຈາກການເວົ້າ, ການອ່ານ ແລະການຂຽນ ເຊິ່ງເຫັນວ່າເປັນທັກສະທີ່ໃຊ້ຫລາຍໃນຊີວິດປະຈຳວັນຂອງພວກເຮົາ. ໃນການຮຽນ-ການສອນຢູ່ໂຮງຮຽນຊັ້ນປະຖົມ, ມັດທະຍົມຂອງປະເທດເຮົາ ປາກົດວ່ານັກຮຽນຍັງໃຊ້ການຟັງຫລາຍກວ່າດ້ານອື່ນໆ; ນີ້ໄດ້ສະແດງໃຫ້ເຫັນວ່າ ການຟັງເປັນສິ່ງຈຳເປັນ ແລະຖືກນຳໃຊ້ຫລາຍໃນຂະບວນການຮຽນ-ການສອນ ແລະໃນຊີວິດປະຈຳວັນຂອງພວກເຮົາ. ດັ່ງນັ້ນຈຶ່ງຄວນມີການເຝິກທັກສະການຟັງ ເພື່ອໃຫ້ມີຄວາມຊຳນິຊຳນານ ແລະໄດ້ປະໂຫຍດຈາກການຟັງຢ່າງເຕັມເມັດເຕັມໜ່ວຍ.

### 2. ຈຸດມຸ່ງໝາຍໃນການຟັງ

ຜູ້ທີ່ຟັງເປັນ ຫລືຟັງຢ່າງມີປະສິດທິພາບນັ້ນ ເປັນຈຸດເລີ່ມຕົ້ນຂອງຄວາມຮູ້, ກໍ່ໃຫ້ເກີດສະຕິປັນຍາ ແລະພົບໄຫວ. ການຟັງຢ່າງມີປະສິດທິພາບທຸກຄັ້ງ ຜູ້ຟັງຍ່ອມມີຈຸດມຸ່ງໝາຍໃນການຟັງ ເຊິ່ງແຍກອອກໄດ້ດັ່ງນີ້:

#### 2.1 ການຟັງເພື່ອໃຫ້ເກີດຄວາມຮູ້

ການຟັງຊະນິດນີ້ ເປັນການຟັງທີ່ໃຊ້ຫລາຍໃນຊີວິດປະຈຳວັນ ໂດຍສະເພາະແມ່ນການຟັງເພື່ອກໍ່ໃຫ້ເກີດຄວາມຮູ້, ຄວາມເຂົ້າໃຈໃນເລື່ອງຕ່າງໆ ບໍ່ວ່າຈະເປັນບັນຫາວິທະຍາສາດ ຫລືຄວາມຮູ້ທາງດ້ານວິຊາການຕ່າງໆ ແລະອື່ນໆ ເຊິ່ງຜູ້ຟັງມີຄວາມຕ້ອງການເກັບກຳເອົາຄວາມຮູ້ດັ່ງກ່າວໃສ່ຕົນເອງ. ການຟັງໃຫ້ເກີດຄວາມຮູ້ມີຫລາຍຢ່າງເຊັ່ນ ການຟັງຄຳສັ່ງສອນອົບຮົມຈາກພໍ່ແມ່ ຫລືຜູ້ອາວຸໂສ, ຟັງການອະທິ

ບາຍວິຊາການຈາກຄູອາຈານ, ຟັງຂ່າວສານ ແລະອື່ນໆ. ຜູ້ຟັງເພື່ອໃຫ້ເກີດຄວາມຮູ້ຈະຕ້ອງເຝິກທັກສະໃນດ້ານການຈັບໃຈຄວາມສຳຄັນຂອງເລື່ອງທີ່ຟັງ ແລະໃນດ້ານການຈັບໃຈຄວາມໂດຍລະອຽດອີກດ້ວຍ.

### 2.2 ການຟັງເພື່ອໃຫ້ເກີດຄວາມຄິດ

ການຟັງຊະນິດນີ້ ເປັນການຟັງທີ່ຕ້ອງໄດ້ໃຊ້ສະຕິປັນຍາ ແລະວິຈາລະນາຍານເຊັ່ນ ການຟັງບົດຄວາມ, ການຟັງການບັນລະຍາຍ, ການອະພິປາຍບັນຫາ, ການຟັງວິຈານເຫດການ, ການຟັງການໂຄສະນາ ເປັນຕົ້ນ. ການຟັງເພື່ອໃຫ້ເກີດຄວາມຄິດ ມີຫລັກການພິຈາລະນາດັ່ງນີ້:

① ພິຈາລະນາເລື່ອງທີ່ຟັງນັ້ນວ່າ ສ່ວນໃດແມ່ນຄວາມຈິງ ແລະສ່ວນໃດແມ່ນຄວາມເຫັນຂອງຜູ້ເວົ້າ.

② ພິຈາລະນາການໃຊ້ເຫດຜົນ ແລະຫລັກຖານເປັນຕາເຊື່ອຖືຫລືບໍ່ ຫລືເປັນຕາເຊື່ອຖືສ່ຳໃດ.

③ ປະເມີນຄຸນຄ່າຂອງເລື່ອງທີ່ຟັງຜິດ-ຖືກ ສ່ຳໃດ, ສາມາດນຳເອົາໄປໃຊ້ປະໂຫຍດໄດ້ຫລືບໍ່ , ໄດ້ປະໂຫຍດຫຍັງແດ່, ໜ້ອຍຫລາຍພຽງໃດ.

### 2.3 ການຟັງເພື່ອໃຫ້ເກີດຄວາມມ່ວນຊື່ນ

ການຟັງຊະນິດນີ້ ເປັນການຟັງເພື່ອໃຫ້ເກີດຄວາມສຸກ, ຄວາມສະໜຸກສະໜານຈາກເລື່ອງທີ່ໄດ້ຟັງເຊິ່ງເຮັດໃຫ້ຜູ້ຟັງໄດ້ຮັບຄວາມເພີດເພີນມ່ວນຊື່ນເຊັ່ນ ຟັງເພັງ, ຟັງດົນຕີ, ນະວະນິຍາຍ, ລະຄອນ, ບົດກອນ ແລະພ້ອມດຽວກັນນັ້ນກໍ່ໃຫ້ເກີດຄວາມຮັກ ແລະນິຍົມພາສາຂອງຊາດນຳອີກ.

## 3 ປະໂຫຍດທີ່ໄດ້ຮັບຈາກການຟັງ

ການຟັງມີປະໂຫຍດຢ່າງຫລວງຫລາຍ ໃນຂະບວນການຮັບຮູ້ຂ່າວສານ ຫລືສິ່ງຕ່າງໆຈາກພາຍນອກຂອງຄົນເຮົາ ເຊິ່ງພໍສັງຣວມໄດ້ດັ່ງນີ້:

① ຜູ້ຮູ້ຟັງຈະໄດ້ຄວາມຮູ້, ຄວາມຄິດ ແລະກໍ່ໃຫ້ເກີດສະຕິປັນຍາ.

② ຜູ້ຮູ້ຟັງຈະເປັນຜູ້ຮູ້ຕີລາຄາ ແລະແກ້ໄຂບັນຫາຕ່າງໆໄດ້ດີ ແລະຖືກຕ້ອງ.

③ ເປັນປະໂຫຍດໃນການຄົບຄ້າສະມາຄົມ, ສ້າງມະນຸດສຳພັນກັບຜູ້ອື່ນໄດ້ດີ.

④ ຊ່ວຍເພີ່ມປະສົບການໃນເລື່ອງຕ່າງໆ, ຖ້າຈຳເປັນຕ້ອງເວົ້າ ກໍມີຄວາມໃນການເວົ້າໃຫ້ໄດ້ດີທັງເນື້ອໃນ ແລະວິທີເວົ້າ.

## 4 ຄວາມຮູ້ທົ່ວໄປກ່ຽວກັບການຟັງ

### 4.1 ມາລະຍາດໃນທີ່ປະຊຸມທີ່ຜູ້ຟັງຄວນປະຕິບັດ

① ໃຫ້ກຽດຜູ້ເວົ້າດ້ວຍການລຸກຂຶ້ນສະແດງການຕ້ອນຮັບ, ຕົບມືເມື່ອມີການສະເໜີແນະນຳຜູ້ເວົ້າຫລືຜູ້ເວົ້າຫາກເວົ້າຈົບ.

② ເຂົ້າສູ່ທີ່ປະຊຸມດ້ວຍຄວາມຮຽບຮ້ອຍ.

③ ສັງຮວມກາຍ, ວາຈາ ແລະໃຈ ໃນການຟັງ.

④ ຟັງດ້ວຍຄວາມຕັ້ງໃຈ ໂດຍໃຊ້ສະມາທິ

⑤ ເມື່ອມີບັນຫາຕ້ອງຖາມກໍຄວນຍົກມືຂຶ້ນເພື່ອຂໍອະນຸຍາດ ຫາກຜູ້ເວົ້າເປີດໂອກາດໃຫ້ຈຶ່ງຄ່ອຍຖາມ.

⑥ ຮັກສາຄວາມສະຫງົບ ແລະຮຽບຮ້ອຍ ບໍ່ໃຫ້ເກີດສຽງລົບກວນເຊັ່ນ ເຄາະປະຕູ, ສົ່ງສຽງເຮຮາ

ບໍ່ລຸກປ່ຽນບ່ອນນັ່ງເລື້ອຍໆ ຫລືຍ່າງເຂົ້າອອກຕາມໃຈຊອບ. ຫາກມີຄວາມຈຳເປັນກໍຄວນ ສະແດງຄວາມເຄົາລົບຕໍ່ຜູ້ເວົ້າສາກ່ອນ.

⑦ ມີຄວາມອົດທົນຕໍ່ຄວາມບໍ່ສະດວກສະບາຍ ທີ່ເກີດຈາກສະຖານທີ່ປະຊຸມເຊັ່ນ ເກົ້າອີ້ແຂງ, ຮ້ອນ ຫລືເຢັນເກີນໄປ, ກິ່ນຕົວ, ຫ້ອງແຄບ, ອຶດອັດ, ມີສຽງລົບກວນ, ຜູ້ເວົ້າເວົ້າບໍ່ຊັດເຈນ, ສຽງຄ່ອຍ ຫລືແຮງໂພດ, ໃຊ້ເວລາເວົ້າດົນເກີນກຳນົດ, ເວົ້າໄວ ແລະບຸກຄະລິກບໍ່ຄ່ອຍດີ.

## 4.2 ຜູ້ຟັງທີ່ດີຄວນມີນິໄສດັ່ງນີ້:

① ໃຊ້ສະມາທິໃນການຟັງ.

② ຈັບປະເດັນໃຫ້ກົງກັບຈຸດປະສົງທີ່ຕ້ອງການ: ຖ້າຟັງເພື່ອຈັບໃຈຄວາມສຳຄັນ ຕ້ອງສະຫລຸບ. ຄວາມຄິດລວມຍອດຂອງເລື່ອງໃຫ້ໄດ້. ຖ້າຫາກຟັງເພື່ອຈັບໃຈຄວາມລະອຽດ, ຄວນໃຊ້ ຄວາມຄິດເພື່ອພິຈາລະນາເລື່ອງຢ່າງລະອຽດ, ມີປະໂຫຍດດ້ານໃດ, ພຽງໃດ ແລະຮູ້ຈັກໃຊ້ ຄຳຖາມເພື່ອໃຫ້ໄດ້ລາຍລະອຽດຕາມທີ່ຕ້ອງການ.

③ ສົນໃຈຜູ້ເວົ້າ, ບໍ່ໂອ້ລົມສົນທະນາກັນ ຫລືສະແດງກິລິຍາບໍ່ສົນໃຈ ແລະບໍ່ໃຫ້ກຽດຜູ້ເວົ້າ.

④ ມັກຄິດທົບທວນ ແລະບັນທຶກສາລະປະໂຫຍດທີ່ໄດ້ຈາກການຟັງ.

## 4.3 ນິໄສທີ່ບໍ່ດີໃນການຟັງມີດັ່ງນີ້:

① ມັກວິພາກວິຈານວິທີຂອງຜູ້ເວົ້າ.

② ພະຍາຍາມຈົດທຸກສິ່ງທຸກຢ່າງ, ເມື່ອຈົດບໍ່ທັນກໍຄິດໃຈຮ້າຍໃຫ້ຜູ້ເວົ້າ.

③ ແກ້ງເຮັດເໝືອນຕັ້ງໃຈຟັງເຊັ່ນ ເບິ່ງໜ້າຜູ້ເວົ້າຕະຫລອດເວລາ ແຕ່ໃຈຄິດເຖິງເລື່ອງອື່ນ. ຄິດ ກັງວົນສິ່ງອ້ອມຕົວທີ່ມາລົບກວນ ບໍ່ຄິດນຳເລື່ອງທີ່ຜູ້ເວົ້າກຳລັງເວົ້າ.

④ ມັກຫລີກລຽງການຟັງເລື່ອງທີ່ຄິດວ່າຍາກ, ໜັກສະໝອງ.

## 5 ການວິຈາລະນາຍານໃນການຟັງ(ການຮັ່ນຕອງ).

① ຮູ້ຈຳແນກ ແລະພິຈາລະນາໃຫ້ອອກວ່າ ອັນໃດແມ່ນຄວາມຈິງ ແລະອັນໃດແມ່ນຄວາມຄິດ ເຫັນຂອງຜູ້ເວົ້າ.

② ເລື່ອງທີ່ຟັງນັ້ນເປັນຕາໜ້າເຊື່ອຖືຫລືບໍ່, ເປັນຕາເຊື່ອຖືພຽງໃດ.

③ ຄຸນຄ່າຂອງເລື່ອງ ມີປະໂຫຍດແກ່ຕົນ ຫລືສ່ວນລວມພຽງໃດ.

④ ຖ້າເປັນການຟັງເພື່ອຄວາມຮູ້ ກໍຕ້ອງຈົດຫົວຂໍ້ເລື່ອງທີ່ຟັງນັ້ນເພື່ອບໍ່ໃຫ້ລືມ.

## 6 ການຟັງເພື່ອອົມ(ຈັບ) ໃຈຄວາມ

ການຟັງເພື່ອຈັບໃຈຄວາມ ໝາຍເຖິງການຟັງທີ່ຜູ້ຟັງ ຟັງແລ້ວສາມາດເຂົ້າໃຈເລື່ອງທີ່ຟັງຢູ່ນັ້ນກົງ ກັບຈຸດປະສົງຂອງຜູ້ເວົ້າ ຫລືຜູ້ສື່ສານ.

ອີງຕາມເລື່ອງທີ່ຟັງອາດສາມາດແຍກການຈັບໃຈຄວາມສຳຄັນອອກເປັນ 2 ຢ່າງຄື ການຈັບໃຈ ຄວາມ ສຳຄັນ ແລະການຈັບໃຈຄວາມລະອຽດ.

### 6.1 ການຈັບໃຈຄວາມສຳຄັນ

ເປັນການຟັງເລື່ອງປະເພດທີ່ໃຫ້ຄວາມຮູ້ເຊັ່ນ ຟັງບົດຄວາມ, ຂ່າວ, ການບັນລະຍາຍ, ການອະທິບາຍ... ຜູ້ຟັງຕ້ອງຈັບໃຈຄວາມຂອງເລື່ອງແມ່ນແນວໃດ, ຮູ້ຈັກຈຸດມຸ່ງໝາຍຂອງຜູ້ເວົ້າຫລືຂອງເລື່ອງທີ່ຟັງ. ຮູ້ແຍກອອກວ່າອັນໃດແມ່ນສ່ວນສຳຄັນຂອງເລື່ອງ ແລະອັນໃດແມ່ນສ່ວນອະທິບາຍ ຫລືຂະຫຍາຍຄວາມຂອງເລື່ອງ ດັ່ງຕົວຢ່າງ:

① ບາງຕອນຂອງບົດຄວາມເລື່ອງ **"ອຳນາດປັນຍາ"**

" ປັນຍາ" ຂອງມະນຸດເປັນສິ່ງທີ່ປະເສີດເລີດລ້ຳກວ່າສິ່ງໃດໆໝົດ ແລະບໍ່ມີແສງສະຫວ່າງໃດຈະສະເໝີເໝືອນແສງສະຫວ່າງແຫ່ງປັນຍາໄດ້.

ຢູ່ໃນວັນນະກຳບູຮານລາວຫລາຍໆເລື່ອງ ໄດ້ຍົກຍ້ອງພູມປັນຍາຂອງຄົນວ່າປັນຍອດເຊັ່ນ ໃນເລື່ອງສຽວສະຫວາດ ຄວາມໂດດເດັ່ນຍິ່ງໃຫຍ່ຂອງເລື່ອງກໍຄື ສຽວສະຫວາດໄດ້ໃຊ້ສະຕິປັນຍາປົກປ້ອງເອົາພໍ່ເຖົ້າ ແລະປະຊາຊົນພົນລະເມືອງອີກນັບໝື່ນນັບແສນຄົນ ໃຫ້ຫວິດອອກຈາກການປະຫານດ້ວຍຄົມດາບຂອງພະຍາຈຳປານະຄອນຜູ້ໂຫດຮ້າຍ ແລະສາມາດກອບກູ້ເອົາພະຍາໃຫ້ຫລຸດພົ້ນອອກຈາກຄວາມປ່ວງບ້າ, ກະຫາຍເລືອດ ໃຫ້ກັບກາຍເປັນຄົນດີ, ມີສະຕິໝັ້ນຄົງໄດ້ ແລະຍ້ອນຄວາມມີປັນຍາຂອງສຽວສະຫວາດນັ້ນເອງ ສຽວສະຫວາດຈຶ່ງໄດ້ຮັບການສະຖາປະນາຂຶ້ນເປັນເອກອັກຄະມະຫາບັນດິດປະຈຳລາຊະສຳນັກແຫ່ງເມືອງຈຳປານະຄອນ.

ໃນວິຖີການດຳລົງຊີວິດປັດຈຸບັນ, ຖ້າຄົນເຮົາມີຄວາມຮູ້ຄວາມສາມາດ ສະຫລາດສະຫລຽວ, ມີປັນຍາເລີກແລບ, ມີພົບໄຫວວ່ອງໄວທັນໂລກມະນຸດ, ຮູ້ອັນດີອັນຮ້າຍ, ຮູ້ມິດຮູ້ສັດຕູ, ມີຄວາມຊື່ສັດສຸດຈະລິດ, ມີຈິດໃຈເປັນທຳ, ມີຄວາມດຸໝັ່ນຂະຫຍັນພຽນ ແລະມີຈິດໃຈສຸພາບ, ເຂັ້ມແຂງແຮງກ້າ ບໍ່ວ່າຈະຕົກໃນສະຖານະການໃດກໍຕາມ ຈະສາມາດຊ່ວຍຊູນຳພາຕົນເອງ ໃຫ້ຫລຸດພົ້ນອອກຈາກໂພຍໄພອັນຕະລາຍ ແລະຄວາມລຳບາກຍາກແຄ້ນທຸກປະການໄດ້ ແລະຖ້າຫາກວ່າປະເທດໃດ, ມີຄົນມີຄວາມຮູ້ສະຕິປັນຍາດັ່ງກ່າວມາແລ້ວ ປະເທດນັ້ນຊາດນັ້ນກໍຈະຈະເລີນຮຸ່ງເຮືອງ ແລະບໍ່ຕົກເປັນຂ້ອຍຂ້າຂອງປະເທດອື່ນຢ່າງແນ່ນອນ. ຖ້າຫາກວ່າຄົນເຮົາຫລືປະເທດຊາດມີພຽງແຕ່ກຳລັງກາຍ, ກຳລັງຄົນ, ກຳລັງອາວຸດກໍຍັງບໍ່ພຽງພໍຈະປົກປັກຮັກສາປະເທດຊາດບ້ານເມືອງ ໃຫ້ພົ້ນຈາກໄພອັນຕະລາຍໄດ້ ຈະຕ້ອງມີພະລັງອັນປະເສີດຄື ພະລັງແຫ່ງປັນຍານີ້ເອງ.

**ໃຈຄວາມສຳຄັນຂອງເລື່ອງ**: ສັນລະເສີນຄວາມເປັນເລີດແຫ່ງປັນຍາ. ປັນຍາເປັນສິ່ງນຳພາເຮົາໄປສູ່ຄວາມສຸກ. ຄວາມສຳເລັດ, ຄວາມຈະເລີນງອກງາມໃນທຸກດ້ານ ສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະໄພອັນຕະລາຍທຸກຢ່າງໄດ້ເປັນຢ່າງດີ.

② ບົດຂ່າວ **" ພູເຂົາໄຟລະເບີດໃນປາປົວນິວກີເນ"**

(ຂປລ) ການລະເບີດຂອງພູເຂົາໄຟຢ່າງຮຸນແຮງ ເທິງເກາະແຫ່ງໜຶ່ງໃນປະເທດປາປົວນິວກີເນ ໄດ້ບັງຄັບໃຫ້ມີການຍົກຍ້າຍຊາວບ້ານຈຳນວນຫລາຍຮ້ອຍຄົນ ອອກຈາກເຮືອນຊານຂອງເຂົາເຈົ້າ ຢ່າງໜ້ອຍມີຜູ້ເສຍຊີວິດ 2 ຄົນ ແລະອີກ 18 ຄົນໄດ້ຮັບບາດເຈັບຢູ່ໃນເກາະມານຳ ເຊິ່ງຢູ່ຫ່າງໄກຈາກເກາະໃຫຍ່ປາປົວນິວກີເນ ປະມານ 15 ກິໂລແມັດ ທາງນອກຝັ່ງກ້ຳຕາເວັນອອກສຽງເໜືອ.

ກ່າວກັນວ່າຂີ້ເຖົ່າ ແລະຖ່ານໄຟ ໄດ້ໄຫລລົງສູ່ບ້ານແຫ່ງຕ່າງໆຈຳນວນໜຶ່ງ. ປະຊາຊົນທີ່ອາໄສຢູ່ຕາມບ້ານຕາມເສັ້ນທາງລົງຂອງຖ່ານຂອງພູເຂົາໄຟນັ້ນ ຖືກຍົກຍ້າຍອອກໄປແຫງອື່ນ, ສ່ວນອີກ 7000

ຄົນ ກໍແມ່ນຢູ່ນທ່າກຽມພ້ອມ.

**ໃຈຄວາມສໍາຄັນຂອງເລື່ອງ:** ເກີດພູເຂົາໄຟລະເບີດໃນປະເທດປາປົວນິວກີເນ ເຊິ່ງມີຄົນເສຍຊີວິດ 2 ຄົນ ແລະບາດເຈັບ 18 ຄົນ. ມີປະຊາຊົນຈຳນວນຫນຶ່ງຕ້ອງໄດ້ຍ້າຍທີ່ຢູ່ອາໄສ ເນື່ອງຈາກເສດເຖົ່າຖ່ານ ໄດ້ໄຫລມາໃສ່ບ້ານເຮືອນຂອງພວກເຂົາ ແລະອີກ 7.000 ຄົນ ຢູ່ໃນທ່າກຽມພ້ອມ.

③ ບົດກອນ **"ຄິດເຖິງໄຊງ່ອນ"**

| | |
|---|---|
| ✷ ໄດ້ຫລາຍປີມາແລ້ວ | ທີ່ເຮົາຈາກກັນໄກ |
| ແຕ່ດວງໃຈຂອງຮຽມ | ບໍ່ປ່ຽນແປງພໍຫນ້ອຍ |
| ອ້າຍຫາກຄອຍຫານ້ອງ | ບໍ່ມີວັນຊິປຸ່ນປ່ຽນ |
| ຍິ່ງກະສຽນປ່ຽນຂຶ້ນ | ຍິ່ງອວນອ້າຍຮັກນາງ |
| ✷ ພູຫລວງອາດເກື່ອນກົ້ງ | ນ້ຳຂອງຂາດເຂີນວັງ |
| ໄຊງ່ອນຫາງວຽງຈັນ | ຫ່າງໄກກັນແທ້ |
| ແຕ່ຫາກດວງໃຈອ້າຍ | ບໍ່ມີວັນຊິເຫີນຫ່າງ |
| ຄິດເຖິງນົງນາດນ້ອງ | ບໍ່ມີມື້ຊິຈືດຈາງ。 |
| ✷ ເຖິງວ່າຮອຍຕີນນ້ອງ | ຖືກລົມເປົ່າສູນເສຍ |
| ເຖິງວ່າປອຍຜົມນາງ | ຖືກແດດຝົນເຜົາລ້າງ |
| ເຖິງວ່າຕົວນາງນ້ອງ | ຕົກເປັນຂອງຄົນອື່ນ |
| ຮູບຊົງນາງຢູ່ຄ້າງ | ແກ່ນຕາອ້າຍຄູ່ຊູ່ຍາມ |
| ✷ ຖ້ານ້ອງຄິດຮອດອ້າຍ | ໃຫ້ຫລຽວເບິ່ງເດືອນດາວ |
| ແສງຕາເຮົາ | ຊິພົບກັນຢູ່ເທິງຟ້າ |
| ອ້າຍຫາກຍັງຄອຍຖ້າ | ດວງໃຈນາງນັດບ່ອນ |
| ເພື່ອໃຫ້ອ້າຍໄດ້ຈອບນ້ອງ | ພຽງດ້ານພາບມະໂນ. |

**ໃຈຄວາມສໍາຄັນ:** ຄວາມຄິດຮອດຄິດເຖິງຄົນຮັກຂອງນັກກະວີ, ເຖິງຈະຫ່າງກັນໄກແສນໄກ ແລະວັນເວລາປ່ຽນແປງໄປ ແຕ່ພາບຄວາມຮັກຍັງຝັງແຫນ້ນຢູ່ໃນສ່ວນເລິກຂອງຫົວໃຈຕະຫລອດເວລາ.

## 6.2 ການຟັງຈັບໃຈຄວາມລະອຽດ

ການຟັງແບບນີ້ ແມ່ນການຟັງ ເພື່ອຕ້ອງການລາຍລະອຽດຕ່າງໆຂອງເລື່ອງທີ່ຟັງເຊັ່ນ ຟັງສາລະຄະດີ, ຟັງການແນະນຳໃຫ້ເຮັດ ແລະປະຕິບັດກຳມະວິທີຕ່າງໆເຊັ່ນ ການທົດລອງ, ການແນະນຳການປູກພືດ, ປຸງອາຫານ... ຈະຕ້ອງໄດ້ຟັງ ແລະຈັບໃຈຄວາມໃຫ້ລະອຽດ ບໍ່ອາດຂ້າມຂັ້ນຕອນໃດຫນຶ່ງໄດ້.

ນອກຈາກນີ້, ການຟັງເພື່ອຕ້ອງການໂຕ້ແຍ້ງ ຫລືເຫັນດີເຫັນພ້ອມ ກໍຕ້ອງໄດ້ຟັງຢ່າງລະອຽດ ເຊັ່ນກັນ ຕົວຢ່າງຟັງການໂຕ້ວາທີ, ຟັງການໂຄສະນາ, ຟັງສາລະຄະດີ ແລະອື່ນໆ.

✷ **ຕົວຢ່າງ** ຟັງສາລະຄະດີຕໍ່ໄປນີ້:

✍ **ທ່ານຮູ້ບໍ່ວ່າ:**

- ປະລາສະຕິກໃສທີ່ໃຊ້ຫຸ້ມຫໍ່ອາຫານທົ່ວໄປນັ້ນ ຈະມີການໃສ່ສານປະລາສະຕິກໄຊເຊີ ເຊິ່ງເປັນສານພິດທີ່ອາດສະຫລາຍໂຕປົນເປື້ອນກັບອາຫານໄດ້.

- ສີຂາວຂອງເຈ້ຍອະນາໄມທີ່ນິຍົມໃຊ້ແທນຜ້າເຊັດປາກນັ້ນ, ເກີດຈາກການຟອກສີ ເຊິ່ງໃນຂະບວນການຜະລິດກໍ່ໃຫ້ເກີດສານໄດອອກຊິນ ທີ່ຈະລະລາຍສູ່ແຫລ່ງນ້ຳຕໍ່ໄປໄດ້.

✍ **ວິທີປະຕິບັດ:**

- ເລືອກພາຊະນະທີ່ນຳມາໃຊ້ຫມູນວຽນໄດ້ເຊັ່ນ ຈານສະແຕນເລດ, ຈານກະເບື້ອງ ສຳລັບເກັບອາຫານໄວ້ໃນຕູ້ເຢັນ ແທານການໃຊ້ປະລາສະຕິກໃສ ຫລືວ່າແຜ່ນອາລຸມີນຽມ.

- ໃນບາງກໍລະນີ, ຄວນໃຊ້ຜ້າເຊັດມື ຫລືຜ້າເສດ ເຊິ່ງສາມາດຊັກລ້າງໄດ້ແທນເຈ້ຍອະນາໄມ.

- ໃຊ້ຖົງຢາງປະລາສະຕິກຢ່າງປະຢັດ ແລະລະວັງພິດຮ້າຍຂ້າງຄຽງ ໂດຍສະເພາະແມ່ນຫ້າມໃຊ້ຖົງຢາງປະລາສະຕິກ ທີ່ໄດ້ຈາກການນຳຂີ້ເຫຍື້ອປະລາສະຕິກໄປຜ່ານຂະບວນການຜະລິດໃຫມ່(Recycle) ກັບອາຫານຮ້ອນ ຫລືອາຫານມັນ.

✍ **ໃຈຄວາມລະອຽດ:**

ບໍ່ຄວນຫຸ່ມຫໍ່ອາຫານດ້ວຍປະລາສະຕິກໃສ ເນື່ອງຈາກມີສານພິດທີ່ເອີ້ນວ່າ ປະລາສະຕິກໄຊເຊີ ປົນໃສ່ອາຫານ ຫລືເຈ້ຍອະນາໄມທີ່ເຮົາໃຊ້ເຊັດປາກນັ້ນ ມີສານໄດອອກຊິນ ແລະລາຍຕົວສູ່ແຫລ່ງນ້ຳໄດ້.

✍ **ສິ່ງທີ່ຄວນປະຕິບັດ:**

- ໃຊ້ພາຊະນະທີ່ໃຊ້ຫມູນວຽນໄດ້ເຊັ່ນ ຈານກະເບື້ອງ, ຈານສະແຕນເລດ ເປັນຕົ້ນ.
- ໃຊ້ຜ້າເຊັດມື, ຜ້າເສດທີ່ສະອາດ ແທນເຈ້ຍອະນາໄມ.
- ອາຫານທີ່ຮ້ອນ ແລະມັນຍິ່ງບໍ່ຄວນໃຊ້ປະລາສະຕິກ.

* **ສະຫລຸບ:** ການຮູ້ຈັກ "ຟັງເປັນ" ເປັນທັກສະທາງພາສາທີ່ມີບົດບາດສຳຄັນຕໍ່ມະນຸດ ແລະເປັນສິ່ງທີ່ຈຳເປັນໃນການດຳເນີນກິດຈະກຳຕ່າງໆໃນສັງຄົມ ເຊິ່ງນຳຜົນປະໂຫຍດຢ່າງຫລວງຫລາຍມາສູ່ມະນຸດ ແລະສັງຄົມ. ດັ່ງນັ້ນ, ຢາກໃຫ້ເກີດປະໂຫຍດຢ່າງແທ້ຈິງໄດ້ ຈຶ່ງຕ້ອງເຝິກທັກສະການຟັງ, ຮູ້ຈັກສັງເກດຕີລາຄາເລື່ອງທີ່ຟັງວ່າ ຄວນຈັບໃຈຄວາມລະອຽດ ຫລືໃຈຄວາມສຳຄັນ ແລະລວມໄປເຖິງການເຂົ້າໃຈຕີລາຄາເລື່ອງທີ່ຟັງຕາມຫລັກຂອງການຟັງທີ່ໄດ້ກ່າວມານັ້ນ ໄດ້ເປັນຢ່າງດີອີກດ້ວຍ.

ຈຶ່ງຄິດສະເຫມີວ່າ ຖ້າຟັງສິ່ງໃດແລ້ວ ແຕ່ບໍ່ໄດ້ຫຍັງເລີຍນັ້ນ, ມັນກຸ້ມຄ່າກັບເວລາທີ່ເສຍໄປແລ້ວຫລືບໍ່ ທີ່ຈະຕ້ອງໄດ້ເສຍເວລາມານັ່ງຟັງ ໂດຍບໍ່ໄດ້ເກີດປະໂຫຍດຫຍັງ.

# ບົດທີ 2 ທັກສະການເວົ້າ

## 1. ຄວາມຮູ້ທົ່ວໄປກ່ຽວກັບການເວົ້າ

ການເວົ້າ ແມ່ນຂະບວນການຕິດຕໍ່ສື່ສານຢ່າງໜຶ່ງຂອງມະນຸດ ໂດຍໃຊ້ສຽງເວົ້າປະກອບກັບກິລິຍາທ່າທາງ ຫລືການເຄື່ອນໄຫວຕ່າງໆເປັນພາຫະນະ. ນັກພາສາສາດຖືວ່າ: ພາສາທີ່ແທ້ຈິງຄືສຽງເວົ້າທີ່ມີຄວາມໝາຍຂອງມະນຸດທີ່ມີສະຕິສຳປະຊັນຍະ. ໃນບັນດາທັກສະທັງສີ່ຢ່າງ ເຊິ່ງໄດ້ແກ່ການຟັງ, ການເວົ້າ, ການອ່ານ ແລະການຂຽນ. ການເວົ້ານັບວ່າມີຄວາມສຳຄັນບໍ່ໜ້ອຍ ເພາະເປັນຂະບວນການຕິດຕໍ່ສື່ສານໄດ້ສະດວກ ແລະສື່ຄວາມເຂົ້າໃຈໄດ້ຫລາຍທີ່ສຸດ. ການຮຽນຮູ້ກ່ຽວກັບການເວົ້າ ແລະການເຝິກເວົ້າຢ່າງຖືກຕ້ອງຕາມຫລັກວິຊານັ້ນ ຈະຊ່ວຍໃຫ້ມີຄວາມສາມາດການເວົ້າ ຢ່າງເໝາະສົມກັບກາລະເທສະ ແລະບຸກຄົນ, ຊ່ວຍໃຫ້ການດຳລົງຊີວິດຢູ່ໃນສັງຄົມຮ່ວມກັບຜູ້ອື່ນໄດ້ຢ່າງມີຄວາມສຸກ ແລະປະກອບສຳມາຊີບ ຫລືເຮັດວຽກຕ່າງໆຢ່າງມີປະສິດທິຜົນ.

## 2. ຄວາມສຳຄັນຂອງການເວົ້າ

ຄວາມເວົ້າຂອງຄົນເຮົາມີຄ່າ ແລະມີພະລັງອັນມະຫາສານເໜືອກວ່າພະລັງໃດໆ ເຊິ່ງສາມາດເຮັດໃຫ້ຄົນເຮົາມີກຳລັງໃຈ, ດີໃຈ, ເສຍໃຈ, ຈະເລີນກ້າວໜ້າ ຫລືຫລົ້ມຈົມດ້ວຍຄຳເວົ້າກໍອາດເປັນໄປໄດ້. ການເວົ້າສ້າງໄດ້ທັງມິດແລະສັດຕູຖ້າເວົ້າດີກໍເປັນປະໂຫຍດ ກົງກັນຂ້າມຖ້າເວົ້າຊົ່ວກໍອາດເປັນໂທດໃຫ້ແກ່ຕົນເອງ. ດັ່ງນັ້ນ, ການຮູ້ຈັກເວົ້າຖືກຕ້ອງຕາມຫລັກການ ຍ່ອມເປັນປະໂຫຍດຢ່າງຫລວງຫລາຍ. ບູຮານເຄີຍສັ່ງສອນໄວ້ວ່າ:

"ເວົ້າດີ ມີສີແກ່ປາກ"

"ໄວປາກເສຍສິນ ໄວຕີນຕົກກົກໄມ້"

"ຄົມປາກຂອງຄົນ ຄົມຍິ່ງກວ່າຄົມດາບ"

ຈາກຄຳເວົ້າຂ້າງເທິງ ໄດ້ບົ່ງບອກເຖິງຄວາມສຳຄັນຂອງການເວົ້າ ເຊິ່ງເນັ້ນໃຫ້ເຫັນໂທດຂອງການເວົ້າຊົ່ວ ແລະຄຸນຄ່າຂອງການເວົ້າດີ. ຄວາມສຳຄັນຂອງການເວົ້າພໍສະຫລຸບໄດ້ 2 ຢ່າງຄື

### 2.1 ຄວາມສຳຄັນຕໍ່ຜູ້ເວົ້າ

- ຜູ້ທີ່ມີຄວາມສາມາດໃນການເວົ້າ ຈະເປັນເໝືອນຜູ້ມີພະລັງອຳນາດຢູ່ໃນຕົວ, ເຮັດໃຫ້ຄົນອື່ນນັບຖື, ມີລັກສະນະຂອງຄວາມເປັນຜູ້ນຳ, ເຂົ້າຄົບຄ້າສະມາຄົມກັບຄົນອື່ນໄດ້ດີ ແລະສະແດງອອກເຖິງຄວາມສະຫລຽວສະຫລາດ.
- ຜູ້ມີຄວາມສາມາດໃນການເວົ້າ ເປັນທົນທາງກ້າວໄປເຖິງຜົນສຳເລັດໃນວຽກຕ່າງໆ ທັງໃນດ້ານສ່ວນຕົວ ແລະການປະກອບອາຊີບ. ຫລາຍທ່ານໃຫ້ທັດສະນະວ່າ:

"ຄວາມເວົ້າດີ ເປັນຂໍກຸນແຈຂອງຄວາມຮຸ່ງເຮືອງ"

"ການເວົ້າດີມີສິລະປະ ເໝືອນມີຄວາມສຳເລັດໃນຊີວິດໄປແລ້ວເຄິ່ງໜຶ່ງ"

### 2.2 ຄວາມສຳຄັນຕໍ່ສ່ວນລວມ

- ການເວົ້າມີຄວາມສຳຄັນຕໍ່ສ່ວນລວມ ໂດຍສະເພາະແມ່ນວິທີເຜີຍແຜ່ແນວທາງນະໂຍບາຍການເມືອງ, ການປົກຄອງບ້ານເມືອງ, ເຜີຍແຜ່ຫລັກສິນທຳຄຳສອນທາງສາສະໜາ.

24 / VII
ຫ້າມຈຳໜ່າຍ

- ໃນດ້ານເສດຖະກິດຂອງຊາດ ການເວົ້າມີຄວາມສຳຄັນໃນການຊີ້ແຈງ ສ້າງຄວາມເຂົ້າໃຈໃນດ້ານການດຳເນີນທຸລະກິດ ເພື່ອການໂຄສະນາ ແລະທຳຄວາມເຂົ້າໃຈເພື່ອການເຈລະຈາຕົກລົງກັນ. ຫາກທຸລະກິດດຳເນີນໄປໄດ້ດີ ກໍຈະເປັນຜົນເຖິງເສດຖະກິດຂອງຊາດໃຫ້ດີຂຶ້ນ.

- ໃນດ້ານການທະຫານ ກໍຈຳເປັນຕ້ອງເວົ້າເຈລະຈາໃຫ້ເຂົ້າໃຈກັນ, ໃນການເຮັດສົງຄາມກໍຍັງຕ້ອງໄດ້ອາໄສການໂຄສະນາຊວນເຊື່ອ ເພື່ອດຶງດູດຈິດໃຈລະຫວ່າງຝ່າຍດຽວກັນ ແລະຝ່າຍກົງກັນຂ້າມ, ໃຊ້ການນັ່ງໂຕະເຈລະຈາ ເພື່ອຍຸຕິສົງຄາມແລະອື່ນໆ.

## 3. ຈຸດປະສົງຂອງການເວົ້າ

ມະນຸດສາມາດໃຊ້ການເວົ້າ ເພື່ອສະແດງຈຸດປະສົງຂອງຕົນທີ່ແຕກຕ່າງກັນ ດັ່ງລຸ່ມນີ້:

- ໃຊ້ການເວົ້າ ເພື່ອຖ່າຍທອດຄວາມຮູ້ສຶກນຶກຄິດຂອງຕົນສູ່ຜູ້ອື່ນ.
- ໃຊ້ການເວົ້າ ເພື່ອຊອກຫາຄວາມຮູ້, ຄວາມເຂົ້າໃຈໃນບັນຫາຕ່າງໆ ໂດຍສະເພາະໃຊ້ໃນຮູບຂອງຄຳຖາມ ຫລືການຂໍຄຳອະທິບາຍໃນບັນຫານັ້ນ.
- ໃຊ້ການເວົ້າ ເພື່ອຈູງໃຈໃຫ້ຜູ້ອື່ນເຫັນດີເຫັນພ້ອມ ໄປຕາມຄວາມຄິດ ແລະການກະທຳຂອງຕົນ.
- ໃຊ້ການເວົ້າ ເພື່ອສ້າງມະນຸດສຳພັນທີ່ດີກັບຄົນອື່ນໆ.

## 4. ອົງປະກອບຂອງການເວົ້າ

ການເວົ້າອົງປະກອບທີ່ສຳຄັນ 4 ຢ່າງຄື

- ຜູ້ເວົ້າ.
- ເນື້ອເລື່ອງທີ່ຜູ້ເວົ້າໆອອກໄປ.
- ສື່ເຂົ້າສູ່ຜູ້ຟັງໄດ້ແກ່ພາສາ ແລະທ່າທີຕ່າງໆ.
- ຜູ້ຟັງ.

## 5. ຄວາມຮູ້ທົ່ວໄປກ່ຽວກັບຜູ້ເວົ້າ

### 5.1 ລັກສະນະຂອງຜູ້ເວົ້າທີ່ດີ

- ມີຄວາມຮູ້ກ່ຽວກັບການເວົ້າ ແລະເນື້ອໃນທີ່ຈະເວົ້າ.
- ມີທັກສະໃນການເວົ້າ ເປັນຕົ້ນແມ່ນວິທີເວົ້າ ແລະການໃຊ້ພາສາໃນການເວົ້າ.
- ມີທັດສະນະຄະຕິທີ່ດີ, ມີລັກສະນະສັງສັນ ແລະເປັນປະໂຫຍດ.
- ມີບຸກຄະລິກກະພາບທີ່ດີ ແລະເຫມາະສົມ, ແຊກອາລົມຕະຫລົກເລັກຫນ້ອຍ, ຄວບຄຸມອາລົມໄດ້ດີ, ມີຄວາມສຸພາບ, ມີຄວາມເຊື່ອຫມັ້ນໃນຕົນເອງ.

### 5.2 ມາລະຍາດໃນການເວົ້າ

- ໃຊ້ຖ້ອຍຄຳທີ່ສຸພາບ, ບໍ່ໃຊ້ຄຳເວົ້າສຽດສີທີ່ກະທົບກະເທືອນເຖິງຄົນອື່ນ ຫລືເວົ້າຂົ່ມເພີ່ນຍໍໂຕ.
- ນັບຖືເວລາທີ່ກຳນົດໃຫ້ເວົ້າ.
- ແຕ່ງຕົວສຸພາບຮຽບຮ້ອຍ ແລະເຫມາະສົມກັບກາລະເທສະ.
- ເວົ້າໃຫ້ດັງພໍໄດ້ຍິນຫມົດທຸກຄົນ ແຕ່ບໍ່ຫມາຍເຖິງວ່າຮ້ອງ ຫລືເວົ້າດັງເກີນໄປ.
- ຖ້າຢູ່ໃນຫ້ອງສະຫມຸດ ຫລືສະຖານທີ່ສາທາລະນະ ຄວນຄ່ອຍເວົ້າ ເພື່ອບໍ່ໃຫ້ລົບກວນຄົນອື່ນ.
- ຖ້າເປັນການສົນທະນາຕ້ອງຮູ້ຈັກເວົ້າພໍດີພໍຄວນ ເພື່ອເປີດໂອກາດໃຫ້ຄູ່ສົນທະນາໄດ້ເວົ້ານຳ.

- ບໍ່ຄວນເວົ້າສອດຂຶ້ນໃນເວລາຜູ້ອື່ນກໍາລັງເວົ້າ.

- ໃນກໍລະນີຄັດຄ້ານ ຫລືບໍ່ເຫັນດີ ກໍຄວນຄັດຄ້ານຢ່າງສຸພາບ.

- ລະມັດລະວັງທຸກອິລິຍະບົດ ແລະບໍ່ໃຫ້ເປັນໜ້າລັງກຽດເຊັ່ນ ແກະເກົາຮ່າງກາຍ, ເສີຍຜົມ, ສີຫູສີຕາ ໃນເວລາເວົ້າ.

**6. ຫລັກທົ່ວໄປຂອງການເວົ້າໃນທີ່ປະຊຸມ**

**6.1 ກ່ອນການເວົ້າ**

ກ່ອນການເວົ້າ, ຜູ້ເວົ້າຄວນກະກຽມດັ່ງນີ້:

- ເລື່ອງທີ່ຈະເວົ້າແມ່ນເລື່ອງຫຍັງ?
- ເວົ້າໃຫ້ໃຜຟັງ?
- ເວົ້າໃນສະຖານທີ່ໃດ?
- ໃຊ້ເວລາເວົ້າດົນປານໃດ?
- ຈະໃຊ້ວິທີເວົ້າແນວໃດ?
- ຕົນເອງຢູ່ໃນສະພາບເໝາະສົມ ສໍາລັບການເວົ້າແລ້ວຫລືບໍ່?

ການກະກຽມທຸກສິ່ງທຸກຢ່າງຈາກຄໍາຖາມຂ້າງເທິງນີ້, ນອກຈາກຈະເຮັດໃຫ້ຜູ້ເວົ້າມີຄວາມພ້ອມສໍາລັບການເວົ້າແລ້ວ ຍັງຊ່ວຍໃຫ້ເກີດຄວາມໝັ້ນໃຈໃນເວລາດໍາເນີນການເວົ້າອີກດ້ວຍ.

**☺ ຂັ້ນຕອນຂອງການເວົ້າ**

ຄວນເວົ້າໃຫ້ຖືກຕາມຂັ້ນຕອນຂອງການເວົ້າເຊັ່ນ ກ່າວປະຕິສັນຖານ, ຄໍານໍາ, ເນື້ອເລື່ອງ ແລະສະຫລຸບ.

**❖ ກ່າວປະຕິສັນຖານ**

ກ່າວປະຕິສັນຖານ ແມ່ນກ່າວທັກທາຍຜູ້ຟັງ ເຊິ່ງເປັນຂັ້ນຕອນສໍາຄັນຢ່າງໜຶ່ງຂອງການເວົ້າໃນທີ່ປະຊຸມເພື່ອສ້າງຄວາມເປັນມິດທີ່ດີຕໍ່ຜູ້ຟັງ. ໃນການກ່າວປະຕິສັນຖານ ເພິ່ນແຍກອອກເປັນ 2 ຢ່າງຄື ກ່າວປະຕິສັນຖານທີ່ເປັນພິທີການ ແລະກ່າວປະຕິສັນຖານທີ່ບໍ່ເປັນທາງການ.

ກ່າວປະຕິສັນຖານທີ່ເປັນພິທີການ ເຊິ່ງໃຊ້ກ່າວໃນໂອກາດທີ່ເປັນພິທີທາງການ ເຊັ່ນກ່າວເປີດພິທີ, ກ່າວສູນທອນພົດ, ລັດຖະພິທີຕ່າງໆ ມັກຂຶ້ນຕົ້ນດ້ວຍຄໍາວ່າ: "ຮຽນ, ຂໍຮຽນ... ຕໍ່ຕໍາແໜ່ງຂອງຜູ້ທີ່ມີສະຖານະພາບຂອງສັງຄົມ ທີ່ສູງກວ່າໝູ່ໃນກອງປະຊຸມນັ້ນ. ໃນການກ່າວປະຕິສັນຖານແບບນີ້ ບໍ່ຄວນໃຊ້ຄໍາທີ່ສະແດງຄວາມຮູ້ສຶກຕໍ່ທ້າຍເຊັ່ນ "ທີ່ຮັກແພງ, ທີ່ນັບຖື ແລະເຄົາລົບ..."

ຕົວຢ່າງ: ຂໍຮຽນ ທ່ານ ນາຍົກລັດຖະມົນຕີ.

ຮຽນ ທ່ານ ອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ.

ການກ່າວປະຕິສັນຖານທີ່ບໍ່ເປັນທາງການ ເພິ່ນໃຊ້ກ່າວໃນໂອກາດເປີດກອງປະຊຸມ ທີ່ສະແດງຄວາມເປັນກັນເອງເຊັ່ນ ກ່າວປາຖະກະຖາວິຊາການ, ການໂອ້ລົມຕໍ່ກອງປະຊຸມ, ການອະທິບາຍບັນຫາໃດໜຶ່ງ ເພື່ອຄວາມເຂົ້າໃຈແລະອື່ນໆ. ການກ່າວແບບນີ້ຈະມີການສະແດງຄວາມ

ຮູ້ສຶກເຊັ່ນວ່າ: ທີ່ຮັກແພງ, ທີ່ນັບຖື, ທີ່ເຄົາລົບ... ຕໍ່ທ້າຍ ຫລືບາງເທື່ອອາດຈະໃຊ້ຄຳວ່າ: "ສະບາຍດີ" ນຳໜ້າກໍໄດ້.

ຕົວຢ່າງ: ສະບາຍດີ ພໍ່ແມ່ພີ່ນ້ອງທັງຫລາຍ.

ອາຈານ ທີ່ນັບຖື ແລະບັນດາເພື່ອນໆທີ່ຮັກແພງ.

ການກ່າວປະຕິສັນຖານ ຫາກມີພະສົງຢູ່ນຳຈະຕ້ອງໄດ້ກ່າວເຖິງພະສົງກ່ອນ ເຊິ່ງໃຊ້ຄຳວ່າ:

- ນ້ອມນະມັດສະການ ພະເຖລານຸເຖລະ(ພະເຖລະຊັ້ນສູງ).
- ນະມັດສະການ ພະເຖລານຸເຖລະ(ພະສົງທົ່ວໄປ).

❖ **ຄຳນຳ**(ຄວາມນຳ): ແມ່ນການກ່າວນຳຄວາມເຂົ້າສູ່ເລື່ອງທີ່ຕົນຈະເວົ້າ, ບາງຄັ້ງຖ້າເປັນການກ່າວເປີດພິທີ, ກ່າວໃຫ້ຄຳໂອວາດ; ຜູ້ເວົ້າອາດຈະນຳຄວາມດ້ວຍການສະແດງຄວາມຮູ້ສຶກໃນໂອກາດທີ່ເວົ້າໂດຍເຄີຍກ່າວວ່າ:

"ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງ(ຫລືຮູ້ສຶກຍິນດີຢ່າງຍິ່ງ) ທີ່ໄດ້ມີໂອກາດມາຮ່ວມ...ແລະໄດ້ຮັບກຽດຂຶ້ນກ່າວ... ໃນງານຄັ້ງນີ້.

ຖ້າເປັນການກ່າວໃນໂອກາດອັນອື່ນເຊັ່ນ ການສະແດງຄຳຄິດຄຳເຫັນ, ປາຖະກະຖາ, ເວົ້າເພື່ອໃຫ້ຄວາມຮູ້ຕ່າງໆ ບໍ່ຈຳເປັນຈະກ່າວເຖິງຄວາມຮູ້ສຶກກໍໄດ້.

ການນຳຄວາມນັ້ນ ບໍ່ມີຂໍ້ຈຳກັດວ່າຈະນຳດ້ວຍວິທີໃດ ຈະເລີ່ມດ້ວຍຄຳເວົ້າຂອງບຸກຄົນສຳຄັນ, ບົດກະວີ, ສຸພາສິດ, ຄຳຄົມ, ນິຍາມ ແລະອື່ນໆ ເຊິ່ງສຸດແລ້ວແຕ່ວິທີຂອງຜູ້ເວົ້າ ຈະເຮັດໃຫ້ຜູ້ຟັງເກີດຄວາມສົນໃຈ, ປະທັບໃຈ, ເຮັດໃຫ້ເກີດຄວາມຮູ້ສຶກວ່າຢາກຟັງເນື້ອເລື່ອງຕໍ່ໄປ. ສິ່ງສຳຄັນໃນການນຳຄວາມນັ້ນ ຈະຕ້ອງໃຫ້ມີການສຳພັນກັບເນື້ອເລື່ອງ ເຊັ່ນວ່າ:

**① ການເລີ່ມຕົ້ນດ້ວຍຄວາມເວົ້າຂອງບຸກຄົນສຳຄັນ**

"ຮຽນ ຮຽນແລ້ວຮຽນອີກ ຮຽນເລື້ອຍໆໄປ" ແມ່ນຄຳເວົ້າຂອງ ທ່ານ ເລນິນ ຜູ້ນຳທີ່ຍິ່ງໃຫຍ່ຂອງຊົນຊັ້ນກຳມາຊີບ ຄຳນີ້ຍັງເຫັນວ່າມີຄຸນຄ່າ ແລະອະມະຕະ ບໍ່ວ່າຈະຢູ່ໃນຍຸກສະໄໝໃດ. ຂ້າພະເຈົ້າຄິດວ່າ ການສຶກສານັ້ນສຳຄັນສຳລັບທຸກຄົນ, ສຳລັບສັງຄົມ ແລະປະເທດຊາດ ໂດຍບໍ່ໄດ້ເລືອກ ຊົນຊັ້ນ, ວັນນະ, ເພດ, ໄວອາຍຸ... ສຳລັບເຍົາວະຊົນ, ໄວໜຸ່ມ ຜູ້ທີ່ອະນາຄົດຍັງຍາວໄກກໍຍິ່ງມີຄວາມສຳຄັນ ແລະມີຄວາມຈຳເປັນຢ່າງຍິ່ງ.

**② ການເລີ່ມຕົ້ນດ້ວຍຄຳສຸພາສິດ, ຄຳຄົມຕ່າງໆ**

ສຸພາສິດບົດໜຶ່ງກ່າວໄວ້ວ່າ: "ພາສາບອກຊາດ ມາລະຍາດບອກຕະກຸນ" ຄຳສຸພາສິດນີ້ມີຄວາມສຳຄັນຫລາຍສຳລັບການສັ່ງສອນຄົນໃຫ້ມີນ້ຳໃຈຮັກຊາດ. ຄວາມເປັນຊາດໜຶ່ງໆນັ້ນ ເປັນສິ່ງທີ່ທຸກຄົນພາຍໃນຊາດຮັກ ແລະຫວງແຫນທີ່ສຸດ. ບໍ່ມີສິ່ງໃດຈະພູມໃຈເທົ່າກັບຊາດຂອງຕົນເອງທີ່ມີຄວາມເປັນເອກະລາດ, ມີສະຖຽນລະພາບ ຫລືມີຄວາມໝັ້ນຄົງ. ຄວາມເປັນຊາດຈະສະແດງອອກໂດຍການມີພາສາ, ວັດທະນະທຳ ແລະມີເອກະລັກສະເພາະເປັນຂອງຕົນເອງ. ສາຍບົວເປັນສິ່ງຢັ້ງຢືນຄວາມເລິກຕື້ນສັນໃດ ພາສາ, ວັດທະນະທຳ, ຈັນຍາທຳ, ຂະຫນົບທຳນຽມ ກໍປຽບເຫມືອນສິ່ງບົ່ງບອກເຖິງຄວາມຈະເລີນ ແລະຄວາມໝັ້ນຄົງຂອງຊາດສັນນັ້ນ. ພາສາເປັນຫົວໜ່ວຍຢ່າງເລິກເຊິ່ງທີ່ພົວພັນກັບຊາດ ແລະມີຜົນສະ

ທ້ອນອັນໃຫຍ່ຫລວງຕໍ່ກັບຄວາມໝັ້ນຄົງຂອງຊາດ; ຫາກຊາດໜຶ່ງບໍ່ມີພາສາເປັນຂອງຕົນເອງແລ້ວ ຈະເປັນຊາດໄດ້ແນວໃດ. (ຫົວຂໍ້ເລື່ອງ "ພາສາກັບຄວາມໝັ້ນຄົງຂອງຊາດ").

③ **ການເລີ່ມດ້ວຍຄຳນິຍາມ**

ຄູແມ່ນບຸກຄົນທີ່ເຮັດວຽກສິດສອນ, ຖ່າຍທອດຄວາມຮູ້ວິຊາການຕ່າງໆແກ່ຜູ້ທີ່ໃຫ້ຊື່ວ່າ ສິດສານຸສິດ, ເປັນນັກຮຽນຫລືວ່ານັກສຶກສາ. ຄູນັ້ນເປັນແສງສະຫວ່າງສ່ອງໄປທົ່ວແຫ່ງຫົນ ກຳຈັດຄວາມໂງ່ຈ້າມືດມົນ ແລະໄຮ້ການສຶກສາ. ສາມາດເວົ້າໄດ້ວ່າ ຄູປຽບເໝືອນຜູ້ໃຫ້, ໃຫ້ສິ່ງທີ່ຍິ່ງໃຫຍ່ທີ່ສຸດ ນັ້ນກໍຄືອະນາຄົດ ແລະຄວາມສະຫວ່າງສະໄຫວແກ່ທຸກຄົນ. (ຫົວຂໍ້ເລື່ອງ "ຄູຄືຜູ້ໃຫ້").

❖ **ເນື້ອເລື່ອງ:** ເນື້ອເລື່ອງແມ່ນຂັ້ນຕອນໜຶ່ງທີ່ສຳຄັນທີ່ສຸດ ເພາະເປັນຫົວໃຈຂອງເລື່ອງ. ຜູ້ດຳເນີນການເວົ້າຕ້ອງຮູ້ຈັກຈັດລຳດັບຫົວຂໍ້ຍ່ອຍໃຫ້ເໝາະສົມ ເພື່ອບໍ່ເຮັດໃຫ້ຜູ້ຟັງເກີດຄວາມສັບສົນ. ການຈັດລຳດັບກ່ອນ ຫລືຫລັງຂອງເນື້ອເລື່ອງ ແລະການຫາຕົວຢ່າງປະກອບ ຕ້ອງພິຈາລະນາວ່າຈະໃຊ້ຕົວຢ່າງໃນຕອນໃດ ເປັນສິ່ງສຳຄັນຂອງການເວົ້າເນື້ອເລື່ອງ. ຕົວຢ່າງ: ການເວົ້າເລື່ອງ "ຄວາມສາມັກຄີ" ຄວນຮູ້ຈັດລຳດັບ ແລະຂັ້ນຕອນດັ່ງລຸ່ມນີ້:

① ຄວາມສາມັກຄີແມ່ນຫຍັງ?

② ຄຸນປະໂຫຍດຂອງຄວາມສາມັກຄີມີແນວໃດ?

③ ຄວາມສາມັກຄີມີຄວາມສຳຄັນຕໍ່ສັງຄົມແນວໃດ?

④ ຜົນຕ່າງໆລະຫວ່າງຄວາມແຕກແຍກ ແລະການມີຄວາມສາມັກຄີເປັນແນວໃດ?

❖ **ສະຫຼຸບ:** ການຈົບການເວົ້າແຕ່ລະຄັ້ງນັ້ນ, ຜູ້ເວົ້າຄວນຄິດສະເໝີວ່າ ຈະໃຊ້ວິທີສະຫລຸບເລື່ອງແນວໃດ ຜູ້ຟັງຈຶ່ງຈະປະທັບໃຈ, ອາດຈົບດ້ວຍການຍ້ຳຄວາມຄິດຄວາມສຳຄັນຂອງຜູ້ເວົ້າ, ຈົບດ້ວຍຄຳຄົມ, ຄຳສຸພາສິດ, ບົດກະວີ ແລະແຝງດ້ວຍນ້ຳສຽງທີ່ສະກິດໃຈໃຫ້ຄິດ, ໃຫ້ເຫັນດີເຫັນພ້ອມນຳ ຫລືປັ່ນແທນທັດສະນະຄະຕິຕ່າງໆ ຕາມຈຸດປະສົງໃນການເວົ້າໃນຄັ້ງນັ້ນ. ຕົວຢ່າງການຈົບດ້ວຍການເວົ້າເລື່ອງ "ຄວາມສາມັກຄີ".

ບັນດາທ່ານທີ່ນັບຖື! ຄວາມສາມັກຄີນັ້ນມີພະລັງເໜືອກວ່າສິ່ງໃດໆໃນໂລກ. ສາມັກຄີກັນໄວ້ເຖີດ "ໂຮມກັນເຮົາຢູ່ ແຍກໝູ່ເຮົາຕາຍ", "ຮັກກັນດີກວ່າຊັງກັນ", "ຮັກກັນດີມີກຳໄລ ຊັງກັນເທົ່ານັ້ນຈຶ່ງຈະໄຮ້ປະໂຫຍດ".

| | | |
|---|---|---|
| ເພິ່ນວ່າ: | ສາຍຝົນຢົດຢາດຍ້ອຍ | ເທື່ອລະຢາດຍັງເຕັມໄຫ |
| | ຫລາຍເມັດໄຫລລົງໂຮມ | ຈຶ່ງປ່ອງເປັນສະໝຸດກວ້າງ |
| | ມີຕໍ່ມີປະສານແໜ້ນ | ຫລາຍພະລັງເປັນກຸ່ມ |
| | ຫລາຍມືຈັບຊ່ວຍຊ້ອນ | ຊິເສີມເພີ້ມເພີ່ມພະລັງ ແທ້ແລ້ວ |

ຂອບໃຈ.

6.2 ຂະບະດຳເນີນການເວົ້າ

- ເວົ້າໃຫ້ຖືກຕາມຂັ້ນຕອນຂອງການເວົ້າ.
- ປາກົດຕົວເທິງເວທີດ້ວຍຄວາມໝັ້ນໃຈ, ຄວບຄຸມທ່າທີໃຫ້ໄດ້ ໂດຍບໍ່ສະແດງອາການເກີ້ເຂີນ ຫລືຕື່ນເຕັ້ນ
- ເວົ້າໃຫ້ຊັດເຈນ ຄວນລະວັງການອອກສຽງອັກຂະຫລະບາງຕົວ(ພາສາທ້ອງຖິ່ນ) ໃຫ້ຖືກຕ້ອງຕາມຫລັກພາສາ, ນອກຈາກນັ້ນຄວນເວົ້າໃຫ້ດັງພໍທີ່ຈະໄດ້ຍິນໝົດທຸກຄົນ. ຮູ້ຈັກເວັ້ນການເວົ້າໃຫ້ເປັນວັກ, ເປັນຕອນ, ມີຈັງຫວະຂຶ້ນລົງຕາມຄວາມເໝາະສົມ ຫລືວ່າໃຊ້ນ້ຳໜັກສຽງສອດແຊກເຂົ້າເນື້ອໃນເລື່ອງຢູ່ບ່ອນທີ່ເຫັນວ່າເໝາະສົມ.
- ສະແດງສີໜ້າ, ທ່າທີ, ສາຍຕາ ປະກອບການເວົ້າ ເພື່ອຮຽກ ຫລືດຶງດູດຄວາມສົນໃຈ.
- ສຳນວນທີ່ໃຊ້ໃຫ້ເໝາະສົມກັບລະດັບຜູ້ຟັງ.
- ປະກອບອາລົມ ຫລືຕະຫລົກແດ່ເລັກໜ້ອຍ ໃສ່ໃນແຕ່ລະຕອນຂອງເນື້ອເລື່ອງຕາມຄວາມເໝາະສົມ.
- ການເວົ້າທີ່ດີມີຂໍ້ສັງເກດດັ່ງນີ້:
    + ຂຶ້ນຕົ້ນດີ: ຂຶ້ນຕົ້ນເລື່ອງຢ່າງໜ້າສົນໃຈ, ແປກ, ຈັບໃຈ, ຊວນໃຫ້ຕິດຕາມເນື້ອເລື່ອງ.
    + ລຳດັບເລື່ອງດີ: ມີການຈັດລຳດັບເນື້ອເລື່ອງ ອັນໃດຄວນເວົ້າກ່ອນ ແລະອັນໃດຄວນເວົ້າຕາມຫລັງ.
    + ສຳນວນໂວຫານດີ: ໃຊ້ພາສາເປັນ, ຖືກຕ້ອງ, ຮູ້ຈັກອ້າງອີງ, ປຽບທຽບ, ຍົກຕົວຢ່າງ ທີ່ສົມມຸດຈາກ(ຄຳສຸພາສິດ, ຄຳເວົ້າຂອງບຸກຄົນສຳຄັນ, ຄຳຄົມ...).
    + ລົງທ້າຍດີ: ເຮັດໃຫ້ຜູ້ຟັງຈັບຈຸດໄດ້ແຈ່ມແຈ້ງ, ເນັ້ນຄວາມຄິດສຳຄັນ ເພື່ອໃຫ້ຜູ້ຟັງຮູ້ສຶກວ່າ ໄດ້ຄວາມຮູ້, ຄວາມຄິດທີ່ດີຈາກເລື່ອງທີ່ເວົ້າ, ຮູ້ສຶກເພິ່ງພໍໃຈໃນເລື່ອງທີ່ຟັງ.

6.3 ຫລັງການເວົ້າ

ຜູ້ທີ່ຫວັງຈະປະສົບຜົນສຳເລັດໃນການເວົ້າ ຈະບໍ່ຢຸດພຽງແຕ່ການສິ້ນສຸດການເວົ້າໃນຄັ້ງນັ້ນເທົ່ານັ້ນ ຈະຕ້ອງໄດ້ປະເມີນຜົນການເວົ້າຂອງຕົນແຕ່ລະຄັ້ງດ້ວຍຕົນເອງ ແລະຜູ້ອື່ນໆ. ຍອມຮັບເອົາຄຳຕຳນິວິຈານຈາກຜູ້ອື່ນວ່າ ມີສ່ວນໃດດີ ແລະສ່ວນບົກພ່ອງບ່ອນໃດເພື່ອນຳໄປແກ້ໄຂ.

ນອກຈາກນັ້ນ, ຜູ້ເວົ້າຈະຕ້ອງສົນໃຈຮັບຟັງ ແລະສຶກສາວິທີການເວົ້າຂອງຜູ້ເວົ້າທີ່ດີ ຫລືນັກເວົ້າຜູ້ປະສົບຜົນສຳເລັດໃນການເວົ້າມາແລ້ວ ເພື່ອເປັນແນວທາງໃນການປັບປຸງ ວິທີການເວົ້າຂອງຕົນໃນຄັ້ງຕໍ່ໄປ.

# ບົດທີ 3 ທັກສະການອ່ານ

## 1. ຄວາມສຳຄັນຂອງການອ່ານ

ການອ່ານມີຄວາມສຳຄັນຢ່າງຍິ່ງ ໃນການສຶກສາຫາຄວາມຮູ້ໃນວິຊາການຕ່າງໆ. ການອ່ານສາມາດເຮັດໃຫ້ເຮົາຮັບຮູ້ຄວາມຮູ້ສຶກນຶກຄິດຂອງຄົນທັງໃນອະດີດ ແລະປັດຈຸບັນ, ຊ່ວຍເພີ່ມສະຕິປັນຍາ, ຄວາມຮັບຮູ້ ແລະຄວາມເຂົ້າໃຈບັນຫາຕ່າງໆໄດ້ຢ່າງເລິກເຊິ່ງ.. ດັ່ງນັ້ນ, ມັນມີຄວາມສຳຄັນຢ່າງຍິ່ງທີ່ຈະຕ້ອງໄດ້ເຝິກທັກສະການອ່ານ.

ການອ່ານມີຄວາມສຳຄັນຫລາຍຕໍ່ກັບການດຳລົງຊີວິດຂອງຄົນເຮົາໃນປັດຈຸບັນ. ການອ່ານປຶ້ມ ຫລືໜັງສືເລື່ອງຕ່າງໆນັ້ນ ຈະເປັນເສັ້ນທາງສູ່ການພັດທະນາຄົນໃຫ້ມີຄຸນະພາບ. ຜູ້ທີ່ຮັກການອ່ານຈະເປັນປະໂຫຍດຢ່າງຫລວງຫລາຍໃນການເພີ່ມພູນຄວາມຮູ້ທຸກສາຂາອາຊີບ ເພື່ອປັບປຸງການປະກອບອາຊີບໃຫ້ຈະເລີນກ້າວໜ້າ.

ການອ່ານເພື່ອຄວາມບັນເທີງ ເຮັດໃຫ້ຈິດໃຈແຈ່ມໃສ ເປັນການພັກຜ່ອນຢ່ອນໃຈອີກແບບໜຶ່ງ, ເຮັດໃຫ້ຊີວິດມີຄວາມກະຕືລືລົ້ນ, ກ້າຕໍ່ສູ້ກັບອຸປະສັກ ແລະຄວາມເປັນຕົວຂອງຕົນເອງ ເພື່ອການດຳລົງຊີວິດຢ່າງມີຄວາມສຸກ.

## 2. ຈຸດມຸ່ງໝາຍໃນການອ່ານ

### 2.1 ອ່ານເພື່ອຄວາມມ່ວນຊື່ນ

ການອ່ານແບບນີ້ ແມ່ນການອ່ານປະເພດບົດເລື່ອງຕ່າງໆເຊັ່ນ ນະວະນິຍາຍ, ເລື່ອງສັ້ນ, ບົດລະຄອນ, ກະວີ ແລະອື່ນໆທີ່ໃຫ້ຄວາມເພີດເພີນ, ຜ່ອນຄາຍອາລົມ. ໃນຂະນະດຽວກັນນັ້ນກໍໄດ້ຄວາມຮູ້ໄປນຳ. ການອ່ານເພື່ອຄວາມມ່ວນຊື່ນນີ້ ບໍ່ຫຍຸ້ງຍາກປານໃດ ພຽງແຕ່ເຂົ້າໃຈເລື່ອງ, ຄຳສັບ ແລະຈັບໃຈຄວາມສຳຄັນໃຫ້ໄດ້ກໍພໍ.

### 2.2 ອ່ານເພື່ອຄວາມຮູ້

ການອ່ານແບບນີ້ ໄດ້ແກ່ການອ່ານຕຳລາຮຽນ, ສາລະຄະດີ, ບົດຄວາມ,... ເຊິ່ງຕ້ອງການຄວາມລະອຽດພຽງໃດນັ້ນ ມັນຂຶ້ນກັບຈຸດປະສົງຂອງຜູ້ອ່ານເປັນບັນຫາສຳຄັນ. ບາງຄົນຕ້ອງການຄວາມເຂົ້າໃຈຢ່າງລະອຽດ ຈະຕ້ອງອ່ານໄປຄິດໄປ ຍິ່ງອ່ານຊ້າຍິ່ງເກີດປັນຍາ; ບາງຄົນອ່ານເພື່ອຂຽນລາຍງານຫລືຂຽນບົດວິທະຍານິພົນຈຳເປັນຕ້ອງໄດ້ອ່ານປຶ້ມຫລາຍເຫລັ້ມ ເພື່ອສັງຮວມຄວາມຄິດທີ່ໄດ້ຈາກການອ່ານແລ້ວນຳໄປຂຽນ.

## 3. ປະເພດຂອງການອ່ານ

### 3.1 ການອ່ານໃນໃຈ

ການອ່ານໃນໃຈ ແມ່ນການອ່ານບໍ່ໃຫ້ມີສຽງດັງ ຜູ້ອ່ານຈະຕ້ອງມີຄວາມຮູ້ຄວາມສາມາດດ້ານພາສາ ໝາຍຄວາມວ່າຕ້ອງຮູ້ສັບສຳນວນດີ ແລະກວ້າງຂວາງ, ມີຄວາມສາມາດໃນການເກັບກຳຄວາມຄິດທີ່ມີຢູ່ໃນຂໍ້ຄວາມທີ່ອ່ານ.

ການອ່ານໃນໃຈນັ້ນຈະຕ້ອງອ່ານໄດ້ໄວ, ໃຊ້ເວລາໃນການອ່ານໜ້ອຍ ແຕ່ອ່ານໃຫ້ໄດ້ຫລາຍ, ສາມາດຮວບຮວມຄວາມຄິດໃນແຕ່ລະຫຍໍ້ໜ້າໄດ້ດີ ການອ່ານປະເພດນີ້ສຸດແລ້ວແຕ່ຄວາມຕ້ອງການໃນ

ການອ່ານຂອງຜູ້ອ່ານເຊັ່ນ ອ່ານເພື່ອຈັບໃຈຄວາມ, ອ່ານເພື່ອຕີຄວາມໝາຍ ຫລືອ່ານເພື່ອວິເຄາະ.

### 3.2 ການອ່ານອອກສຽງ

ການອ່ານແບບນີ້ ແມ່ນການອ່ານທີ່ເປັ່ງສຽງອອກໃຫ້ມີສຽງດັ່ງເຊັ່ນ ການອ່ານຂ່າວ, ອ່ານປະກາດ, ອ່ານໜັງສືເລື່ອງທົ່ວໄປ. ການອ່ານອອກສຽງນີ້, ຜູ້ອ່ານຈະຕ້ອງອ່ານອອກສຽງໃຫ້ຖືກຕ້ອງຕາມຫລັກພາສາ ໂດຍສະເພາະແມ່ນດ້ານອັກຂະຫລະ, ຈັງຫວະວັກຕອນ. ພ້ອມກັນນັ້ນກໍຕ້ອງຄຳນຶງເຖິງລະດັບສຽງໃຫ້ດັງພໍທີ່ຜູ້ຟັງຈະໄດ້ຍິນທົ່ວເຖິງ. ຖ້າຜູ້ອ່ານມີເວລາກຽມລ່ວງໜ້າກໍຄວນຈະໄດ້ອ່ານໃນໃຈສາກ່ອນເພື່ອໃຫ້ເຂົ້າໃຈເນື້ອເລື່ອງ.

ການອ່ານອອກສຽງແບ່ງອອກເປັນສອງປະເພດຄື ອ່ານອອກສຽງທຳມະດາ ແລະອ່ານອອກສຽງເປັນທຳນອງ.

#### 3.2.1 ການອ່ານອອກສຽງທຳມະດາ

ການອ່ານແບບນີ້ ແມ່ນການອ່ານອອກສຽງແບບສຽງປົກກະຕິຄື ອ່ານຄ້າຍຄືກັບການເວົ້າ ແຕ່ຊ້າກວ່າການເວົ້າເລັກໜ້ອຍ ແຕ່ຖ້າມີຄຳຫລືຂໍ້ຄວາມສຳຄັນ ຕ້ອງມີການເນັ້ນຄຳໃຫ້ຊັດເຈນ, ຢຸດເພື່ອຫາຍໃຈຕາມຈັງຫວະວັກຕອນ, ເຄື່ອງໝາຍວັກຕອນຕ່າງໆເຊັ່ນ ", . ; : ( ) ! ຯລຯ" (ຈຸດ, ຈ້ຳ, ຈ້ຳຈຸດ, ຈ້ຳສອງເມັດ, ວົງເລັບ, ໝາຍຖາມ ແລະອື່ນໆ).

#### 3.2.1 ການອ່ານອອກສຽງເປັນທຳນອງ

ການອ່ານແບບນີ້ ແມ່ນການອ່ານປະເພດບົດກາບ, ກອນ, ໂຄງ, ສານ, ຮ່າຍ ຫລືບົດຮ້ອຍກອງປະເພດຕ່າງໆ ໃຫ້ເປັນໄປຕາມທຳນອງ, ລີລາ ແລະຈັງຫວະໃຫ້ຖືກຕ້ອງ ເພື່ອໃຫ້ເກີດຄວາມມ່ວນອອນຊອນ, ຈັບໃຈໃນລົດຊາດຂອງພາສາ.

ທຳນອງທີ່ອອນຊອນຂອງປະເພດກອນນັ້ນ ຈະມີລີລາຈັງຫວະແຕກຕ່າງກັນອີງຕາມລັກສະນະຂອງມັນເຊັ່ນ ກາບຕ່າງຈາກກອນ; ກອນກໍຕ່າງຈາກໂຄງ, ສານ ຫລືຮ່າຍ. ເວົ້າລວມແລ້ວ, ແມ່ນປະເພດກອນລ້ວນແຕ່ມີລັກສະນະຈັງຫວະລີລາແຕກຕ່າງກັນ ແມ່ນແຕ່ໃນກອນຊະນິດຕ່າງໆເຊັ່ນ ກອນອ່ານທຳມະດາ, ກອນວິດຊຸມາລີ, ກອນ 8, ກອນ 9, ... ກໍມີຄວາມແຕກຕ່າງກັນ. ຜູ້ອ່ານຄວນຈະໄດ້ເຝິກ ແລະຟັງການອ່ານຂອງຜູ້ຊຳນານ ຈຶ່ງຈະມີຄວາມສາມາດໃນການອ່ານອອກສຽງເປັນທຳນອງຢ່າງຖືກຕ້ອງ ເພາະຖ້າອ່ານບໍ່ຖືກແລ້ວກໍຈະບໍ່ເປັນຕາຟັງເລີຍ.

### 4. ການເຝິກຕົນເອງໃຫ້ເປັນນັກອ່ານທີ່ດີ

ດັ່ງທີ່ໄດ້ກ່າວມາແລ້ວວ່າ ການອ່ານມີຄວາມສຳຄັນທີ່ສຸດ. ຈຶ່ງເປັນເສດຖີຂອງການອ່ານເຖິດ ຜູ້ທີ່ຮັກການອ່ານນັ້ນ ສາມາດຕັດສິນໃຈໃນບັນຫາຕ່າງໆໄດ້ຢ່າງຖືກຕ້ອງ ແລະໄດ້ດີ, ເຮັດໃຫ້ເຮົາໄດ້ເພີ່ມປະສົບການ ເພື່ອປະສິດທິພາບໃນວຽກງານ. ການອ່ານສ້າງໃຫ້ເຮົາມີໂລກະທັດ ແລະຊີວະທັດທີ່ຖືກຕ້ອງ, ສ້າງກຳລັງໃຈ, ສ້າງຄວາມໝັ້ນໃຈໃຫ້ມີຄວາມຫວັງ... ຄົນລາວພວກເຮົາເມື່ອປຽບທຽບກັບຄົນໃນບັນດາປະເທດທີ່ພັດທະນາແລ້ວ ກໍເປັນຕາໜ້າເສຍດາຍທີ່ຍັງຮັກການອ່ານໜ້ອຍເກີນໄປ. ຈຶ່ງມາຕັ້ງໃຈອ່ານໃນວັນນີ້ ຄວາມຫວັງຍັງລໍຖ້າພວກເຮົາຢູ່. ການເຝິກຕົນເອງໃຫ້ເປັນນັກອ່ານທີ່ດີຄວນປະຕິບັດດັ່ງລຸ່ມນີ້:

1) ສ້າງນິໄສຮັກການອ່ານ, ອ່ານປຶ້ມທຸກຊະນິດເທົ່າທີ່ມີເວລາ ແລະໂອກາດ, ອ່ານຈົນເກີດເປັນກິດຈະວັດ.

2) ຮູ້ປະເພດຂອງປຶ້ມເຊັ່ນ ປະເພດປຶ້ມວັນນະຄະດີ, ສາລະຄະດີ, ວາລະສານ, ໜັງສືພິມ, ບົດຄວາມ, ບົດຮ້ອຍກອງ,... ແລະຮູ້ຈັກສ່ວນປະກອບຂອງປຶ້ມເຊັ່ນ ຄຳນຳ, ສາລະບານ.

3) ມີສະມາທິໃນການອ່ານ, ພະຍາຍາມຈັບໃຈຄວາມສຳຄັນຂອງເລື່ອງໃຫ້ໄດ້.

4) ເຝິກອ່ານໄວ ເພື່ອກຳໃຈຄວາມສຳຄັນ ແລະອ່ານຊ້າເພື່ອຄວາມລະອຽດ ຫລືຈຸດມຸ່ງໝາຍຂອງການອ່ານ.

5) ຫລັງຈາກອ່ານເລື່ອງຍາວໆ, ຄວນຈົດສະຫລຸບເນື້ອໃນເລື່ອງນັ້ນເປັນບົດ ຫລືຖ້ອຍຄຳສຳນວນເປັນຂອງຕົນເອງ.

6) ເຝິກນັ່ງອ່ານໃຫ້ຖືກວິທີເຊັ່ນ ນັ່ງໂຕຕັ້ງໃຫ້ທ່ຽງ, ບໍ່ນັ່ງຫລັງກົ່ງ.

7) ມີມາລະຍາດໃນການອ່ານ ໂດຍສະເພາະແມ່ນການອ່ານໃນໃຈ ບໍ່ຄວນອ່ານໃຫ້ມີສຽງດັງ ເພາະຈະລົບກວນສະມາທິຂອງຄົນອື່ນ.

8) ຮັກສາສຸຂະພາບຂອງຕາເຊັ່ນ ອ່ານຢູ່ໃນບ່ອນທີ່ມີແສງສະຫວ່າງພໍເໝາະ ໃຫ້ໜັງສືຫ່າງຈາກສາຍຕາພໍປະມານ.

9) ຄວນມີວັດຈະນານຸກົມໃກ້ຕົວ ເພື່ອເປີດເບິ່ງຄຳ ໃນເມື່ອພົບຄຳທີ່ບໍ່ເຂົ້າໃຈຄວາມໝາຍ.

10) ການອ່ານປຶ້ມທຸກປະເພດ ຄວນແຍກອອກວ່າ ເຫລັ້ມໃດຢູ່ໃນປະເພດໃດດີ ຫລືບໍ່ດີ.

11) ສ້າງລົດນິຍົມໃນການເລືອກອ່ານໜັງສື ທີ່ເຫັນວ່າໄດ້ຮັບການຍົກຍ້ອງວ່າດີມີຄຸນຄ່າ, ແລະບໍ່ຄວນເລືອກອ່ານປຶ້ມທີ່ຕົນເອງມັກຢ່າງດຽວ.

## 5. ຫລັກການອ່ານບາງປະເພດ

### 5.1 ການອ່ານຕີຄວາມໝາຍ

ການອ່ານແບບນີ້ ແມ່ນປະເພດການອ່ານໃນໃຈຢ່າງໜຶ່ງ ເຊິ່ງຜູ້ອ່ານ ອ່ານແລ້ວສາມາດບອກໄດ້ວ່າ ຂໍ້ຄວາມທີ່ອ່ານນັ້ນມີຄວາມໝາຍທີ່ແທ້ຈິງແມ່ນອັນໃດ. ພະຍາຍາມຊອກຫາຄວາມໝາຍທີ່ແທ້ຈິງທີ່ຊ້ອນແຝງໃນຂໍ້ຄວາມນັ້ນ ໂດຍສັງເກດຮູບແບບການປຽບທຽບ, ເຈຕະນາ ເຊິ່ງອາດຈະປະຕິບັດດັ່ງນີ້:

- ອ່ານໃຫ້ຄັກ, ຈັບປະເດັນຄວາມສຳຄັນຂອງເລື່ອງນັ້ນໃຫ້ໄດ້.
- ໃນເວລາອ່ານ, ພະຍາຍາມຄິດຫາເຫດຜົນ ແລະພິຈາລະນາຢ່າງຖີ່ຖ້ວນ ແລ້ວນຳໄປປະກອບເຂົ້າກັບຄວາມຄິດຂອງຕົນເອງວ່າ ຂໍ້ຄວາມນັ້ນໝາຍເຖິງອັນໃດ.
- ພະຍາຍາມສ້າງຄວາມເຂົ້າໃຈກັບຖ້ອຍຄຳ ຫລືປະໂຫຍກທີ່ເຫັນວ່າສຳຄັນ.
- ຮຽບຮຽງຖ້ອຍຄຳທີ່ຕີຄວາມອອກມານັ້ນ ໃຫ້ເປັນຂອງຕົນເອງ ໂດຍຕ້ອງມີຄວາມຊັດເຈນ; ຖ້າເປັນບົດຮ້ອຍກອງຈະຕ້ອງໄດ້ປ່ຽນເປັນບົດຮ້ອຍແກ້ວ.

| ຕົວຢ່າງ: 1. | ກວາງກິນໝາກຂາມປ້ອມ | ໄປຄາກົ້ນລະມັ່ງ |
|---|---|---|
| | ລະມັ່ງບໍ່ຂີ້ | ສາມມື້ກະຕ່າຍຕາຍ |
| | ກະຕ່າຍຕາຍແລ້ວ | ເຫງັ້ນອຶ້ມພັດເນົ່ານຳ |

ສຸພາສິດບົດນີ້, ມີສາຍກ່ຽວພັນລະຫວ່າງສັດທັງສີ່ຄື ກວາງ, ລະມັ່ງ, ກະຕ່າຍ ແລະເຫງັ້ນອຶ້ມ ເຊິ່ງເຫັນວ່າ ລະມັ່ງ, ກະຕ່າຍ ແລະເຫງັ້ນອຶ້ມ ລ້ວນແຕ່ໄດ້ຮັບຜົນສະທ້ອນຈາກກວາງຕົວດຽວ. ສະຫລຸບຄວາມໝາຍຂອງຄຳສຸພາສິດນີ້ຄື ຄົນຜູ້ໜຶ່ງກະທຳຜິດ ແຕ່ຜູ້ໄດ້ຮັບເຄາະພັດແມ່ນອີກຜູ້ໜຶ່ງທີ່ມືອຳ

ນາດນ້ອຍກວ່າ ແລະຜູ້ມີອຳນາດນ້ອຍເທົ່າໃດ ກໍຍິ່ງໄດ້ຮັບເຄາະໜັກໜ່ວງ. ສາມາດຕີຄວາມອອກວ່າ ສຸພາສິດນີ້ຢາກວິຈານຄົນບໍ່ຍຸຕິທຳໃນສັງຄົມ ໂດຍສະເພາະແມ່ນພວກເຈົ້າໃຫຍ່ນາຍໂຕ ຫລືຜູ້ມີອຳນາດ ທີ່ສວຍໂອກາດສໍ້ລາດບັງຫລວງ, ກິນສິນບົນ; ຜົນອອກມາພັດຊໍ້າແມ່ນຜູ້ຢູ່ໃຕ້ອຳນາດໄດ້ຮັບຄວາມເດືອດ ຮ້ອນໜ້ອຍຫລາຍຕາມລຳດັບອຳນາດ, ຜົນສຸດທ້າຍກໍຄືປະຊາຊົນເປັນຜູ້ຮັບເຄາະກຳທີ່ໜັກໜ່ວງກວ່າ ໝູ່.

2. ຕົກຂັ້ນໄດຕີໂຕນ ຕົກໂພນຕີລົ້ມ

ໃນບ່ອນນີ້ ຕີໂຕນ, ຕີລົ້ມ ແມ່ນການແກ້ເກີ້ ບໍ່ແມ່ນເຈຕະນາ, ຕີລາຄາຄວາມໝາຍວ່າ ເມື່ອຈົນ ຕາແຈບໍ່ມີທາງອອກແລ້ວ ກໍຕັດສິນໃຈກະທຳສິ່ງໃດໜຶ່ງລົງໄປ ເພື່ອແກ້ຕົວບໍ່ໃຫ້ເສຍໜ້າ. ຄວາມໝາຍ ອາດຈະເຊື່ອມໄປເຖິງການເຮັດວຽກງານຂູ່ມື້ນີ້ ເພາະມີພະນັກງານຈຳນວນໜຶ່ງເຮັດວຽກພໍແກ້ໜ້າ ພໍໄດ້ ກິນເງິນເດືອນນຳໝູ່ ກາງຕໍ່ຫຍັງກໍບໍ່ໄດ້ ຫລືເກາະກ່າຍເຖິງເລື່ອງອື່ນໆອີກ.

**5.2 ການອ່ານຂະຫຍາຍຄວາມ**

ແມ່ນການອະທິບາຍເພີ່ມຕື່ມໃຫ້ກະຈ່າງແຈ້ງ ແລະລະອຽດຕື່ມຂຶ້ນ. ພາຍຫລັງຕີຄວາມໝາຍ ແລ້ວ ເຊິ່ງອາດຈະໃຊ້ວິທີຍົກຕົວຢ່າງປະກອບ ຫລືອ້າງອີງປຽບທຽບໃຫ້ກວ້າງອອກ ຈົນສາມາດເຂົ້າໃຈຊັດ ເຈນຂຶ້ນກວ່າເກົ່າ.

ຕົວຢ່າງ: "ຊ້າງສານ, ງູເຫົ່າ, ຂ້າເກົ່າ, ເມຍຮັກ ຢ່າວາງໃຈ".

**ຕີຄວາມໝາຍວ່າ**: ບໍ່ຄວນເຊື່ອ ແລະໄວ້ວາງໃຈໃນສີ່ຢ່າງນີ້ຄື "ຊ້າງ, ງູເຫົ່າ, ຂ້າເກົ່າ, ເມຍຮັກ ເພາະອາດຈະເກີດໄພແກ່ຕົນເອງ. ສາມາດຂະຫຍາຍຄວາມໄດ້ດັ່ງນີ້:

❶ ຢ່າໄວ້ວາງໃຈຊ້າງສານ ເພາະເປັນສັດໃຫຍ່ ແລະອັນຕະລາຍ, ມັນບໍ່ມີສະຕິ ເພື່ອທົບທວນ ຄວາມດີຄວາມຊົ່ວຄືຄົນ; ຍາມໃຈຮ້າຍ, ມັນອາດບ້າມາຍາມໃດກໍໄດ້, ບໍ່ແນ່ນອນ ເຖິງຕອນນັ້ນແມ່ນແຕ່ ເຈົ້າຂອງມັນກໍອາດຂ້າໄດ້.

❷ ງູເຫົ່າກໍເຊັ່ນດຽວກັນ ມັນເປັນສັດທີ່ມີພິດ ມັນບໍ່ຮູ້ບາບບຸນຄຸນໂທດ, ບໍ່ຄວນຈະໄວ້ວາງໃຈ ບໍ່ດັ່ງນັ້ນຈະເປັນເໝືອນນິທານຊາວນາກັບງູເຫົ່າ. ພວກເຮົາຈະໄປທວງບຸນຄຸນນຳສັດບໍ່ໄດ້.

❸ ຂ້າເກົ່າ ກໍບໍ່ຄວນໄວ້ວາງໃຈ ເພາະເຄີຍເປັນທາດເປັນຂ້ອຍມາກ່ອນລ້ວ, ອາດຈະມີແນວ ຄິດອາຄາດບາດໝາງນຳມາແກ້ແຄ້ນ ຫລືທຳຮ້າຍກໍໄດ້.

❹ ເມຍຮັກກໍບໍ່ຄວນເຊື່ອຢ່າງຕາຍໃຈ ຫລືໄວ້ໃຈເກີນໄປ. ໃນຂໍ້ນີ້ບູຮານຈະເຫັນວ່າ ແມ່ຍິງ ເປັນຜູ້ມີອາລົມຈິດສູງ ແລະມີຄວາມຮັກເປັນຫລັກ ພ້ອມກັນນັ້ນກໍມີຄວາມຄອນແຄນງ່າຍ, ຫລັກໝັ້ນ ບໍ່ແໜ້ນ, ຮັກສາຄວາມລັບບໍ່ເປັນ ແລະມີຈິດໃຈເອນອຽງ(ສິ່ງນີ້ເປັນພຽງທັດສະນະຂອງຄຳສຸພາສິດ ແຕ່ບໍ່ ໝາຍຄວາມວ່າ ແມ່ຍິງທຸກຄົນຈະເປັນແນວນັ້ນໝົດ).

# ບົດທີ 4 ທັກສະການຂຽນ

## 1. ຄວາມໝາຍຂອງການຂຽນ

ການຂຽນແມ່ນທັກສະໜຶ່ງໃນສີ່ທັກສະ ເຊິ່ງໃຊ້ໃນຊີວິດປະຈຳວັນຂອງເຮົາ ແລະສັງເກດເຫັນວ່າເປັນທັກສະທີ່ໃຊ້ໜ້ອຍທີ່ສຸດ. ດັ່ງນັ້ນ, ທັກສະການຂຽນຈຶ່ງອ່າວຍາກກວ່າທັກສະອື່ນໆ ເນື່ອງຈາກບໍ່ໄດ້ເຝິກຢ່າງເອົາຈິງເອົາຈັງ ຈຶ່ງເຮັດໃຫ້ຫລາຍຄົນຂຽນໄດ້ ແຕ່ບໍ່ແມ່ນຂຽນເປັນ.

ການຂຽນໄດ້ຕ່າງຈາກການຂຽນເປັນ ເພາະຜູ້ຂຽນໄດ້ນັ້ນ ພຽງແຕ່ຂຽນຕົວອັກສອນ ຫລືຄຳຕ່າງໆ ໂດຍບໍ່ໄດ້ຄຳນຶງເຖິງວ່າ ຜູ້ອ່ານຈະອ່ານໄດ້ ແລະເຂົ້າໃຈບໍ່; ສ່ວນການຂຽນເປັນນັ້ນ ຜູ້ຂຽນໄດ້ຄຳນຶງຜູ້ອ່ານໃຫ້ສາມາດເຂົ້າໃຈສິ່ງທີ່ຜູ້ຂຽນຂຽນ. ການທີ່ຈະໃຫ້ຜູ້ອ່ານເຂົ້າໃຈດັ່ງທີ່ຜູ້ຂຽນຕ້ອງການນັ້ນ ເປັນສິ່ງທີ່ຍາກຂຶ້ນ; ເພາະຜູ້ຂຽນຈະຕ້ອງມີຄວາມຮູ້, ຄວາມເຂົ້າໃຈດ້ານເນື້ອໃນເລື່ອງທີ່ເອົາມາຂຽນນັ້ນ ແລະສິລະປະໃນການຂຽນ ເພື່ອເຮັດໃຫ້ຜູ້ອ່ານເກີດຄວາມຈັບໃຈໃນບົດຂຽນຂອງຕົນ.

ສະຫລຸບແລ້ວ, *ການຂຽນກໍຄືການສື່ຄວາມໝາຍໄປຍັງຜູ້ອ່ານ ໂດຍໃຊ້ຕົວອັກສອນເປັນເຄື່ອງມືເພື່ອໃຫ້ຜູ້ອ່ານຊາບຄວາມຮູ້, ຄວາມຄິດ, ຄວາມຮູ້ສຶກຂອງຜູ້ຂຽນ; ນັ້ນຄືຄວາມໝາຍຂອງການຂຽນ.*

## 2. ຄວາມເຂົ້າໃຈກ່ຽວກັບການເຝິກທັກສະການຂຽນ

ດັ່ງທີ່ໄດ້ກ່າວແລ້ວວ່າການຂຽນໄດ້ນັ້ນ ບໍ່ມີຄວາມຫຍຸ້ງຍາກຫລາຍປານໃດ ແຕ່ການທີ່ຈະຂຽນໃຫ້ເປັນນີ້ ເປັນບັນຫາທີ່ຈະຕ້ອງໄດ້ເຝິກເລື້ອຍໆເພື່ອໃຫ້ເກີດຄວາມຊຳນິຊຳນານ, ໝາຍຄວາມວ່າ ໃຫ້ຜູ້ຂຽນມີຄວາມສາມາດໃນການຂຽນເລື່ອງຕ່າງໆໄດ້ດີ ແລະມີຄຸນະພາບ. ການເຝິກທັກສະການຂຽນມີຫລາຍຢ່າງທີ່ຈະຕ້ອງໄດ້ເຝິກ ໂດຍເລີ່ມຈາກງ່າຍໄປຫາຍາກເຊັ່ນວ່າ:

- ເຝິກຂຽນຄຳໃຫ້ຖືກຫລັກພາສາ.
- ເຝິກຂຽນລາຍງານ.
- ເຝິກຂຽນຈົດໝາຍ, ຄຳຮ້ອງ, ບົດລາຍງານຕ່າງໆ.
- ເຝິກຂຽນບົດພັນລະນາ, ບົດເລົ່າເລື່ອງ.
- ເຝິກຂຽນຂໍ້ຄວາມ.
- ເຝິກຂຽນໃນໂອກາດຕ່າງໆຄື ແຈ້ງການ, ອວຍພອນ, ເຊີນຊວນ, ຂອບໃຈ...
- ເຝິກຂຽນບົດກະວີ.
- ເຝິກຂຽນບົດຄວາມ.
- ເຝິກຂຽນບົດສາລະຄະດີ.

## 3. ປະເພດບົດຂຽນ

### 3.1 ບົດຂຽນປະເພດຄຳຮ້ອຍແກ້ວ(ຄຳເວົ້າທຳມະດາ)

ແມ່ນບົດຂຽນທີ່ບໍ່ມີຄຳສຳຜັດເກາະກ່າຍ ຫລືບໍ່ມີການບັງຄັບຈຳນວນຄຳ ແຕ່ເປັນການເລືອກສັນຫາຖ້ອຍຄຳທີ່ມ່ວນ ແລະງົດງາມ ຜູກກັນເຂົ້າເປັນປະໂຫຍກ, ເປັນຂໍ້ຄວາມທີ່ປະກອບກັນເຂົ້າເປັນເນື້ອໃນໃຈຄວາມໄປຕາມຈຸດປະສົງຂອງຜູ້ຂຽນ. ບົດຂຽນປະເພດທີ່ເປັນຄຳເວົ້າທຳມະດານີ້ມີຄື ບົດພັນລະນາ ບົດເລື່ອງ, ບົດວິຈານ, ບົດສະເໜີ, ບົດຄວາມ, ເລື່ອງສັ້ນ, ຈົດໝາຍ, ບົດລາຍງານ ແລະອື່ນໆ.

24 / VII
ຫາມຈຳໜ່າຍ

3.2 ບົດຂຽນປະເພດທີ່ຂຽນເປັນຄຳຮ້ອຍກອງ(ກາບກອນ)

ແມ່ນບົດຂຽນທີ່ມີຮູບແບບບັງຄັບເຊັ່ນ ຈຳນວນຄຳ, ການສຳຜັດ, ຄຳເອກ-ໂທ ແລະອື່ນໆ ອັນໄດ້ແກ່ກາບ, ກອນ, ໂຄງ, ສານ, ຮ່າຍ, ເປັນຕົ້ນ. ຊາວບູຮານນິຍົມຂຽນບົດຕ່າງໆ ທີ່ເປັນສິລະປະນິພົນ ດ້ວຍບົດຂຽນປະເພດນີ້.

4. ຫລັກທົ່ວໄປໃນການຂຽນບົດ

4.1 ຂັ້ນຕອນໃນການຂຽນບົດ

4.1.1 ເລືອກເລື່ອງທີ່ຈະຂຽນ

ຄວນເລືອກເລື່ອງທີ່ຕົນມີຄວາມຮູ້, ຄວາມຄິດ ແລະປະສົບການກ່ຽວກັບເລື່ອງນັ້ນດີ.

4.1.2 ຕັ້ງຈຸດປະສົງໃນການຂຽນ

ຜູ້ຂຽນຕ້ອງຕັ້ງຈຸດປະສົງໃນການຂຽນວ່າ ຕ້ອງການໃຫ້ຜູ້ອ່ານໄດ້ຮູ້ອັນໃດ ຫລືຂຽນເພື່ອຫຍັງ ເຊັ່ນວ່າ:
+ ເພື່ອໄດ້ຮັບຄວາມຮູ້.
+ ເພື່ອໄດ້ຮັບຄວາມບັນເທີງ.
+ ເພື່ອຊາບເຫດຜົນທີ່ຖືກຕ້ອງ.
+ ເພື່ອແນະນຳອັນໃດອັນໜຶ່ງ.
+ ເພື່ອໃຫ້ໄດ້ຂໍ້ຄິດກ່ຽວກັບເລື່ອງໃດເລື່ອງໜຶ່ງ.
+ ເພື່ອອະທິບາຍຄວາມໝາຍ, ຫລັກການ ຫລືທິດສະດີຕ່າງໆ.
+ ເພື່ອເລົ່າເລື່ອງໃຫ້ຊາບ.
+ ເພື່ອໂຄສະນະຊວນເຊື່ອ.
+ ເພື່ອປະກາດ, ເຊີນຊວນ.
+ ເພື່ອສັ່ງສອນ, ອົບຮົມ.
+ ເພື່ອໃຫ້ເກີດຄວາມເຫັນດີເຫັນພ້ອມນຳ.
+ ເພື່ອສະແດງຄວາມຄິດເຫັນ.
+ ເພື່ອຮ້ອງຂໍ, ຂໍຄວາມເຫັນໃຈ ຯລຯ

4.1.3 ຮວບຮວມຄວາມຄິດໂດຍການວາງໂຄງເລື່ອງ

ໂຄງເລື່ອງ ແມ່ນໃຈຄວາມໃນແຕ່ລະຫຍໍ້ໜ້າຂອງເລື່ອງນັ້ນໆ. ບົດເລື່ອງທີ່ດີຈະຕ້ອງມີການລຳດັບຄວາມ, ມີຂະໜາດ ຫລືຂອບເຂດ ແລະມີຄວາມສຳພັນກັບຊື່ເລື່ອງ ເຊິ່ງຈະຕ້ອງເລີ່ມຈາກການຕັ້ງບັນຫາ, ເນື້ອເລື່ອງ ແລະສະຫລຸບ.

4.1.4 ສິ່ງທີ່ຄວນເອົາໃຈໃສ່ໃນການຂຽນ

ບົດຂຽນທີ່ເປັນຕາອ່ານ ຫລືເປັນຕາຕິດຕາມນັ້ນ, ນອກຈາກຈະມີຫລັກການຂຽນຕ່າງໆແລ້ວ ຜູ້ຂຽນຄວນຄຳນຶງດັ່ງລຸ່ມນີ້:

- ການສະແດງຄວາມຮູ້ລົງໃນບົດຂຽນ, ຄວນມີຫລັກຖານອ້າງອີງ ແລະເປັນຄວາມຮູ້ທີ່ຖືກຕ້ອງ.

- ສະແດງຄວາມຄິດ ຕ້ອງເປັນຄວາມຄິດຂອງຕົນເອງ. ຖ້າຫາກວ່າເປັນຄວາມຄິດຂອງຜູ້ອື່ນ ຕ້ອງບອກຊື່ຜູ້ນັ້ນໄວ້ນຳ.

- ສະກົດຄຳໃຫ້ຖືກຕ້ອງຕາມຫລັກພາສາ, ຄວນມີວັກ, ຕອນ ແລະຫຍໍ້ໜ້າທີ່ເໝາະສົມຖືກຕ້ອງ.

- ການຂຽນນັ້ນຕ້ອງເປັນລະບຽບ, ຊັດເຈນ, ອ່ານງ່າຍ ແລະສະອາດຮຽບຮ້ອຍ.

### 4.1.5 ການຜູກປະໂຫຍກ

ການຜູກປະໂຫຍກ ແມ່ນການຮຽບຮຽງຄຳໃນປະໂຫຍກ, ໃນຂໍ້ຄວາມໃຫ້ຖືກຕ້ອງ. ປະກອບປະໂຫຍກຕ່າງໆທີ່ຢູ່ໃນຂໍ້ຄວາມຍາວໆໃຫ້ເຂົ້າກັນ ໂດຍອາໄສບັນດາຄຳເຊື່ອມ ແລະຄຳຕໍ່.

ການຜູກປະໂຫຍກ ມີຄວາມສຳຄັນ ຖ້າຈັດວາງຖ້ອຍຄຳ, ປະໂຫຍກບໍ່ຖືກຕ້ອງເໝາະສົມ ກໍຈະເຮັດໃຫ້ຂໍ້ຄວາມນັ້ນບໍ່ເປັນຕາຟັງ, ຂາດຄວາມຊັດເຈນ ແລະກໍ່ໃຫ້ເກີດຄວາມສັບສົນ, ເຂົ້າໃຈຍາກ ຫລືເຂົ້າໃຈຜິດເຂວໄປຈາກຄວາມຄິດຂອງຜູ້ຂຽນ.

ຕົວຢ່າງ ຂໍ້ຄວາມລຸ່ມນີ້ປາກົດມີແຕ່ພາກປະທານ ແລະພາກສຳແດງ:

"ຍາດພີ່ນ້ອງທາງຝ່າຍບິດາມາດາຂອງນາງກໍບໍລິບູນ / ຮູບຮ່າງບໍ່ມີບ່ອນຕິ / ຜິວດຳເໝືອນກັບແກ້ວນິນ / ໜ້າເປັ່ງປັ່ງດັ່ງດວງຈັນ / ດວງຕາປະດຸດຕາກວາງ / ແຂ້ວເໝືອນໄຂ່ມຸກ / ຮິບສົບເໝືອນໝາກຕຳນິນສຸກ / ສຽງຫົວເໝືອນນົກກາເວົາ /ຂາຄືລຳກ້ວຍ".

ຂໍ້ຄວາມຂ້າງເທິງນີ້, ມີພຽງໂຕປະທານ ແລະໂຕສຳແດງເປັນລຳດັບກັນມາ ແລະອາດຈະບໍ່ຈຳເປັນໃຊ້ຄຳເຊື່ອມ ຫລືຄຳຕໍ່ຂັ້ນ.

ຕົວຢ່າງ ການຮຽບຮຽງປະໂຫຍກ ໂດຍມີຄຳຂະຫຍາຍດັ່ງນີ້:

**✍ ແຕ່ປາງກ່ອນ;**

1. ມັນໄດ້ຊອກຫ່ຽວກິນກົບຂຽດ
2. ຈົນບໍ່ມີແມວຈະກິນ
3. ຂອງພະຍາອຸດເຊນີ
4. ອາໄສຢູ່ໃນອຸດທະຍານ
5. ມີງູເຫົ່າໝໍ້ໂຕໜຶ່ງ
6. ຈຶ່ງນອນອຶດອາຫານໄດ້ຫລາຍວັນ
7. ທີ່ຢູ່ໃນຍ່ານສວນນັ້ນໝົດແລ້ວ

✍ **ຮຽບຮຽງ:** ແຕ່ປາງກອນ ມີງູເຫົ່າໝໍ້ໂຕໜຶ່ງ ອາໄສຢູ່ໃນອຸດທະຍານຂອງພະຍາອຸດເຊນີ ມັນໄດ້ຊອກຫ່ຽວກິນກົບຂຽດ ທີ່ຢູ່ໃນຍ່ານສວນນັ້ນໝົດແລ້ວ ຈົນບໍ່ມີແມວຈະກິນ ຈຶ່ງນອນອຶດອາຫານໄດ້ຫລາຍວັນ

*ຕົວຢ່າງ: ການຮຽບຮຽງປະໂຫຍກ ໃຫ້ໄດ້ຄວາມແຈ່ມແຈ້ງ ແລະຊັດເຈນ*

1. ໜັງສືກາລະເກດ ຂ້ອຍມັກອ່ານກວ່າສັງສິນໄຊ

✍ **ຮຽບຮຽງ:** ຂ້ອຍມັກອ່ານໜັງສືກາລະເກດຫລາຍກວ່າສັງສິນໄຊ.

2. ທີ່ນີ້ ປຶ້ມມີໃຫ້ເຊົ່າ.

✍ **ຮຽບຮຽງ:** ທີ່ນີ້ມີປຶ້ມໃຫ້ເຊົ່າ.

3. ໃນວັດຕ່າງໆຫ້າມຈັບສັດ.

✍ **ຮຽບຮຽງ:** ຫ້າມຈັບສັດໃນວັດຕ່າງໆ.

4. ສາມາດເຕັມໄຫໄດ້ ນຳ້ຝົນແຕ່ລະຢາດ.

✍ ຮຽບຮຽງ: ນຳ້ຝົນແຕ່ລະຢາດ ສາມາດເຕັມໄຫໄດ້ .

*ຕົວຢ່າງ: ການຮຽບຮຽງປະໂຫຍກ ໂດຍອາໄສຄຳເຊື່ອມ, ຄຳຕໍ່*

1. ທ້າວ ປັນຍາ ອັກຄັບປັນໂຍ ເປັນນັກຮຽນດີ / ໄດ້ຮັບການຍ້ອງຍໍທຸກປີ.

✍ **ຮຽບຮຽງ:** ຍ້ອນວ່າ ທ້າວ ປັນຍາ ອັກຄັບປັນໂຍ ເປັນນັກຮຽນດີ ລາວຈຶ່ງໄດ້ຮັບການຍ້ອງຍໍທຸກປີ.

2. ຄົນລາວຄວນຊື້ສິ່ງຂອງ / ຄົນລາວເຮັດເອງ

✍ **ຮຽບຮຽງ:** ຄົນລາວຄວນຊື້ສິ່ງຂອງທີ່ຄົນລາວເຮັດເອງ.

3. ປຶ້ມເປັນເພື່ອນ / ດີທີ່ສຸດ / ປຶ້ມສາມາດໃຫ້ຄວາມຮູ້ຫລາຍຢ່າງ / ທຸກຄົນສາມາດຄົ້ນຄວ້າໄດ້ຈາກປຶ້ມ / ປຶ້ມຈຶ່ງປຽບເຫມືອນຜູ້ໃຫ້ແສງສະຫວ່າງທາງປັນຍາແກ່ຄົນທັງປວງ.

✍ **ຮຽບຮຽງ:** ປຶ້ມເປັນເພື່ອນທີ່ດີທີ່ສຸດ ເພາະປຶ້ມສາມາດໃຫ້ຄວາມຮູ້ຫລາຍຢ່າງ ເຊິ່ງທຸກຄົນສາມາດຄົ້ນຄວ້າໄດ້ຈາກປຶ້ມ. ດັ່ງນັ້ນ, ປຶ້ມຈຶ່ງປຽບເຫມືອນຜູ້ໃຫ້ແສງສະຫວ່າງທາງປັນຍາແກ່ຄົນທັງປວງ.

> ສະຫລຸບ: ການຜູກປະໂຫຍກ ກໍຄືການຮຽບຮຽງປະໂຫຍກ
> ໃຫ້ຖືກຢູ່ໃນຂໍ້ຄວາມໃດຫນຶ່ງນັ້ນເອງ.

### 4.1.5 ການຂຽນຫຍໍ້ຫນ້າ

ການຂຽນຫຍໍ້ຫນ້າ ແມ່ນການແບ່ງເນື້ອຄວາມຕອນຫນຶ່ງໃນເນື້ອເລື່ອງ. ເນື້ອເລື່ອງຫນຶ່ງອາດມີຫລາຍຫຍໍ້ຫນ້າ. ການຂຽນຫຍໍ້ຫນ້າຫນຶ່ງກໍເຫມືອນຂຽນເນື້ອຄວາມຫນຶ່ງ ເຊິ່ງປະກອບດ້ວຍຂໍ້ຄວາມກັບສ່ວນສຳຄັນກັບສ່ວນປະກອບຂະຫຍາຍ ເພື່ອເຮັດໃຫ້ເນື້ອຄວາມຊັດເຈນຍິ່ງຂຶ້ນ. ການຂຽນເປັນແຕ່ລະຫຍໍ້ຫນ້ານັ້ນ ຊ່ວຍໃຫ້ຜູ້ອ່ານຈັບໃຈຄວາມໄດ້ງ່າຍ ເພາະການແບ່ງຫຍໍ້ຫນ້າເປັນການສະແດງໃຫ້ຮູ້ວ່າ ຫມົດຂໍ້ຄວາມຕອນຫນຶ່ງໃນຫລາຍໆຕອນຂອງເນື້ອເລື່ອງ. ໃນຫຍໍ້ຫນ້າດຽວ ຜູ້ຂຽນຈະຕ້ອງເວົ້າໃນຂອບເຂດເລື່ອງດຽວ, ບັນຫາດຽວໂດຍບໍ່ຕໍ່ໃສ່ບັນຫາອື່ນ. ເລື່ອງໃດເລື່ອງຫນຶ່ງ ບໍ່ຈຳກັດວ່າມີຈັກຫຍໍ້ຫນ້າ ແລະຫຍໍ້ຫນ້າຄວນມີຈັກແຖວ. ສິ່ງສຳຄັນເມື່ອຈົບຕອນໃດຫນຶ່ງ ຄວນຫຍໍ້ຫນ້າໃຫມ່.

❖ **ສ່ວນປະກອບຂອງຫຍໍ້ຫນ້າ**

ຫຍໍ້ຫນ້າມີສ່ວນປະກອບຢູ່ 2 ລັກສະນະຄື

- ປະໂຫຍກໃຈຄວາມ ຫລືປະໂຫຍກສຳຄັນ ເຊິ່ງມັກຈະຢູ່ສ່ວນຕົ້ນ ຫລືບາງເທື່ອຢູ່ຕອນທ້າຍ.
- ປະໂຫຍກຂະຍາຍຄວາມ ແມ່ນປະໂຫຍກປະກອບເພື່ອຂະຫຍາຍ ຫລືສະຫນັບສະຫນູນ ໂດຍໃຈຄວາມລະອຽດ ເຊິ່ງປົກກະຕິອາດຈະມີຫລາຍກວ່າປະໂຫຍກໃຈຄວາມ.

ຕົວຢ່າງ

ການໃຫ້ນັ້ນຈຳເປັນແກ່ຄົນທີ່ຢູ່ຮ່ວມກັນ, ຄົນມີຫລາຍກໍສະເລ່ຍແກ່ຄົນຂາດເຂີນ. ວຽກງານໃດໆ

ທີ່ບໍ່ສາມາດເຮັດດ້ວຍກຳລັງຂອງຄົນດຽວໄດ້ ວຽກງານນັ້ນ, ຄົນທັງຫລາຍກໍແບ່ງສ່ວນຂອງຕົນຄົນລະເລັກລະໜ້ອຍຮ່ວມກັນເຮັດເຊັ່ນ ສ້າງວັດວາອາຮາມ, ສ້າງໂຮງຮຽນ, ສ້າງໂຮງໝໍ ຫລືສ້າງສາທາລະນະສະຖານທີ່ຕາມສົມຄວນ.

ການໃຫ້ເປັນການສ້າງກຸສົນ ຫລືສ້າງຄວາມດີຢ່າງໜຶ່ງ. ຜົນບຸນ ແລະຄວາມດີທີ່ເຮົາສ້າງຂຶ້ນນັ້ນເຖິງວ່າບໍ່ໄດ້ຕອບສະໜອງຄືນມາດ້ວຍວັດຖຸເງິນຄຳກໍຕາມ ແຕ່ທາງດ້ານຈິດໃຈແລ້ວ ແມ່ນມີຄວາມສຳຄັນ ຫລາຍ; ເມື່ອເຮົາໄດ້ສ້າງສິ່ງໃດສິ່ງໜຶ່ງແກ່ຜູ້ອື່ນດ້ວຍຄວາມຕັ້ງໃຈ ແລະສະບາຍໃຈ ນັ້ນລະຄືກຸສົນ.

(ຂໍ້ຄວາມທີ່ຂີດກ້ອງໃນ 2 ຫຍໍ້ໜ້າຂ້າງເທິງນີ້ ແມ່ນປະໂຫຍກໃຈຄວາມ ສ່ວນທີ່ເຫລືອແມ່ນປະໂຫຍກຂະຫຍາຍຄວາມ).

❖ **ລັກສະນະຫຍໍ້ໜ້າທີ່ດີ**

- ມີຂໍ້ຄວາມສຳຄັນເລື່ອງດຽວ.
- ມີຄວາມສຳພັນກັນດີໃນແຕ່ລະຫຍໍ້ໜ້າ.
- ເນັ້ນໜັກໃຫ້ຮູ້ວ່າເວົ້າເຖິງຫຍັງ, ປະໂຫຍກໃຈຄວາມແມ່ນແນວໃດ?.

### 4.2. ການແຕ່ງບົດບາງບົດ

ການແຕ່ງບົດປະເພດຕ່າງໆ ໃນລັກສະນະແຕ່ລະປະເພດບົດ ອາດມີຄວາມແຕກຕ່າງກັນໄປຕາມຮູບແບບຂອງບົດນັ້ນໆ. ແຕ່ໃນດ້ານພື້ນຖານແລ້ວ, ການແຕ່ງບົດກໍຄືການຮຽບຮຽງຄວາມເວົ້າໃຫ້ເປັນຂັ້ນເປັນຕອນ. ຈະປັນບົດແນວໃດກໍຕາມ ກ່ອນອື່ນໝົດ, ຜູ້ຂຽນອາດຈະຂຽນຂຶ້ນເພື່ອຊີ້ແຈງເຫດຜົນ, ດ້ານທັດສະນະ, ເຜີຍແຜ່ຄວາມຮູ້ ຫລືເພື່ອປະໂຫຍດໃນດ້ານອື່ນຕາມຈຸດປະສົງຂອງຜູ້ຂຽນ. ການຂຽນບົດເພື່ອຈຸດປະສົງຕ່າງໆເຫລົ່ານັ້ນ ຍ່ອມປະກອບດ້ວຍອົງປະກອບທີ່ສຳຄັນຄື ຄວາມຮູ້, ຄວາມຄິດ ແລະສິລະປະໃນການແຕ່ງ. ຖ້າຂາດອົງປະກອບໃດໜຶ່ງອາດຍາກທີ່ຈະບັນລຸຜົນສຳເລັດ ຫລືສຳເລັດກໍເຮັດໃຫ້ບົດຂຽນນັ້ນມີປະສິດທິພາບບໍ່ສູງ. ການຮຽບຮຽງບົດປະເພດຕ່າງໆ ຄ້າຍຄືກັນໃນຫລັກການໃຫຍ່ ແຕ່ວິທີທີ່ລະອຽດນັ້ນຍ່ອມແຕກຕ່າງກັນໄປ ດ້ວຍຄວາມພໍໃຈຂອງຜູ້ຂຽນ. ຫລັກທົ່ວໄປໃນການຂຽນບົດມີດັ່ງນີ້:

#### 1. ພາກສ່ວນຕົ້ນ(ຕັ້ງບັນຫາ)

ການຕັ້ງບັນຫາເປັນພາກສ່ວນທຳອິດ ທີ່ຈະຂຽນນຳຄວາມເຂົ້າສູ່ເລື່ອງທີ່ຕ້ອງການຂຽນ. ໃນພາກສ່ວນຕົ້ນນີ້ ພະຍາມຍາມເຮັດແນວໃດແນວໜຶ່ງໃນສອງຢ່າງຄື

- ໃຊ້ຖ້ອຍຄຳ, ສຳນວນທີ່ຊວນໃຫ້ສົນໃຈ.
- ແນະນຳໃຫ້ຜູ້ອ່ານມີຄວາມຮູ້ສຶກວ່າ ຢາກຈະອ່ານເລື່ອງຕໍ່ໄປແມ່ນກ່ຽວກັບຫຍັງ ແລະເຮັດໃຫ້ຜູ້ອ່ານເຂົ້າໃຈເລື່ອງທີ່ຈະອ່ານນັ້ນງ່າຍຂຶ້ນ.

#### 2. ພາກສ່ວນເນື້ອເລື່ອງ

ເນື້ອເລື່ອງແມ່ນສ່ວນໜຶ່ງ ຜູ້ຂຽນຈະບອກຂໍ້ຄວາມຢ່າງລະອຽດ ເຊິ່ງເປັນຂໍ້ຄວາມທີ່ເປັນຄວາມຈິງ, ຄວາມຮູ້ເປັນຫລັກທີ່ໄດ້ຄົ້ນພົບ ຫລືມີຄວາມຄິດເຫັນຕ່າງໆ. ລັກສະນະຂອງການຂຽນເນື້ອເລື່ອງນັ້ນຈະຕ້ອງມີການຮຽງຮຽງໃຫ້ສວຍງາມຈັດລຳດັບເນື້ອໃນໃຫ້ເປັນແຕ່ລະຫຍໍ້ໜ້າ, ຈັດລຳດັບໃນລັກສະນະທີ່ວ່າ

ອັນໃດຄວນເວົ້າກ່ອນ ແລະອັນໃດຄວນເວົ້າຕາມຫລັງ. ໃຈຄວາມອັນໃດອັນຫນຶ່ງທີ່ຂຽນຈະຕ້ອງຫາທາງເຮັດໃຫ້ຜູ້ອ່ານເຂົ້າໃຈ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ອະທິບາຍຄວາມຫມາຍຂອງເລື່ອງທີ່ຈະຂຽນ,
- ຍົກຕົວຢ່າງພໍໃຫ້ສາມາດເຫັນໄດ້,
- ສະແດງເຫດຜົນແຫ່ງຄວາມຄິດຂອງຕົນ,
- ອະທິບາຍ, ໄຈ້ແຍກເລື່ອງໃຫ້ລະອຽດອອກໄປ,
- ອ້າງຫລັກຖານ ຄວາມຄິດຂອງຕົນ.

**3. ພາກສ່ວນສະຫລຸບ**

ສ່ວນນີ້, ແມ່ນສ່ວນທີ່ຜູ້ຂຽນຈະຕ້ອງສະຫລຸບ ໃຫ້ຜູ້ອ່ານເຂົ້າໃຈເລື່ອງທີ່ໄດ້ກ່າວມານັ້ນ ໃຫ້ເຂົ້າໃຈງ່າຍຂຶ້ນ, ຝາກຂໍ້ຄິດທີ່ເປັນປະໂຫຍດ ຫລືເປັນຄວາມຄິດຈາກທັດສະນະຂອງຕົນ ໃຫ້ຜູ້ອື່ນມີບ່ອນສະຫລຸບໄດ້.

ຕົວຢ່າງ: ບົດຂຽນເລື່ອງ "ຢາກມີສິລະປິນແຫ່ງຊາດ" (ເປັນບົດຄວາມສະແດງທັດສະນະ).

ໃນອະດີດ, ບັນພະບຸລຸດຂອງພວກເຮົາຜູ້ເປັນນັກປາດອາຈານ, ຜູ້ມີຫົວຄິດສ້າງສັນ ແລະມັນສະຫມອງອັນສະຫລາດປາດເປື່ອງ ໄດ້ມອບບົດກະວີ, ບົດປະພັນວັນນະກໍາ ແລະຜົນງານສິລະປະກໍາອັນໂດດເດັ່ນ ແລະອະມະຕະໄວ້ເປັນມໍລະດົກອັນລໍ້າຄ່າຂອງຊາດຢ່າງຫລວງຫລາຍ.

ປັດຈຸບັນ, ຄົນຫນຸ່ມລູກຫລານ ບໍ່ວ່າຈະເປັນນັກຮ້ອງ, ນັກສະແດງ, ຫມໍລໍາ, ນັກຂຽນ, ຈິດຕະກອນ... ໄດ້ພ້ອມກັນສືບທອດ, ເສີມຂະຫຍາຍ ແລະຍັງນໍາໃຊ້ມູນມໍລະດົກອັນລໍ້າຄ່າສ່ວນນີ້ ເພື່ອປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ໃຫ້ນັບມື້ນັບຈະເລີນຂຶ້ນ.

ໃນອະດີດກໍຄືປັດຈຸບັນ, ບັນດານັກສິລະປິນ... ໄດ້ພາກັນສ້າງຄຸນງາມຄວາມດີ ເພື່ອເປັນການຕອບແທນຄຸນປະເທດຊາດ ແລະບັນພະບຸລຸດ ເຊິ່ງພວກເພິ່ນໄດ້ຜ່ານຜ່າອຸປະສັກນາໆປະການ; ພວກເພິ່ນເປັນນັກຮົບທາງດ້ານວັດທະນະທໍາ ທີ່ມີພາລະອັນຫນັກຫນ່ວງ ບໍ່ວ່າໃນຍາມສະຫງົບຫລືຍາມມີສົງຄາມຈະຕ້ອງໄດ້ເຮັດຫນ້າທີ່ຢ່າງສົມກຽດ. ພວກເພິ່ນຕ້ອງຄົ້ນຄິດ, ຊອກສະແຫວງຫາແຕ່ສິ່ງທີ່ດີ, ສິ່ງທີ່ໃຫມ່ໆຢ່າງບໍ່ມີວັນສິ້ນສຸດ; ທັງນີ້ກໍເພາະວ່າວຽກງານສິລະປະກໍາເປັນວຽກງານທີ່ສ້າງຂຶ້ນດ້ວຍຈິດວິນຍານ, ດ້ວຍຄວາມສະຫງວນນັກ ທັງມີຄວາມຮັກ ແລະເຊື່ອຫມັ້ນຢ່າງບໍ່ຈືດຈາງ; ຫາກບໍ່ມີອຸດົມການເຫລົ່ານັ້ນ ຜົນງານສິລະປະ... ທີ່ອອກມາຈະມີຄ່າບໍ່ສູງ ຫລືບໍ່ກໍມີຄ່າຫນ້ອຍກວ່າເຈຕະນາລົມທີ່ຕັ້ງໄວ້.

ຜູ້ທີ່ສ້າງສັນສິ່ງທີ່ດີງາມເຫລົ່ານັ້ນຈາກຫນຸ່ມຄົນກ່ອນໆ ຕັ້ງແຕ່ສະໄຫມເຈົ້າຟ້າງູ່ມ, ເຈົ້າໄຊຍະເຊດຖາ, ເຈົ້າໂພທິສານ, ເຈົ້າ ອະນຸວົງ ຕໍ່ໃສ່ຫນຸ່ມປູ່ຍ່າຕາຍາຍເຖິງຫນຸ່ມພໍ່ແມ່ ແລະຮຸ່ນພວກເຮົາ. ໃນປັດຈຸບັນມີໃຜທີ່ໄດ້ຮັບການຍົກຍ້ອງເຊີດຊູ ໃຫ້ໄດ້ຮັບກຽດຕິຍົດອັນສູງສົ່ງວ່າເປັນ "ສິລະປິນແຫ່ງຊາດ".

ທ່ານ ເປັນຜູ້ແຕ່ງເລື່ອງ ທ້າວຮຸ່ງທ້າວເຈືອງ ຫລືໃຜ?

ທ້າວ ປາງຄໍາ ຜູ້ແຕ່ງເລື່ອງສິນໄຊ.

ເຈົ້າ ອະນຸວົງ ຜູ້ແຕ່ງສານລຶບພະສູນ ຫລືໃຜ?

ບໍ່ມີໃຜເລີຍ!

ພວກເຮົາອວດອ້າງວ່າ ເປັນຜູ້ມີມູນມໍລະດົກທາງດ້ານວັດທະນະທໍາ ແຕ່ພວກເຮົາພັດບໍ່ຮູ້ເລີຍວ່າຜູ້ສ້າງຜົນງານເຫລົ່ານັ້ນແມ່ນໃຜ, ມີຄວາມເປັນໄປແນວໃດ, ທ່ານເຫລົ່ານັ້ນ ກໍໄດ້ແຕ່ພຽງເປັນນັກສິລະ

ປະວັດທະນະທຳນິລະນາມ ແລ້ວຈະໃຫ້ຄົນທຸ່ນຕໍ່ໄປຈົດຈຳໄດ້ແນວໃດ.

ຊາດເຮົາມີນັກຮົບເກັ່ງກ້າອາດຫານ, ຊາດແລະປະຊາຊົນໄດ້ມອບນາມມະຍົດ "ວິລະຊົນ" ໃຫ້ເພື່ອເປັນການປະກາດກຽດຕິຄຸນ, ປຸກລະດົມວິນຍານຊາດນັກກຮົບ, ປຸກລະດົມຄວາມພິລະອາດຫານ ທັງນີ້ກໍຍ້ອນວ່າ ທ່ານເຫລົ່ານັ້ນໄດ້ສະແດງຕົນເປັນແບບຢ່າງອັນປະເສີດ ໃນການຕໍ່ສູ້ກັບສັດຕູຫມູ່ມານ ເພື່ອປົກປັກຮັກສາປະເທດຊາດ.

ໃນຂະນະດຽວກັນ, ຊາດເຮົາກໍມີຜູ້ທີ່ທຳການຕໍ່ສູ້ຢ່າງບໍ່ຮູ້ອິດເມື່ອຍ ທາງດ້ານແນວຄິດແລະວັດທະນະທຳເຊັ່ນດຽວກັບນັກຮົບ ແຕ່ທ່ານເຫລົ່ານັ້ນບໍ່ໄດ້ໃຊ້ປືນກົນ, ລົດຖັງ, ເຮືອບິນ ຫລືລູກສອນໄຟເປັນອາວຸດ; ພວກເພິ່ນມີພຽງແຕ່ປາກກາ, ສຽງຮ້ອງ, ສຽງລຳ, ວາດຟ້ອນ, ການສະແດງ ແລະນັນສະຫນອງເປັນອາວຸດ.

ຍັງບໍ່ເຖິງເວລາທີ່ຊາດຈະມີ "ສິລະປິນແຫ່ງຊາດບໍ?" ຈະໄດ້ລໍຖ້າຕໍ່ໄປອີກຈັກປີ, ຈັກທຸ່ນຄົນ, ຄົນໃນຊາດຈຶ່ງຈະໄດ້ສະແດງຄວາມຊື່ນຊົມຍິນດີນຳຄວາມວ່າ "ສິລະປິນແຫ່ງຊາດ".

ໃນການຕໍ່ສູ້ຍ່ອມມີນັກຮົບວິລະຊົນ,ໃ ນວົງການສິລະປະກໍຄວນມີສິລະປິນຈະມີຫຍັງສູງສົ່ງໄປກວ່າກຽດຕິຍົດຊື່ສຽງ ເພື່ອມອບໃຫ້ແກ່ບຸກຄົນຜູ້ສ້າງສັນຄຸນງາມຄວາມດີ ແກ່ປະເທດຊາດ ແລະສັງຄົມ.

ຈະມີຫຍັງປຸກລະດົມຊຸກຍູ້ ສ້າງສັນງານດ້ານສິລະປະໄດ້ເຫມາະສົມໄປເກີນກວ່າຄຳວ່າ: "ສິລະປິນແຫ່ງຊາດ".

ມີຄຳໂຄງບົດຫນຶ່ງກ່າວໄວ້ວ່າ: " ອັນຊາດໃດ ໄຮ້ຊ່າງ ຊຳນານສິນ<br>ເຫມືອນນາລິນ ໄຮ້ໂສມ ບັນໂລມສະຫງ່າ"

## 4.3. ຮູບແບບການຂຽນບົດລາຍງານວິຊາການ

ໃນຕົວຈິງແລ້ວ, ການລາຍງານກໍຄືການອະທິບາຍເຫດການ ຫລືບັນຫາໃດຫນຶ່ງໃຫ້ຄົນອື່ນຮູ້ ເຊິ່ງອາດຈະເວົ້າຫລືຂຽນກໍໄດ້. ການລາຍງານມີຫລາຍຢ່າງ ແຕ່ໃນນີ້ຈະສະເຫນີແຕ່ການລາຍງານທາງວິຊາການ.

ໂດຍທົ່ວໄປແລ້ວ, ການລາຍງານວິຊາການກ່ຽວຂ້ອງກັບການຄົ້ນຄວ້າຮໍ່າຮຽນ ເພື່ອຫາຄວາມຮູ້ເພີ່ມຕື່ມໃຫ້ແກ່ຜູ້ລາຍງານນັ້ນເອງ. ຍ້ອນແນວນັ້ນຈຶ່ງເຮັດໄດ້ຫລາຍວິທີເຊັ່ນວ່າ ການອ່ານ, ການໄປທັດສະນະສຶກສາເປັນຕົ້ນ; ເມື່ອສຳເລັດກິດຈະກຳເຫລົ່ານີ້ແລ້ວກໍລາຍງານ.

ອີງໃສ່ລັກສະນະຂອງການສື່ສານ, ການລາຍງານວິຊາການ ອາດແບ່ງອອກເປັນ 2 ປະເພດຄື ການລາຍງານດ້ວຍຄວາມເວົ້າ, ດີທີ່ສຸດກໍຄວນເວົ້າສະຫລຸບຈາກບົດລາຍງານທີ່ໄດ້ຂຽນມາກ່ອນ, ບໍ່ຄວນເວົ້າແບບບໍ່ມີໂຄງຮ່າງ ຫລືບໍ່ມີເອກະສານໃນກຳມື. ສ່ວນການລາຍງານດ້ວຍການຂຽນ ແມ່ນການຮຽບຮຽງຈາກຜົນຂອງການຄົ້ນຄວ້າບັນຫາໃດຫນຶ່ງ ເຊິ່ງເປັນບັນຫາທີ່ອາຈານກຳນົດໃຫ້ ຫລືຜູ້ຮຽນເລືອກເອງ.

### 4.3.1 ພາກສ່ວນຂອງການລາຍງານວິຊາການ

❖ **ພາກສ່ວນຕົ້ນ**

ພາກສ່ວນຕົ້ນນີ້ໄດ້ກວມເອົາ 3 ບັນຫາຄື ຫນ້າປົກ, ຄຳນຳ ແລະສາລະບານ.

1. **ຫນ້າປົກ**: ມີ 2 ຄື ຫນ້າປົກນອກ ແລະຫນ້າປົກໃນ. ຫນ້າປົກນອກຈະຕ້ອງມີຊື່ຂອງບັນຫາ ຫລືຊື່ເລື່ອງທີ່ລາຍງານ ແລະຊື່ຂອງຜູ້ຂຽນລາຍງານ; ສ່ວນຫນ້າປົກໃນຈະຕ້ອງມີລາຍລະອຽດເພີ່ມອີກເຊັ່ນ ຊື່ວິ

ຊາ, ຊື່ອາຈານສອນ ແລະປີຮຽນ ເປັນຕົ້ນ.

2. **ຄຳນຳ:** ຜູ້ຂຽນຈະເວົ້າເຖິງຈຸດປະສົງຂອງການລາຍງານ ແລະເວົ້າເຖິງຂອບເຂດຂອງມັນ, ສະແດງເຖິງຄວາມຂອບໃຈຕໍ່ຜູ້ທີ່ໃຫ້ການຊ່ວຍເຫລືອ ໃນການໃຫ້ຂໍ້ມູນ ຫລືແລກປ່ຽນຄວາມຄິດເຫັນ ເປັນຕົ້ນ.

3. **ສາລະບານ:** ມັນເປັນຫົວຂໍ້ທີ່ຂຽນລາຍງານ ແລະບອກຫົວຂໍ້ນັ້ນຢູ່ໜ້າທີເທົ່າໃດ.

❖ **ພາກສ່ວນເນື້ອຄວາມ**

ພາກສ່ວນນີ້, ກວມເອົາສອງບັນຫາຄື ເນື້ອໃນ ແລະໄຂເງື່ອນ(note ກະລຸນາເບິ່ງທີ່ຫົວຂໍ້ "ການໄຂເງື່ອນ ຫລືໝາຍເຫດໃນໜ້າທີ 69 ). ເນື້ອໃນແມ່ນພາກສ່ວນທີ່ສຳຄັນທີ່ສຸດ ເພາະວ່າຜົນຈາກການຄົ້ນຄວ້າຖືກນຳມາຮຽບຮຽງໄວ້ໃນພາກສ່ວນນີ້. ຫາກແມ່ນບົດລາຍງານສັ້ນ, ເນື້ອໃນຈະຕ້ອງແບ່ງຕາມຫົວຂໍ້ສຳຄັນ; ຫາກວ່າແມ່ນບົດຍາວ, ເນື້ອໃນຕ້ອງໄດ້ແບ່ງອອກເປັນບົດ ເຊິ່ງແຕ່ລະບົດກໍຈະມີຫົວຂໍ້ຕ່າງໆອີກ.

ສ່ວນວ່າໄຂເງື່ອນ(note) ໄດ້ແກ່ຄຳອະທິບາຍເພີ່ມຕື່ມ, ໃຫ້ຄຳຈຳກັດຄວາມ ຫລືບອກທີ່ມາຂອງຂໍ້ມູນ. ໄຂເງື່ອນຈະຖືກຂຽນໄວ້ທ້າຍໜ້າຂອງແຕ່ລະໜ້າ ຫລືທ້າຍເຫລັ້ມ, ອັນພິເສດແມ່ນໝາຍເງື່ອນຕ້ອງກົງກັບໄຂເງື່ອນ.

❖ **ພາກສ່ວນທ້າຍ**

ບັນຫາຕົ້ນຕໍຂອງພາກສ່ວນນີ້ ແມ່ນບັນນານຸກົມ ຫລືລາຍຊື່ເອກະສານອ້າງອີງທີ່ນຳມາໃຊ້ເຂົ້າໃນການຄົ້ນຄວ້າຮຽບຮຽງ. ນອກຈາກນີ້ມັນຍັງກວມເອົາຕົວບຸກຄົນທີ່ຕອບສຳພາດ ຫລືໃຫ້ຄຳເຫັນອີກດ້ວຍ.

### 4.3.2 ຂັ້ນຕອນຂອງການຂຽນບົດລາຍງານວິຊາການ

**1. ການເລືອກຫົວຂໍ້ ແລະຕັ້ງຊື່ເລື່ອງ**

ເລື່ອງທີ່ຈະເອົາມາຂຽນ ອາດຈະໄດ້ມາຈາກຄວາມສົນໃຈຂອງຜູ້ຂຽນເອງ ຫລືຈາກການແນະນຳຂອງອາຈານ. ບັນຫາສຳຄັນເລື່ອງນັ້ນຕ້ອງເປັນເລື່ອງເພີ່ມຄວາມຮູ້ໃຫ້ແກ່ການຮຽນວິຊາໃດໜຶ່ງ, ມີຂອບເຂດເໝາະກັບເວລາແຫ່ງການຄົ້ນຄວ້າ ແລະການຂຽນລາຍງານ.

ການຕັ້ງຊື່ເລື່ອງກໍຄວນໃຫ້ກົງກັບເນື້ອເລື່ອງຫລາຍທີ່ສຸດ ສົມມຸດວ່າຂອດເຂດເລື່ອງທີ່ຈະຂຽນແມ່ນສາເຫດ ແລະຄວາມເປັນມາຂອງພາສາປາລີ-ສັນສະກິດ ທີ່ເຂົ້າມາແຊກປົນໃນພາສາລາວ, ຊື່ເລື່ອງຄວນເອົາໃຈໃສ່ "ອິດທິພົນຂອງພາສາປາລີ-ສັນສະກິດຕໍ່ພາສາລາວ".

**2. ການກຳນົດຈຸດໝາຍ ແລະຂອບເຂດ**

ຈຸດໝາຍ ແລະຂອບເຂດ ແມ່ນບັນຫາທີ່ຜູ້ຂຽນລາຍງານ ຕ້ອງໄດ້ກຳນົດຢ່າງຈະແຈ້ງ ແລະຂາດຕົວ. ຫາກບໍ່ດັ່ງນັ້ນກໍຈະເຮັດໃຫ້ການວາງໂຄງຮ່າງເປັນໄປບໍ່ໄດ້. ຫາກການຂຽນລາຍງານໃນເລື່ອງທີ່ໄດ້ເວົ້າໃນ 4.2.2(1) ຜູ້ຂຽນອາດຈະກຳນົດຈຸດໝາຍດັ່ງນີ້:

**ຈຸດໝາຍ:** ສຶກສາຄົ້ນຄວ້າເບິ່ງຮູບແບບ ແລະຄວາມເປັນໄປຂອງພາສາປາລີ-ສັນສະກິດທີ່ເຂົ້າມາແຊກປົນໃນພາສາລາວ.

**ຂອບເຂດ:** ຮູບແບບຫລືວິທີການ ແລະຄວາມເປັນໄປຂອງພາສາປາລີ-ສັນສະກິດ ທີ່ໄດ້ເຂົ້າມາແຊກປົນໃນພາສາລາວ ໃນປີ ພ.ສ 600 (ຄ.ສ 57) ແລະເມື່ອສະຕະວັດທີ 14 ຮູບແບບ ແລະຄວາມເປັນໄປຂອງພາສາປາລີ-ສັນສະກິດທີ່ໄດ້ເຂົ້າມາແຊກປົນໃນພາສາລາວ ໃນສະຕະວັດທີ 15 ແລະ 16.

### 3. ການຂຽນໂຄງຮ່າງ

ໂຄງຮ່າງ ແມ່ນຂອບເຂດເລື່ອງທີ່ຜູ້ຂຽນໃຊ້ເປັນແນວທາງໃນການຂຽນເລື່ອງ, ມັນແມ່ນການກຳນົດລຳດັບຂໍ້ ຫລືເນື້ອໃນຂອງເລື່ອງ. ໂຄງຮ່າງປະກອບດ້ວຍຄຳນຳ ແລະຫົວຂໍ້ຕ່າງໆ ທັງໃຫຍ່ແລະນ້ອຍຕາມລຳດັບ.

ບັນຫາສຳຄັນ, ບໍ່ຄວນໃຫ້ຫົວຂໍ້ຍາວເກີນໄປ, ບໍ່ຄວນແບ່ງເນື້ອໃນເປັນຫລາຍຫົວຂໍ້ນ້ອຍເກີນໄປ, ແຕ່ລະຫົວຂໍ້ຄວນມີການຕໍ່ເນື່ອງ ຫລືສຳພັນກັນ. ການຈັດລຽງຫົວຂໍ້ຕ້ອງເປັນໄປຕາມລຳດັບຂອງເຫດການ ຫລືເວລາ. ຫາກແມ່ນຜູ້ຂຽນລາຍງານໃນຫົວຂໍ້ທີ່ກຳນົດໃນຂໍ້ 4.1 (4.1.1) ກໍອາດຈະຂຽນໂຄງຮ່າງດັ່ງນີ້:

1) ຄຳນຳ(ບົດນຳ).

2) ພາສາສັນສະກິດເຂົ້າລາວ ຄັ້ງທີໜຶ່ງ (ພ.ສ 600 ຄ.ສ 57).

   2.1 ຮູບແບບ ຫລືວິທີການ.

   2.2 ຄວາມເປັນໄປ ແລະຜົນກະທົບ.

3) ພາສາສັນສະກິດເຂົ້າລາວ ຄັ້ງທີສອງ (ສະຕະວັດທີ 14) .

   3.1 ຮູບແບບ ຫລືວິທີການ.

   3.2 ຄວາມເປັນໄປ ແລະຜົນກະທົບ.

4) ພາສາປາລີເຂົ້າລາວ(ສະຕະວັດທີ 15).

   4.1 ຮູບແບບ ຫລືວິທີການ.

   4.2 ຄວາມເປັນໄປ ແລະຜົນກະທົບ.

5) ພາສາປາລີ ຍຶດທີ່ຕັ້ງຢ່າງແໜ້ນໜາຖາວອນໃນພາສາລາວ(ສະຕະວັດທີ 16).

   4.1 ຮູບແບບ ຫລືວິທີການ.

   4.2 ຄວາມເປັນໄປ ແລະຜົນກະທົບ.

6) ອິດທິພົນ ແລະຜົນສະທ້ອນ.

   6.1 ຮູບແບບຂອງຕົວອັກສອນ.

   6.2 ສັບພາສາ.

   6.3 ການປະດິດສັບໃໝ່ໃນປັດຈຸບັນ.

7) ສະຫລຸບ: ໂຄງຮ່າງນີ້ອາດຈະຂຽນກ່ອນ ຫລືຫລັງການຮວບຮວມ ແລະເກັບກຳຂໍ້ມູນກໍໄດ້, ຖ້າຂຽນກ່ອນຈະເປັນສ່ວນໜຶ່ງ ທີ່ຊ່ວຍຜູ້ຂຽນໃນຂະນະເກັບກຳຂໍ້ມູນ. ສະເພາະໂຄງຮ່າງທີ່ຂຽນຕາມຫລັງການເກັບກຳຂໍ້ມູນນັ້ນ ກໍຕ້ອງໄດ້ຂຽນເນື້ອໃນ ເພາະວ່າມັນເປັນທິດໃນການຂຽນໃຫ້ມີລຳດັບສຳພັນກັນ.

### 4. ການຂຽນເນື້ອໃນ

ເນື້ອໃນຂອງການລາຍງານ ໄດ້ມາຈາກການຄົ້ນຄວ້າເກັບກຳຂໍ້ມູນຈາກແຫລ່ງຕ່າງໆເຊັ່ນ ການອ່ານ, ການຟັງ, ການສັງເກດ, ການສຳພາດ ເປັນຕົ້ນ. ເຊິ່ງໄດ້ບັນທຶກ ແລ້ວນຳເອົາການບັນທຶກເຫລົ່ານັ້ນມາຮຽບຮຽງຕາມລຳດັບທີ່ໄດ້ກຳນົດໄວ້ໃນໂຄງຮ່າງ. ການຂຽນບົດລາຍງານທີ່ດີ ບໍ່ແມ່ນການຄັດຕອນແລ້ວນຳມາຕັດຕໍ່, ແມ່ນການສັງຮວມບັນຫາ, ຂໍ້ຄິດ ທັງແມ່ນການນຳໃຊ້ສຳນວນ ແລະວາດຂອງຕົນເອງເພື່ອຮຽບຮຽງໃຫ້ເຂົ້າກັນ. ພ້ອມກັນນັ້ນກໍຕ້ອງໄດ້ອ້າງເຖິງບ່ອນມາຂອງຂໍ້ຄວາມສຳຄັນ ທີ່ຄັດມາຂຽນໄວ້ໃນບົດລາຍງານ ທັງນີ້ກໍເພື່ອຮັກສາລັກສະນະວິທະຍາສາດ ແລະຫລັກຖານທີ່ແທ້ຈິງ ທັງເປັນມາລະຍາດ

ຂອງຜູ້ຂຽນອີກດ້ວຍ.

**5. ການອ້າງອີງ**

ການອ້າງອີງ ຫມາຍເຖິງການບອກຜູ້ອ່ານໃຫ້ຮູ້ວ່າ ຂໍ້ຄວາມທີ່ຍົກມານັ້ນໄດ້ມາຈາກໃສ ເພື່ອຜູ້ອ່ານຈະໄດ້ຊອກອ່ານເພີ່ມ. ການອ້າງອີງມີ 2 ວິທີຄື ໃຊ້ຫມາຍເລກກຳກັບໃນເນື້ອເລື່ອງ ແລ້ວຂຽນລາຍການອ້າງອີງໄວ້ຕອນທ້າຍຂອງຫນ້າເຈ້ຍ ແລະການອ້າງອີງແບບແຊກຊ້ອນໄປກັບເນື້ອໃນ.

(1) <u>ວິທີໃຊ້ເລກກຳກັບຢູ່ເນື້ອເລື່ອງ</u> ແລ້ວຂຽນລາຍການອ້າງອີງໄວ້ຕອນທ້າຍຂອງຫນ້າເຈ້ຍ. ບັນຫາສຳຄັນຂອງວິທີນີ້ແມ່ນຕົວເລກກຳກັບທີ່ຢູ່ໃນເນື້ອໃນ ແລະຢູ່ໃນຕອນທ້າຍຂອງຫນ້າເຈ້ຍຕ້ອງກົງກັນ. ຫາກວ່າເລື່ອງນັ້ນມີການອ້າງອີງເຖິງຫລາຍເທື່ອ ແລະຢູ່ຫນ້ານັ້ນກໍມີແຕ່ເລື່ອງດຽວນັ້ນ ກໍຄວນເວົ້າຊື່ຂອງ ມັນແຕ່ເທື່ອທຳອິດ ສ່ວນເທື່ອຕໍ່ໆໄປບອກພຽງແຕ່ວ່າ "ເລື່ອງດຽວກັນ ຫນ້າ..." ກໍພໍ, ເບິ່ງຕົວຢ່າງລຸ່ມນີ້:

> ... ອັກສອນສັນສະກິດ ຫລືອັກສອນເທວະນະຄະລີ ທີ່ໃຊ້ໃນປະເທດອິນເດຍທາງພາກເຫນືອ ນອກຈາກໄດ້ເປັນຕົ້ນເຄົ້າຂອງຫນັງສືລາວດັ່ງໄດ້ກ່າວມາໃນຂໍ້ ១. ແລ້ວນັ້ນ, ຍັງເປັນກົກເຄົ້າເຫງົ້າມູນຂອງຕົວອັກສອນຂອມ ແລະອັກສອນຂະເຫມນໃນເວລາຕໍ່ມາອີກດ້ວຍ (1).
>
> ... ເນື່ອງຈາກວ່າ ການສຶກສາທາງສາສະຫນາແຜ່ຫລາຍ ແລະດຶງດູດຈິດໃຈຂອງປະຊາຊົນພົນລະເມືອງໄດ້ຫລາຍກວ່າ ຕົວອັກສອນທຳຈຶ່ງແຜ່ຫລາຍ (2).
>
> ---
>
> (1) ສີລາ ວິລະວົງ 2516 [1973] ປະຫວັດຫນັງສືລາວ ປາກປາສັກການພິມ ພິມຄັ້ງທີ, ຫນ້າທີ 10
>
> (2) ເລື່ອງດຽວກັນ ຫນ້າ 18

2)

(2) ວິທີອ້າງອີງແບບແຊກຊ້ອນໄປກັບເນື້ອໃນ

ວິທີອ້າງອີງແບບນີ້ ໄດ້ຮັບຄວາມນິຍົມຫລາຍກວ່າແບບທຳອິດ ເພາະມັນສະດວກໃນການຂຽນແລະຈັດພິມ. ມັນເປັນການອ້າງອີງທີ່ມີຄວາມຕ້ອງການ ໃນຂະນະທີ່ຂຽນເນື້ອໃນ. ການອ້າງອີງແບບນີ້ມີ 2 ວິທີຄື ລະບົບນາມປີ ແລະລະບົບຫມາຍເລກ.

**(2.1) ລະບົບນາມປີ:** ແມ່ນອ້າງອີງຊື່ຜູ້ແຕ່ງ, ປີພິມ ແລະຫນ້າຂອງເອກະສານ ໂດຍຂຽນໄວ້ໃນວົງເລັບ; ຫາກໄດ້ຂຽນຊື່ຜູ້ແຕ່ງໄວ້ໃນຂໍ້ຄວາມແລ້ວ ກໍຂຽນແຕ່ປີພິມເທົ່ານັ້ນກໍໄດ້.

ຕົວຢ່າງ

> ... ແບບອັກຂະຫລະວິທີ ທີ່ຫໍສະຫມຸດພຸດທະບັນດິດສະພາຈັນທະບູລີແຕ່ງຂຶ້ນນັ້ນ ຈຸດປະສົງທີ່ສຳຄັນ ແມ່ນປະສົງຈະໃຫ້ໃຊ້ຕົວອັກສອນລາວ ຂຽນຄຳປາລີ-ສັນສະກິດ ກໍໄດ້ (ສີລາ ວິລະວົງ, 2516 [1973], ຫນ້າ...)

(2.2) **ລະບົບໝາຍເລກ**: ແມ່ນວິທີອ້າງເລກໝາຍ ຕາມລຳດັບເອກະສານທີ່ອ້າງອີງ ພ້ອມກັບເລກໜ້າຂອງມັນ ໂດຍຂຽນໄວ້ໃນວົງເລັບເຊັ່ນດຽວກັນ.

ຕົວຢ່າງ

> ... ໃນລາຊະອະນາຈັກລາວທຸກວັນນີ້ ໄດ້ອາໄສແບບຮຽນທີ່ເປັນຕົວອັກສອນໄທ ແລະພາສາໄທເກືອບທັງໝົດ. ດັ່ງນັ້ນ, ຄວາມຮູ້ ແລະພາສາລາວຂອງບັນດານັກສຶກສາທາງພຸດທະສາສະໜາ ຈຶ່ງຫັນເຫເວວາດເຂົ້າຫາພາສາໄທ ຫລືເປັນຄວາມຮູ້ກະເທີນ (1:31) .
>
> ... ໃນຍຸດວັນນະກຳຂອງລາວພ້ອມທັງນັກຂຽນ, ນັກກະວີ ແລະໝໍລຳທີ່ດີເດັ່ນ ໄດ້ຖືກກວາດຕ້ອນໄປໄທ, ປະຊາຊົນລາວທີ່ຢູ່ໃນເຂດໄທຍຶດຄອງນັ້ນ ໄດ້ຖືກບັງຄັບໃຫ້ຮຽນພາສາໄທ(2:178).

## 6. ການໄຂເງື່ອນ ຫລືໝາຍໂນດ(Note)

ໂດຍທົ່ວໄປແລ້ວ, ການຂຽນໄຂເງື່ອນ ຫລືໝາຍເຫດມີ 2 ວິທີຄື ວິທີໜຶ່ງແມ່ນໄຂເງື່ອນຢູ່ກ້ອງໜ້າ ແລະອີກວິທີໜຶ່ງແມ່ນໄຂເງື່ອນທ້າຍເຫລັ້ມ. ວິທີທີໜຶ່ງໄດ້ຮັບຄວາມນິຍົມກວ່າວິທີທີສອງ. ອັນສຳຄັນແມ່ນການໝາຍເງື່ອນກັບການໄຂເງື່ອນໃຫ້ມັນກົງກັນ. ການໝາຍເງື່ອນສຳລັບໄຂເງື່ອນກ້ອງໜ້າອາດຈະໃຊ້ກາດອກຈັນ, ເຄື່ອງໝາຍໃດໜຶ່ງ ຫລືຕົວເລກຕາມລຳດັບໃນໜ້າ; ສ່ວນວ່າໝາຍເງື່ອນສຳລັບໄຂເງື່ອນທ້າຍເຫລັ້ມນັ້ນ ຈະໃສ່ເລກລຳດັບເປັນຫລັກ.

ຖ້າເວົ້າເຖິງຊະນິດຂອງໄຂເງື່ອນ, ໂດຍທົ່ວໄປກໍມີແຕ່ 3 ຊະນິດຄື ໄຂເງື່ອນອ້າງອີງ, ໄຂເງື່ອນຂະຫຍາຍຄວາມ ແລະໄຂເງື່ອນເຊື່ອມຕໍ່. ໄຂເງື່ອນອ້າງອີງໃນຂໍ້ 5, ຂະຫຍາຍຄວາມມີຂຶ້ນ ເມື່ອຜູ້ຂຽນຕ້ອງການອະທິບາຍຫລືຊີ້ແຈງບັນຫານັ້ນເພີ່ມຕື່ມ; ໄຂເງື່ອນເຊື່ອມຕໍ່ເປັນການຊີ້ບອກໃຫ້ຜູ້ອ່ານ ເບິ່ງສິ່ງທີ່ກ່ຽວພັນກັບເລື່ອງນັ້ນໆໃນໜ້າອື່ນໆ ເຊິ່ງບາງເທື່ອກໍແມ່ນເອກະສານອ້າງອີງ.

**ຕົວຢ່າງ ໄຂເງື່ອນຂະຫຍາຍຄວາມ:**

> ... ເບິ່ງດ້ານສັງຄົມແລ້ວກໍພົບວ່າ ຊາວຊົນນະບົດ ຢູ່ໃນບ້ານທັງສາມປະເພດນັ້ນ(1) ລ້ວນແຕ່ເຄື່ອນໄຫວການຜະລິດ ແລະວັດທະນະທຳແບບດຽວກັນ.
>
> ---
>
> (1) ບ້ານ ສາມປະເພດຄື ບ້ານນາສົມໂຮງ, ບ້ານ ນາໜອງແຄນ ແລະບ້ານ ຫາດຊາຍຄູນ.

**ຕົວຢ່າງ ໄຂເງື່ອນເຊື່ອມຕໍ່:**

> ... ໂດຍທົ່ວໄປແລ້ວ, ໄຂເງື່ອນມີສາມປະເພດຄື ໄຂເງື່ອນອ້າງອີງ(1) ໄຂເງື່ອນຂະຫຍາຍຄວາມ ແລະໄຂເງື່ອນເຊື່ອມຕໍ່.
>
> ---
>
> (1) ເບິ່ງຂໍ້ 5. ຂອງເອກະສານສະບັບນີ້ ໜ້າ 68 ຕື່ມອີກ.

24/7 ຕາມຈຳໝາຍ

## 7. ການຂຽນບັນນານຸກົມ ຫລືລາຍການເອກະສານອ້າງອີງ

ໂດຍທົ່ວໄປແລ້ວ, ການຂຽນເອກະສານອ້າງອີງ ມີສ່ວນກ່ຽວຂ້ອງກັບພາສາທີ່ພິມໃນເອກະສານນັ້ນໆ. ຫມາຍຄວາມວ່າ ເບື້ອງຕົ້ນ, ຜູ້ຂຽນຄວນໄດ້ຈຳແນກກ່ອນວ່າ ເອກະສານທີ່ໃຊ້ພິມເປັນພາສາໃດແດ່ ແລ້ວກໍຂຽນເອກະສານຕາມກຸ່ມພາສາເຊັ່ນ ພາສາລາວ, ພາສາຫວຽດ, ພາສາຝຣັ່ງ, ພາສາອັງກິດ... ພິເສດສຳລັບເອກະສານທີ່ພິມເປັນພາສາຝຣັ່ງ, ອັງກິດ ແລະພາສາອື່ນໆໃນຊີກໂລກຕາເວັນຕົກ ກໍອາດຈະເອົາເປັນກຸ່ມດຽວກັນໄດ້. ອັນສຳຄັນແມ່ນການຈັດລຳດັບ ແລະຄວນໃຫ້ເປັນໄປຕາມສາກົນນິຍົມ ຄືຢຶດຕາມລຳດັບຊື່ຜູ້ແຕ່ງ.

ວິທີຂຽນບັນນານຸກົມຈະມີຄວາມແຕກຕ່າງກັນໄປ ຕາມເອກະສານທີ່ນຳມາອ້າງອີງເຊັ່ນ ປຶ້ມ, ບົດຄວາມໃນປຶ້ມ, ວາລະສານ, ຫນັງສືພິມ, ວິທະຍານິພົນ, ເອກະສານອັດສຳເນົາ ແລະການສຳພາດເປັນຕົ້ນ. ລາຍການອ້າງອີງປະກອບດ້ວຍລາຍການຍ່ອຍຕ່າງໆ ຕາມລຳດັບທີ່ກຳນົດ, ຫາກລາຍການໃດບໍ່ປາກົດໃນເອກະສານ ກໍຄວນຂຽນຊື່ລາຍການນັ້ນໄວ້ ແລະຕາມຫລັງຂໍ້ຄວາມໃນວົງເລັບວ່າ ບໍ່ປາກົດເຊັ່ນ ສຳນັກພິມ, ສະຖານທີ່(ບໍ່ປາກົດ); ແຕ່ບາງເທື່ອເພິ່ນກໍຂ້າມໄປຂຽນລາຍການຕໍ່ໄປເລີຍໂລດ.

✍ **ປຶ້ມທີ່ມີເລື່ອງດຽວ ແລະຜູ້ຂຽນຜູ້ດຽວ:** ຜູ້ແຕ່ງ, ປີພິມ, *ຊື່ເລື່ອງ*, ລຳດັບເຫລັ້ມ(ຖ້າມີ), ຄັ້ງທີ່ພິມ(ຖ້າມີ), ສະຖານທີ່ພິມ(ຖ້າມີ) ແລະສຳນັກພິມ/ໂຮງພິມ.

ຕົວຢ່າງ

> ສ. ບຸບຜານຸວົງ 1980, *ສອງເອື້ອຍນ້ອງ* ເຫລັ້ມສອງ, ພິມຄັ້ງທີສອງ, ຄັ້ງທີສາມ, ວຽງຈັນ, ໂຮງພິມແຫ່ງຊາດ.
>
> ສີລາ ວິລະວົງ 1938a. *ປາລີໄວຍາກອນ: ອັກຂະຫລະວິທີ ພາກຫນຶ່ງ: ສະມັນຍາພິທານ ແລະສັນທິ,* ທຳສະຫມຸດວຽງຈັນ, ໂຮງພິມຕິລະນະສານ, ບາງກອກ, ໄທ.
>
> ທອງທວາ ຈັນທະໄພບູນ 1972. *ພາສາລາວ ມັດທະຍົມປີທີ 4,* ກົມມັດທະຍົມສຶກສາ ກະຊວງສຶກສາທິການ ກິລາ ແລະທຳມະການ.
>
> ພູມີ ວົງວິຈິດ 1967, *ໄວຍາກອນລາວ,* ພິມເທື່ອທີຫນຶ່ງ, ພະແນກສຶກສາສູນກາງ

✍ **ປຶ້ມທີ່ມີເລື່ອງດຽວ ແລະຜູ້ຂຽນສອງຄົນ:** ຜູ້ແຕ່ງ, ປີພິມ, *ຊື່ເລື່ອງ*, ລຳດັບເຫລັ້ມ(ຖ້າມີ), ຄັ້ງທີ່ພິມ(ຖ້າມີ), ສະຖານທີ່ພິມ(ຖ້າມີ) ແລະສຳນັກພິມ/ໂຮງພິມ.

ຕົວຢ່າງ

> ຄຳສອນ ທອງມີໄຊ ແລະກົງຈັນ ພະເມືອງ 2001, *ທິດສະດີວັນນະຄະດີ,* ພິມຄັ້ງທີຫນຶ່ງ, ພາກວິຊາພາສາລາວ-ວັນນະຄະດີ.
>
> ບົວລີ ປະພາພັນ ແລະບຸນຍໍ 1998. *ພາສາລາວ 3 ສຳລັບໂຮງຮຽນສ້າງຄູ ລະບົບ 11+3 ປີທີ II,* ສູນພັດທະນາຄູ ກະຊວງສຶກສາ.

ຕົວຢ່າງ

Bounthavy Sisomphanthong and Christian Tailard 2000. Atlas of Laos: *Spatial Structrur of the Economic and Social Development of Laos people's Democratic Republic*. Copenhang/Chiang Mai: NIAS/Silworm Books.

Mayoury and Pheuiphan Ngaosivanth 1994. Kids and Kin Politics: *The relationship between Laos and Thailaand*. Manila, the journal of Contemporary Asisa Publisher.

Simms, Peter and Sanda 2001. *The Kingdom of laos: Six Hundred years of Hostory*. Curzon Press: Richmond, Surrey.

✍ **ປຶ້ມທີ່ມີເລື່ອງດຽວ ແລະຜູ້ຂຽນຫລາຍກວ່າສອງຄົນ:** ຜູ້ແຕ່ງ, ປີພິມ, *ຊື່ເລື່ອງ*, ລຳດັບເຫລັ້ມ(ຖ້າມີ), ຄັ້ງທີ່ພິມ(ຖ້າມີ), ສະຖານທີ່ພິມ(ຖ້າມີ) ແລະສຳນັກພິມ/ໂຮງພິມ.

ຕົວຢ່າງ

ຄຳມະນີ ສຸລິເດດ ແລະຄະນະ 2002, *ສຶກສາປະຊາກອນ*, ສູນສຶກສາປະຊາກອນ, ມະຫາວິທະຍາໄລແຫ່ງຊາດ.

ບົວລີ ປະພາພັນ ແລະຄະນະ 2002, *ໄວຍາກອນລາວປັດຈຸບັນ ພາກທີ III ວາກະຍະສຳພັນ*, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ.

ອ່ານແກ້ວ ນວນນະວົງ ແລະຄະນະ 2000, *ໄວຍາກອນລາວປັດຈຸບັນ ພາກທີ I ອັກຂະຫລະວິທີ*, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ.

✍ **ປຶ້ມທີ່ມີຫລາຍເລື່ອງ ແລະຜູ້ຂຽນຫລາຍກວ່າສອງຄົນ:** ຜູ້ແຕ່ງ, ປີພິມ, *ຊື່ເລື່ອງ*, ລຳດັບເຫລັ້ມ(ຖ້າມີ), ຄັ້ງທີ່ພິມ(ຖ້າມີ), ສະຖານທີ່ພິມ(ຖ້າມີ) ແລະສຳນັກພິມ/ໂຮມພິມ ແລະຫນ້າ.

ຕົວຢ່າງ

ທອງເພັດ ກິ່ງສະດາ 1990, *"ບັນຫາຕົວ ຣ ໃນພາສາລາວ"* ກອງປະຊຸມໂຕະມົນ ວິທະຍາສາດກ່ຽວກັບພາສາລາວ ບັນນາທິການໂດຍ: ທອງເພັດ ກິ່ງສະດາ ແລະຄະນະ, ສະຖາບັນຄົ້ນຄວ້າວັດທະນະທຳ, ຫນ້າ 103-115.

Coede, George 1959. " An Introdrution to the History of Laos" In: Rene de Berval(ed), *Kingdom of Laos.* A. Bontemps Co., Ltd., Limges, pp 107-122.

Wayy, David K. 1976. "Chronicle Traditions in Thai Historiogaphy" In: C.D. Owan and O.W Wolters(eds.), *Southeast Asian Hostory and Historiogaphy:* Essays Presented to D.G.E. Hall. London: Cornell University Press, pp. 107-122.

centipede.

ກາກິນກ້ວຍ ກັດ ກິນ ກົ້ນ ກ່ອນ

ເກາະ ກາບ ກວັຍ ກອງ ກົ້ນ ກ່ວຍ ກິບ

ຕັກແຕນ ເຕັ້ນ ຕ່າ ຕຳ ຕັຍ ແຕກ ຕົກ ຕາຍ

ຂີ້ເຂັ້ຍ ຫົບ ຫວັຍ ຫວັຍ ຫາ ຂີ້ ເຫັບ

20 ລົ້ ໑໐໐

30

2